# ຈຸດປະກາຍ

໑ ISSN 1813-3630

ພິມອອກເທື່ອທີ 7



## ທັດສະນະ
## ຕໍ່ການພັດທະນາໃນ ສ.ປ.ປ.ລາວ

ການສຶກສາຂອງເດັກຊົນເຜົ່າ, ສາສະໜາພຸດ ແລະ ການ ພັດທະນາ,
ການສ້າງເຂື່ອນ ແລະ ແນວຄິດຂອງແມ່ຍິງ,
ແລະ ທັດສະນະຄະຕິຂອງປະຊາຊົນທ້ອງຖິ່ນຕໍ່ການທ່ອງທ່ຽວ

# ຈຸດປະກາຍ

## ພິມຄັ້ງທີ 7

ຈົດໝາຍ 5

ການຍົກລະດັບ ການສຶກສາ ໃຫ້ແກ່ເດັກຊົນເຜົ່າ ໃນເຂດ ນົກສຸກ-ທ່າຟ້າ 6
*ໂດຍ: ຈິດຕະລັດ ແສງອຳພອນ*

ການນຳໃຊ້ທຳມະເຂົ້າໃນໃນສັງຄົມຮ່ວມສະໄໝ: ສາສະໜາພຸດ
ທີ່ເຊື່ອມເຂົ້າກັບສັງຄົມ ກັບ ວຽກງານການພັດທະນາໃນ ສປປ ລາວ 22
*ໂດຍ: Patrice Ladwig*

ການສ້າງເຂື່ອນໃນ ສປປ ລາວ:  ສຽງທີ່ສະທ້ອນຄວາມຄິດເຫັນ ຂອງແມ່ຍິງ 38
*ໂດຍ: ປ່າພື້ວລີ ລີຈື່ຟູງ*

ແນວຄວາມຄິດຂອງປະຊາຊົນຜູ້ຢູ່ອາໄສ ຕໍ່ກັບຜົນກະທົບຂອງການ ພັດທະນາ
ແຫລ່ງທ່ອງທ່ຽວ 50
*ໂດຍ: ແສງເດືອນ ໄວຍະກອນ*

## ການແລກປ່ຽນຂໍ້ມູນເພື່ອສົ່ງເສີມການພັດທະນາ

ໃນເດືອນມີນາປີ 2003, ທີມງານອົງການສະຫະປະຊາຊາດປະຈຳຢູ່ ສປປ ລາວໄດ້ພົບປະເພື່ອປຶກສາຫາລື ເຖິງວິທີການເພື່ອສົ່ງເສີມການໂອ້ລົມສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານ ເຊິ່ງກັນແລະ ກັນ ໃນການເຮັດວຽກ ເພື່ອການພັດທະນາຂອງປະເທດ. ທີມງານດັ່ງກ່າວຈຶ່ງໄດ້ຕົກລົງສ້າງໜັງສືວາລະສານເພື່ອເປັນເວທີຂອງການໂອ້ລົມສົນທະນາ ແລະ ປຶກສາຫາລືໃນດ້ານວຽກງານເລີ່ມເຮັດບົດບັນທຶກ ທີ່ຈະສະໜອງກອງປະຊຸມ ໂຕ້ວາທີວ່າດ້ວຍວຽກງານການພັດທະນາ, ແລະຫຼັງຈາກນັ້ນໄດ້ສ້າງຄະນະກຳມະການຮຽບຮຽງ ເພື່ອຊີ້ນຳນຳພາ. ຄະນະກຳມະການຮຽບຮຽງວາລະສານ ຈຸດປະກາຍ ເຊື່ອໝັ້ນ ຢ່າງຍິ່ງວ່າ ຈຸດປະສົງຂອງການຫຼຸດຜ່ອນຄວາມທຸກຍາກ ແລະ ການສົ່ງເສີມການພັດທະນາໃນສ.ປ.ປ.ລາວ ຈະດຳເນີນໄປໄດ້ດີກວ່າເກົ່າ ຖ້າຫາກມີການແລກປ່ຽນຂໍ້ມູນຂ່າວສານແລະ ແນວຄວາມຄິດທີ່ສ້າງສັນ. ບົດເລື່ອງທີ່ສະເໜີໃນວາລະສານດັ່ງກ່າວນີ້ ຈະເປັນສິ່ງທ້າທາຍແນວຄວາມຄິດຂອງພວກເຮົາໃນປັດຈຸບັນ ແລະ / ຫຼື ມີຂໍ້ມູນຂ່າວສານ ຍັງບໍ່ທັນໄດ້ຮັບການພິມເຜີຍແຜ່ມາກ່ອນ. ພວກເຮົາຫວັງຢ່າງຍິ່ງວ່າວາລະສານ ຈຸດປະກາຍຈະເປັນສິ່ງກະຕຸ້ນຊຸກຍູ້ ໂອ້ລົມສົນທະນາກ່ຽວກັບວຽກງານ ການພັດທະນາໄດ້ຢ່າງຫ້າວຫັນ ແລະ ປະກອບສ່ວນເຮັດໃຫ້ເກີດມີຄວາມເຂົ້າໃຈ ທີ່ດີຂຶ້ນກ່ຽວກັບສິ່ງທ້າທາຍ ໃນການພັດທະນາຢູ່ໃນ ສປປ ລາວ.

# ຄໍານໍາ

ມັນອາດເປັນການຢັ້ງຢືນ ເຖິງການການຂະຫຍາຍຕົວຂອງການແຈກຢາຍວາລະສານ ຈຸດປະກາຍ ແລະ ຄວາມສຳເລັດຂອງລາງວັນຄົ້ນຄ້ວາ ດ້ານການພັດທະນາຂອງສະຫະປະຊາຊາດ ໃນປີທີ່ຜ່ານມາ ທີ່ສາມບົດຊຽນໃນວາລະສານສະບັບນີ້ ແມ່ນຜົນງານຂອງຄົນລາວ. ການປະກອບສ່ວນເຫລົ່ານີ້ ແລະ ຄຸນະພາບທີ່ເພີ່ມຂຶ້ນຂອງການສົ່ງບົດຊຽນເຂົ້າຮ່ວມ ແມ່ນ ເປັນຫລັກຖານທີ່ສະແດງ ໃຫ້ເຫັນເຖິງການ ສົນທະນາ ແລະ ການແລກປ່ຽນແນວຄິດ ທີ່ເພີ່ມຂຶ້ນ ກ່ຽວກັບ ຫົວຂໍ້ການພັດທະນາ ໃນ ສປປ ລາວ: ວາລະສານນີ້ ດຳລົງຄົງຕົວຢູ່ ກໍ່ເພື່ອສິ່ງດັ່ງກ່າວນັ້ນເອງ.

ໃນວາລະສານສະບັບທີ 7 ນີ້ ເປັນທີ່ສັງເກດໄດ້ວ່າ ຜູ້ປະກອບສ່ວນສອງທ່ານແມ່ນຜູ້ຍິງ. ສິ່ງນັ້ນໄດ້ສ້າງຄວາມ ຍິນດີ ແລະ ຄວາມພຶງພໍໃຈ ເປັນຢ່າງຍິ່ງ ໃຫ້ກັບ ທີມງານສະຫະປະຊາຊາດໃນ ສປປ ລາວ, ຜູ້ຊຶ່ງມີຄວາມພຽນ ພະຍາຍາມ ແລະ ກະຕືລືລົ້ນ ໃນການ ຊຸກຍູ້ສົ່ງເສີມ ໃຫ້ຜູ້ຍິງອອກຄຳຄິດຄຳເຫັນ ໃນສັງຄົມວົງກ້ວາງ. ທ່ານ ນາງ ຈິດຕະລັດ ແສງອຳພອນ ໄດ້ນຳສະເໜີ ບົດວິໄຈກ່ຽວກັບການສຶກສາ ໃນຫມູ່ບ້ານຊົນເຜົ່າ ໃນແຂວງ ບໍ່ແກ້ວ, ແລະ ກໍ່ໄດ້ສະເໜີໃຫ້ເຫັນວ່າ ມີຫລາຍໆວຽກງານທີ່ຈະຕ້ອງໄດ້ດຳເນີນ ແລະ ຕ້ອງໄດ້ປະຕິບັດ ເພື່ອ ໃຫ້ເດັກນ້ອຍ ໃນເຂດຊົນນະບົດທຸກຄົນ, ໂດຍສະເພາະແມ່ນເດັກຍິງ, ມີໂອກາດທີ່ເປັນທຳ ໃນການໄດ້ຮັບການ ສຶກສາທີ່ມີ ຄຸນະພາບ. ທ່ານ ນາງ ປ່າຟົ້ວລີ ລີຈື່ຝູງ, ຜູ້ທີ່ເປັນແບບຢ່າງໃຫ້ແກ່ເດັກນ້ອຍຊົນເຜົ່າ, ໄດ້ຄົ້ນຄ້ວາ ເຖິງຜົນກະທົບ ຂອງໂຄງການພະລັງງານໄຟຟ້ານ້ຳຕົກຕ່າງໆ ທີ່ມີຕໍ່ແມ່ຍິງ ໃນຫມູ່ບ້ານທີ່ໄດ້ຮັບ ຜົນກະທົບຈາກເຂື່ອນແລ້ວ. ໃນຂະນະທີ່ກຳລັງມີຫລາຍໆໂຄງການພະລັງງານໄຟຟ້າ ນ້ຳຕົກ ພວມຢູ່ໃນແຜນ ພັດທະນາ, ຂໍ້ສະຫລຸບໃນບົດ ຄວາມດັ່ງກ່າວ ແມ່ນມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງສຳຫລັບພາກສ່ວນ ທີ່ກຳລັງວາງແຜນການສ້າງ ເຂື່ອນໃຫມ່.

ບົດບາດຂອງສາສະຫນາພຸດ ໃນການພັດທະນາ ແມ່ນຫົວຂໍ້ ຂອງບົດຊຽນທີ່ຫນ້າສົນໃຈ ຂອງທ່ານ Patrice Ladwig. ດັ່ງທີ່ບົດຊຽນໄດ້ສະແດງໃຫ້ເຫັນ, ປະສົບການຂອງ ອົງການ Unicef ແລະ ພາກສ່ວນອື່ນໆ ແນະນຳວ່າ ພະສົງ ມີອົງປະກອບດ້ານບວກຫລາຍໆຢ່າງ ໃນການປະກອບສ່ວນໃສ່ ຫລາຍໆໂຄງການ ທີ່ໄດ້ດຳເນີນໄປໃນປະເທດນີ້. ວັດທະນະທຳ ສາສະຫນາພຸດ ແມ່ນເປັນສິ່ງທີ່ດຶງດູດຄວາມສົນໃຈ ຂອງນັກ ທ່ອງທ່ຽວ ທີ່ມີຕໍ່ປະເທດລາວ, ແລະ ດັ່ງທີ່ ທ່ານ ແສງເດືອນ ໄວຍະກອນໄດ້ກ່າວໃນບົດຊຽນສຸດທ້າຍ ໃນວາລະສານ ສະບັບນີ້, ມັນສຳຄັນຫລາຍ ທີ່ວັດທະນະທຳ ຂອງທ້ອງຖິ່ນ ຈະໄດ້ຮັບການນັບຖືຈາກ ອຸດສາຫະກຳ ການທ່ອງທ່ຽວ ທີ່ກຳລັງເຕີບໃຫຍ່ຂະຫຍາຍຕົວ. ປະຊາຊົນທີ່ອາໄສຢູ່ ແຂວງຫລວງພະບາງ ມີຄວາມກັງວົນແທ້ໆຕໍ່ກັບ ບັນຫາທີ່ອາດຈະເກີດຂຶ້ນຍ້ອນການຫລັ່ງໄຫລເຂົ້າມາ ຂອງນັກທ່ອງທ່ຽວຈຳນວນ ຫລາຍ, ແລະ ບົດຄົ້ນຄ້ວາຂອງ ເພິ່ນທີ່ໄດ້ລວບລວມເອົາ ຄວາມເຫັນຂອງປະຊາຊົນ ແຂວງຫລວງພະບາງຈຳ ນວນຫນຶ່ງ ຄວນຖືກຖືເປັນ ວຽກງານ ທີ່ ລ້ຳຫນ້າ ແລະ ສຳຄັນ.

ວາລະສານ ຈຸດປະກາຍ ສະບັບນີ້ ໄດ້ປະກອບມີ ພາກສ່ວນໃຫມ່ຄື: ການແປຄຳສັບວິຊາການ ແລະ ຄຳສັບພາສາ ອັງກິດ ໃນບົດຊຽນ ທີ່ບໍ່ຄ່ອຍໄດ້ຖືກນຳໃຊ້ໃນທົ່ວໄປ. ພວກເຮົາຫວັງວ່າ ແນວຄິດລິເລີ່ມດັ່ງກ່າວ ນີ້ ຈະເຮັດ ໃຫ້ວາລະສານນີ້ເປັນປະໂຫຍດຍິ່ງຂຶ້ນຕໍ່ນັກຮຽນ ແລະ ຜູ້ທີ່ໃຊ້ພາສາອັງກິດເປັນພາສາທີສອງ, ແລະ ມັນຈະ ກະຕຸກຊຸກຍູ້ໃຫ້ມີ ຜູ້ອ່ານ, ແລະ ອາດຈະແມ່ນຜູ້ຊຽນ, ເຂົ້າຮ່ວມໃນການຕັ້ງຂອດບັນຫາແລະ ສະແດງ ຄວາມຄິດຄວາມເຫັນກ່ຽວກັບການພັດທະນາ.

ໂອລິເວຍ ແຢມບີ

ຮັກສາການຜູ້ປະສານງານອົງການສະຫະປະຊາຊາດປະຈຳ ສປປລາວ

# ຈົດໝາຍ

## ຕ້ອງການຂໍ້ມູນກ່ຽວກັບ ບົດບາດຍິງ-ຊາຍ ແລະ ປ່າໄມ້

**ຮຽນເພື່ອນຮ່ວມງານທຸກຄົນ,**

ເນື່ອງຈາກພວກຂ້າພະເຈົ້າໄດ້ຮັບຮູ້ເຖິງການຂະຫຍາຍຕົວທີ່ຕໍ່ເນື່ອງຂອງການອ່ານ ວາລະສານ ຈຸດປະກາຍ ໃນບັນດານັກພັດທະນາໃນ ສປປ ລາວ, ພວກຂ້າພະເຈົ້າ ຈຶ່ງຮຽກຮ້ອງຂໍຄວາມຊ່ວຍເຫລືອ ໃນການຊອກຫາ ຄົນ ຫລື ອົງການຈັດຕັ້ງຕ່າງໆ ໃນການເຮັດການສຶກສາຄົ້ນຄ້ວາ ກ່ຽວກັບ ບົດບາດຍິງ-ຊາຍ ແລະ ປ່າໄມ້ ໃນ ອາຊີ.

ພວກຂ້າພະເຈົ້າສົນໃຈເປັນພິເສດໃນຫົວຂໍ້ ກ່ຽວກັບ ບົດບາດຍິງ-ຊາຍໃນທົ່ວທຸກຂະແໜງການພັດທະນາ ໃນເຂດ ຊົນນະບົດ ແລະ ບົດບາດວຽກງານ ໃນຂະແໜງການປ່າໄມ້, ແລະ ກໍ່ກຳລັງວາງແຜນທີ່ຈະ ລວບລວມ ແລະ ສ້າງຄວາມເຂັ້ມແຂງດ້ານຂໍ້ມູນ ຈາກ 8 ປະເທດ ອາຊີ ຜ່ານ ບົດຄົ້ນຄ້ວາ/ບົດວິໄຈ/ເອກະສານຕ່າງໆ ທີ່ເຄີຍມີມາ, ກໍລະນີສຶກສາ, ການປະຊຸມ ແລະ ການສຳມະນາທາງວິຊາການ ໃນເຂດພູມີພາກ.

ສະຫະພັນນາໆຊາດຂອງອົງການຄົ້ນຄ້ວາປ່າໄມ້ (IUFRO) ໄດ້ເຮັດການຄົ້ນຄ້ວາສຶກສາທີ່ຄ້າຍຄືກັນນີ້ແລ້ວ ໃນຫົວຂໍ້ ບົດບາດຍິງ-ຊາຍ ແລະ ປ່າໄມ້ ໃນ ເອີຣົບ ແລະ ອາເມລິກາເໜືອ. ຜົນການສຶກສາແມ່ນຖືກຕີພິມໃນ ເອກະສານທີ່ມີຊື່ວ່າ Time for Action: Changing the Gender Situation in Forestry ເຊິ່ງໄດ້ຮັບການ ສະໜັບສະໜູນດ້ານທຶນຮອນຈາກອົງການອາຫານ ແລະ ກະສິກຳ (FAO). ຜູ້ຂຽນ ທີ່ຖືກຄັດເລືອກໄດ້ ໄປນຳສະເໜີບົດຂຽນຂອງພວກເຂົາ ໃນກອງປະຊຸມ ແລະ ສຳມະນາສາກົນ ເຊິ່ງຈັດຂຶ້ນຢູ່ Umea, ປະເທດ ສະວີເດັນ, ໃນເດືອນ ມິຖຸນາ 2006.

ອົງການອາຫານ ແລະ ກະສິກຳ (FAO) ມີຄວາມສົນໃຈໃນການສະໜອງ ທຶນຮອນຈຳນວນປານກາງ ຈຳນວນໜຶ່ງ ສຳລັບການຄົ້ນຄ້ວາສຶກສາທີ່ຄ້າຍຄືກັນນີ້ ໃນ ອາຊີ ແລະ ອາຟຣິກາ. ໃນປະຈຸບັນ, ພວກຂ້າ ພະເຈົ້າກຳລັງພະຍາຍາມໃນການ ຊອກຫາພາກສ່ວນທີ່ມີຄວາມສົນໃຈໃນວຽກງານດັ່ງກ່າວ ແລະ ຂໍ້ມູນ ແລະ ການຄົ້ນຄ້ວາສຶກສາ ທີ່ມີໃນໄລຍະຜ່ານມາ. ພວກຂ້າພະເຈົ້າຍັງຍິນດີຕ້ອນຮັບ ອົງການຕ່າງໆ ທີ່ອາດຕ້ອງການ ໃຫ້ທຶນຮອນສຳຫລັບກິດຈະກຳຕ່າງໆທີ່ເຮັດຮ່ວມກັນນີ້.

ພວກຂ້າພະເຈົ້າຈະມີຄວາມຍິນດີເປັນຢ່າງຍິ່ງ ຖ້າໄດ້ຮັບການຕິດຕໍ່ຈາກຈາກພາກສ່ວນ ທີ່ຢາກຮ່ວມມືໃນ ວຽກງານນີ້. ກະລຸນາຕິດຕໍ່ພວກຂ້າພະເຈົ້າຜ່ານທາງ ອີເມວ: bmcalub@gmail.com ຫລື c.colfer@cgiar.org

Blesilda M. Calub
ມະຫາວິທະຍາໄລ ປະເທດຟີລິປິນສ໌, ເມືອງ Los Baños

Carol Colfer
ສູນຄົ້ນຄ້ວາປ່າໄມ້ສາກົນ

**ອົງການສະຫະປະຊາຊາດໃນ ສປປ ລາວ ໄດ້ໃຫ້ການສະໜັບສະໜູນ ການຜະລິດວາລະສານ *ຈຸດປະກາຍ ມຸມມອງໃນການພັດທະນາລາວ* ໂດຍມີເປົ້າໝາຍເພື່ອສົ່ງເສີມການສົນທະນາ ບັນຫາທັງໝົດ ທີ່ພົວພັນເຖິງການພັດທະນາພາຍໃນປະເທດ. ກອງບັນນາທິການເປັນຜູ້ກວດກາ ບົດຄືນເບິ່ງບົດຄວາມທີ່ສະເໜີໃນສະບັບນີ້. ຄຳຄິດເຫັນທີ່ສະແດງອອກ ໃນການພິມຄັ້ງນີ້ ລ້ວນແລ້ວແຕ່ເປັນຂອງນັກຂຽນເອງ ແລະ ບໍ່ຈຳເປັນຈະຖືວ່າເປັນຕົວແທນຂອງອົງການສະຫະ ປະຊາຊາດໃນ ສປປ ລາວ.**

# ການຍົກລະດັບ ການສຶກສາ ໃຫ້ແກ່ເດັກຊົນເຜົ່າ ໃນເຂດ ມຶກສຸກ-ທ່າຟ້າ

ໂດຍ: ຈິດຕະລັດ ແສງອຳພອນ

*ປະເທດລາວ ຍັງຄົງພົບກັບຄວາມຫຍຸ້ງຍາກ ໃນການຕອບສະໜອງດ້ານການສຶກສາ ຢູ່ໃນປະເທດ ໂດຍສະເພາະ ຕໍ່ບັນດາເດັກນ້ອຍຊົນເຜົ່າທີ່ຢູ່ໃນເຂດຊົນນະບົດ. ຄວາມທຸກຈົນ ແມ່ນອຸປະສັກອັນຕົ້ນຕໍ ທີ່ປິດກັ້ນໂອກາດທີ່ຈະໄດ້ຮັບການສຶກສາຂອງເດັກນ້ອຍເຫລົ່ານັ້ນ ເນື່ອງຈາກວ່າພໍ່ແມ່ຂອງພວກເຂົາ ຕ້ອງການອາໃສແຮງງານຂອງເດັກນ້ອຍ ເພື່ອຊ່ວຍໃນກິດຈະກຳຂອງຄອບຄົວ. ບົດຂຽນນີ້ ໄດ້ທຳການ ວິເຄາະທັດສະນະຄະຕິຂອງບັນດາ ຊົນເຜົ່າ ຕໍ່ການສຶກສາ ແລະ ຜົນກະທົບຂອງໂຄງການພັດທະນາ ທີ່ແນໃສ່ປັບປຸງລະດັບການສຶກສາ ໃຫ້ແກ່ເດັກນ້ອຍ ແລະ ຜູ້ໃຫຍ່ ບັນດາຊົນເຜົ່າ. ຈາກການສຳພາດ ສາມໝູ່ບ້ານຊົນເຜົ່າ ລະເມດ, ໄຕລື້, ແລະ ມົ້ງ, ໄດ້ພົບວ່າການປະຕິບັດຕາມຮີດຄອງປະເພນີບາງຢ່າງ ໄດ້ເປັນການ ສົ່ງເສີມໃຫ້ລູກຊາຍໄດ້ມີໂອກາດ ຮັບການສຶກສາຫລາຍກ່ວາລູກສາວ. ພວກເດັກນ້ອຍເອງ ກໍ່ມີຄວາມຮູ້ສຶກວ່າ ຄວາມຮູ້ ແລະ ທັກສະທີ່ໃຊ້ໃນການດຳລົງຊີວິດ ຂອງພວກເຂົານັ້ນ ແມ່ນບໍ່ໄດ້ຖືກ ສິດສອນໃນໂຮງຮຽນ ແຕ່ວ່າມັນໄດ້ຖືກສິດສອນ ໂດຍບັນດາ ຜູ້ເຖົ້າແກ່ ອາວຸໂສໃນໝູ່ບ້ານ: ຜູ້ທີ່ເປັນ ແບບຢ່າງໃນການນຳໃຊ້ ຄວາມຮູ້ທີ່ໄດ້ຮຽນມາຈາກ ໂຮງຮຽນ ແມ່ນຍັງຂາດເຂີນ.*

ໃນປີ 1996 ສະພາແຫ່ງຊາດລາວ ໄດ້ຮັບຮອງເອົາ 8 ແຜນຍຸດທະສາດ ໃນການພັດທະນາ ເສດຖະກິດ - ສັງຄົມ ຂອງປະເທດລາວ, ຊຶ່ງໃນນັ້ນ ລັດຖະບານລາວໄດ້ເລັງເຫັນວ່າການພັດທະນາຊົນນະບົດ ແລະ ການພັດທະນາຊັບພະຍາກອນມະນຸດ ແມ່ນສິ່ງທີ່ຄວນເອົາໃຈໃສ່ກ່ວາໝູ່. ການຍົກລະດັບການສຶກສາ ຍັງໄດ້ຖືກປະກາດໃຫ້ເປັນບັນຫາທີ່ສຳຄັນ ໃນການພັດທະນາຊັບພະຍາກອນມະນຸດ ເພື່ອສ້າງ ບຸກຄະລາກອນໃຫ້ແກ່ທຸກໆຂະແໜງການ. ເຖິງຢ່າງໃດກໍ່ຕາມ, ໃນຖານະທີ່ເປັນປະເທດທີ່ມີຫລາກຫລາຍ ຊົນເຜົ່າ, ພາສາ, ສາສະໜາ, ວັດຖະນະທຳ, ແລະ ລະບົບຄວາມເຊື່ອຖື, ປະເທດລາວຍັງຄົງ ສືບຕໍ່ ປະເຊີນໜ້າກັບບັນຫາຫຍຸ້ງຍາກ ໃນການສະໜອງການສຶກສາຂັ້ນພື້ນຖານ, ໂດຍສະເພາະຕໍ່ກັບບັນດາ ເດັກນ້ອຍຊົນເຜົ່າຕ່າງໆ ເຖິງແມ່ນວ່າ ມີຫລາຍໆໂຄງການພັດທະນາ ທີ່ໄດ້ສຸມໃສ່ ການຍົກລະດັບ ການສຶກສາໃຫ້ແກ່ເດັກນ້ອຍຊົນເຜົ່າຕ່າງໆກໍ່ຕາມ.

ບົດຄົ້ນຄ້ວາບົດນີ້ ໄດ້ທຳການວິເຄາະປັດໄຈທີ່ເປັນອຸປະສັກ ຕໍ່ບັນດາໂຄງການປັບປຸງການສຶກສາ. ການວິເຄາະໄດ້ຖືກດຳເນີນຢູ່ໃນ 12 ບ້ານ ໃນເຂດ ມຶກສຸກ-ທ່າຟ້າ, ແຂວງບໍ່ແກ້ວ, ໂດຍການສົມທຽບ ລະບົບການສຶກສາແບບພື້ນເມືອງຂອງເຜົ່າ ລະເມດ, ຂະມຸ, ມົ້ງ, ແລະ ໄຕລື້ ແລະ ປະເມີນຜົນບັນດາ ໂຄງການປັບປຸງການສຶກສາ ຊຶ່ງດຳເນີນການຢູ່ໃນເຂດດັ່ງກ່າວ ໂດຍລັດຖະບານຂອງທ້ອງຖິ່ນ ແລະ ອົງການຊ່ວຍເຫລືອທີ່ບໍ່ຂຶ້ນກັບລັດຖະບານ ຄື ອົງການ ຄອນເຊີນ ເວີລວາຍ (Concern Worldwide). ການຄົ້ນຄ້ວາດັ່ງກ່າວນີ້ປະກອບດ້ວຍ ການໄປເກັບກຳຂໍ້ມູນພາກສະໜາມຕົວຈິງ ຢູ່ໃນໝູ່ບ້ານຕ່າງໆ

ໃນສອງໄລຍະ ຄື ໃນເດືອນມີນາ ປີ 2004 ແລະ ໃນເດືອນກຸມພາ ປີ 2005. ຜູ້ຂຽນ ໄດ້ທຳການສຳພາດ ແບບເປັນກັນເອງ, ໂດຍການຖາມຄຳຖາມກໍ່ຂ້ອນຂ້າງເປີດກ້ວາງ ເພື່ອເປີດໂອກາດໃຫ້ມີການເຈາະຈີ້ມ ເຖິງລາຍລະອຽດຕ່າງໆ (semi-structured interview), ກັບກຸ່ມເດັກນ້ອຍໃນ 3 ໝູ່ບ້ານ ຄື: ບ້ານນ້ຳແຊວ (ເຜົ່າລະເມດ), ບ້ານດອນໃຈ (ເຜົ່າໄຕລື້), ແລະ ບ້ານຫ້ວຍທະ (ເຜົ່າມົ້ງ). ຜູ້ຂຽນ ຍັງໄດ້ສຳພາດ ສະມາຄົມພໍ່ແມ່ນັກຮຽນ, ຄະນະບ້ານ, ບັນດາຊາວບ້ານທັງຍິງ ແລະ ຊາຍ ຈຳນວນໜຶ່ງ, ພະນັກງານ ໂຄງການພັດທະນາ ຂອງອົງການຊ່ວຍເຫລືອທີ່ບໍ່ຂື້ນກັບລັດຖະບານ ແລະ ຈາກພະແນກສຶກສາ ເມືອງຫ້ວຍຊາຍ, ແລະ ຄະກຳມະການ ການພັດທະນາ ຊົນນະບົດ ປະຈຳເມືອງ. ຜູ້ຂຽນ ຍັງໄດ້ສັງເກດ ຕົວຈິງ ບັນດາອາຄານ ໂຮງຮຽນ, ອຸປະກອນ, ຫໍພັກ, ແລະ ຫ້ອງຮຽນ ແລະ ຍັງໄດ້ເກັບກຳ ເອກະສານຕ່າງໆ ຈາກຫ້ອງການຂອງລັດທີ່ກ່ຽວຂ້ອງ ແລະ ຈາກຫ້ອງການຂອງໂຄງການພັດທະນາອີກດ້ວຍ.

## ການສຶກສາ ແລະ ອັດຕາການຮູ້ໜັງສື

ລະບົບການສຶກສາໃນໄລຍະທຳອິດຂອງລາວ ແມ່ນເລີ່ມມີຂຶ້ນຢູ່ໃນວັດ, ຊຶ່ງອະນຸຍາດໃຫ້ແຕ່ເດັກນ້ອຍຜູ້ຊາຍເທົ່ານັ້ນເຂົ້າໄປຮຽນໄດ້. ໃນໄຍລະປົກຄອງຂອງ ຝະລັ່ງ (1893 - 1954) ແລະ ໄລຍະກ່ອນການປົດປ່ອຍ (ກ່ອນປີ 1975), ໂຮງຮຽນຕ່າງໆ ທັງຂອງລັດ ແລະ ເອກະຊົນ ແມ່ນໄດ້ເປີດຂຶ້ນ ແລະ ສ່ວນໃຫຍ່ກໍ່ແມ່ນຢູ່ພຽງແຕ່ໃນເຂດຕົວເມືອງໃຫຍ່ຕ່າງໆ. ເພາະສະນັ້ນ, ບັນດາເດັກນ້ອຍທີ່ຢູ່ໃນເຂດຊົນນະບົດ, ໂດຍສະເພາະບັນດາເດັກນ້ອຍຊົນເຜົ່າຕ່າງໆ ແມ່ນມີໂອກາດໜ້ອຍທີ່ຈະໄດ້ເຂົ້າໂຮງຮຽນ.

ຕາຕະລາງ 1: ອັດຕາການເຂົ້າໂຮງຮຽນ (ເດັກໃນເກນອາຍຸເຂົ້າໂຮງຮຽນ ອາຍຸແຕ່ 6ປີຂຶ້ນໄປ), ແຍກຕາມເພດ ແລະ ເຂດຕົວເມືອງ / ຊົນນະບົດ (ອີງໃສ່ຜົນຂອງການສຳຫລວດພົນລະເມືອງ ປີ 1995).

| ກຸ່ມທີ່ຖືກສຳຫລວດ | ຈຳນວນພົນລະເມືອງ | ບໍ່ເຄີຍເຂົ້າໂຮງຮຽນ | ກຳລັງເຂົ້າໂຮງຮຽນ | ອອກໂຮງຮຽນ |
|---|---|---|---|---|
| | ອາຍຸ 6+ | (%) | (%) | (%) |
| | | | | |
| **ລວມ** | 3,700,913 | 37.6 | 25.1 | 37.3 |
| ຍິງ | 1,881,057 | 47.1 | 21.4 | 31.5 |
| ຊາຍ | 1,819,856 | 27.7 | 28.9 | 43.4 |
| | | | | |
| ເຂດຕົວເມືອງ | 662,840 | 14 | 34.5 | 51.5 |
| ຍິງ | 331,541 | 18.9 | 31.4 | 49.7 |
| ຊາຍ | 331,199 | 9 | 37.7 | 53.2 |
| | | | | |
| ເຂດຊົນນະບົດ | 3,038,073 | 42.7 | 23 | 34.3 |
| ຍິງ | 1,549,416 | 53.1 | 19.2 | 27.6 |
| ຊາຍ | 1,488,657 | 31.9 | 26.9 | 41.2 |

(ແຫລ່ງຂໍ້ມູນ: ຄະນະກຳມະການ ແຜນການແຫ່ງລັດ, 1997)

ໄດ້ມີການປະເມີນວ່າ ພາຍຫລັງການປົດປ່ອຍ ໃນປີ 1975, 90% ຂອງຜູ້ທີ່ມີການສຶກສາ ຂອງປະເທດລາວ ໄດ້ອອກຈາກປະເທດ ໄປຢູ່ທີ່ປະເທດໄທໃນຖານະຊາວອົບພະຍົບ ແລະ ຕໍ່ມາກໍ່ໄດ້ໄປຕັ້ງຖິ່ນຖານ ຢູ່ບັນດາປະເທດທີ່ສາມ (Stuart-Fox, 1995). ເຖິງຢ່າງໃດກໍ່ຕາມ, ລັດຖະບານໃຫມ່ຂອງລາວ ໄດ້ທຳການກໍ່ສ້າງໂຮງຮຽນຄືນໃຫມ່ທົ່ວປະເທດ ແລະ ຍັງໄດ້ຈັດໃຫ້ໂຮງຮຽນທີ່ຢູ່ຕາມວັດຕ່າງໆ ເພີ່ມເຕີມຫ້ອງຮຽນສຳຫລັບບັນດາເດັກຜູ້ຍິງ. ໃນໄລຍະທ້າຍຂອງຊຸມປີ 1970, ໄດ້ມີໂຄງການສົ່ງບັນດາຄູໄປໃນເຂດຊົນນະບົດຕ່າງໆ ເພື່ອສອນພາສາລາວໃຫ້ຊາວບ້ານບັນດາຊົນເຜົ່າໃນຕອນກາງຄືນ ແລະ ຊ່ວຍຊາວບ້ານເຮັດວຽກຢູ່ໄຮ່ຢູ່ນາໃນຕອນກາງເວັນ. ຄຳຂັວນ *ຮຽນຫນັງສືແມ່ນຮັກຊາດ* ໄດ້ຖືກປະກາດອອກ ເພື່ອປຸກລະດົມໃຫ້ມີການຍົກລະດັບການສຶກສາ ຂອງພົນລະເມືອງໃນທົ່ວປະເທດ.

ໂຄງການດັ່ງກ່າວນີ້ ໄດ້ຄ່ອຍໆຫລຸດຫນ້ອຍລົງ ໃນໄລຍະທ້າຍຂອງຊຸມປີ 1980, ແລະ ສິ້ນສຸດລົງພ້ອມກັບການກຳເນີດຂອງກົນໄກເສດຖະກິດແບບໃຫມ່ໃນປີ 1986, ຊຶ່ງໄດ້ລະດົມໃຫ້ມີການຫັນໄປສູ່ຮູບແບບເສດຖະກິດແບບຕະຫລາດ ແລະ ແບບສ່ວນບຸກຄົນ. ເຖິງແມ່ນວ່າ ລັດຖະບານໄດ້ມີການດຳເນີນໂຄງການເງິນສະຫນັບສະຫນູນ ເພື່ອກໍ່ສ້າງ ແລະ ທຳການເປີດໂຮງຮຽນຕ່າງໆກໍ່ຕາມ, ບໍ່ມີຫົວຫນ່ວຍທຸລະກິດສ່ວນບຸກຄົນໃດ ມີຄວາມປະສົງ ທີ່ຈະໄປດຳເນີນກິດຈະການກ່ຽວກັບໂຮງຮຽນ ຢູ່ໃນເຂດຊົນນະບົດເລີຍ. ສະພາບການ ດັ່ງກ່າວນີ້ ຍັງບໍ່ທັນມີການປ່ຽນແປງ ແລະ ເດັກນ້ອຍຊົນເຜົ່າຍັງຄົງພົບກັບຄວາມຫຍຸ້ງຍາກໃນການເຂົ້າເຖິງການສຶກສາ.

ພາຍຫລັງການດຳເນີນກົນໄກເສດຖະກິດແບບໃຫມ່ ແລະ ການປະຕິຮູບອື່ນໆ ການຊ່ວຍເຫລືອຈາກບັນດາອົງການຈັດຕັ້ງສາກົນຕ່າງໆ ຕໍ່ປະເທດລາວກໍ່ໄດ້ເພີ່ມຂຶ້ນເປັນລຳດັບ. ໂຄງການພັດທະນາຕ່າງໆກໍ່ໄດ້ເພີ່ມຂຶ້ນ ແລະ ປະຈຸບັນໄດ້ກະຈາຍໄປເກືອບທົ່ວທຸກເຂດຊົນນະບົດຂອງປະເທດລາວ ແລະການສຶກສາກໍ່ແມ່ນຫນຶ່ງ ໃນບູລິມະສິດຕ່າງໆ ຂອງການພັດທະນາ. ສຳຫລັບບັນດາຊົນເຜົ່າສ່ວນນ້ອຍ, ການສຶກສາແມ່ນການຖ່າຍທອດວິຊາຄວາມຮູ້ແບບພື້ນເມືອງ ຈາກລຸ້ນຄົນຫນຶ່ງໄປສູ່ອີກລຸ້ນຄົນຫນຶ່ງ, ໂດຍມີການເນັ້ນໃສ່ ການຖ່າຍທອດຄວາມຮູ້ທີ່ຈຳເປັນໃນການດຳລົງຊີວິດຂອງພວກເຂົາເຈົ້າ. ຄວາມຮູ້ເຫລົ່ານັ້ນ ແມ່ນລວມ ເຖິງການເຮັດໄຮ່, ການເຮັດນາ, ການຜະລິດກະສິກຳ, ການສືບທອດການປະຕິບັດຕາມຄວາມເຊື່ອຖື ແລະ ຮີດຄອງປະເພນີຕ່າງໆ. ສ່ວນຫລາຍ ບັນດາຊົນເຜົ່າຕ່າງໆແມ່ນມີວັດຖະນະທຳທີ່ບໍ່ມີຫນັງສື, ບໍ່ມີໂຕຫນັງສື ໃນພາສາສະເພາະຂອງພວກເຂົາ, ແລະ ວິຊາຄວາມຮູ້ແບບພື້ນເມືອງໄດ້ຖືກຖ່າຍທອດ ໂດຍການບອກເລົ່າ, ການສັງເກດການ, ແລະ ການປະຕິບັດຕົວຈິງ. ຖ້າຈະສືບຕໍ່ຮ່ຳຮຽນໃນລະບົບສາມັນສຶກສາ, ບັນດາເດັກນ້ອຍຊົນເຜົ່າຕ້ອງໄດ້ຮຽນພາສາກາງຂອງຊາດຊຶ່ງແມ່ນພາສາລາວ, ຊຶ່ງເປັນພາສາທີ່ສອງ ຂອງພວກເຂົາ.

ຕາຕະລາງທີ່ 1, ອີງໃສ່ຜົນການສຳຫລວດພົນລະເມືອງ ໃນປີ 1995, ໄດ້ສະແດງໃຫ້ເຫັນສະພາບໃນເວລານັ້ນວ່າ ເດັກໃນເກນອາຍຸເຂົ້າໂຮງຮຽນສ່ວນຫລາຍບໍ່ໄດ້ເຂົ້າໂຮງຮຽນ. ຄວາມແຕກຕ່າງທາງດ້ານບົດບາດຍິງ-ຊາຍ ກໍ່ແມ່ນ ໄດ້ປະກົດຢ່າງຊັດເຈນ ຢູ່ໃນອັດຕາດັ່ງກ່າວ. ພ້ອມດຽວກັນນັ້ນ, ຄວາມແຕກຕ່າງຂອງສະຖິຕິ ຂອງຈຳນວນນັກຮຽນໃນເກນອາຍຸເຂົ້າຮຽນໃນຕົວເມືອງ ແລະ ຊົນນະບົດ ກໍ່ໄດ້ປະກົດຢ່າງຈະແຈ້ງ. ໃນນັ້ນ, 53% ຂອງເດັກຍິງໃນເຂດຊົນນະບົດ ຜູ້ທີ່ຢູ່ໃນເກນອາຍຸເຂົ້າຮຽນ ບໍ່ເຄີຍໄດ້ເຂົ້າໂຮງຮຽນ.

ອັດຕາການເຂົ້າໂຮງຮຽນດັ່ງກ່າວນີ້ ໄດ້ສະແດງໃຫ້ເຫັນວ່າ ອັດຕາການຮູ້ໜັງສືຍັງຕ້ອງໄດ້ຮັບການປັບປຸງ ຕື່ມອີກ. ໃນປີ 1995, ອັດຕາການຮູ້ໜັງສືໂດຍລວມ ແມ່ນມີ 60% ຂອງຈຳນວນພົນລະເມືອງອາຍຸແຕ່ 15 ປີຂຶ້ນໄປ, ໃນນັ້ນ 85% ແມ່ນຢູ່ໃນເຂດຕົວເມືອງ ແລະ 55% ແມ່ນຢູ່ໃນເຂດຊົນນະບົດ (ຄະນະກຳມະການ ແຜນການແຫ່ງລັດ, 1997). ໃນແຂວງບໍ່ແກ້ວ, ຊຶ່ງແມ່ນແຂວງທີ່ເຂດຄົ້ນຄ້ວາ ຂອງບົດນີ້ໄດ້ປະກອບຢູ່, ມີອັດຕາການຮູ້ໜັງສື ປະມານ 42% ໃນຈຳນວນພົນລະເມືອງທີ່ມີອາຍຸ ແຕ່ 15 ປີຂຶ້ນໄປ. ອັດຕາການ ຮູ້ໜັງສື ຂອງແມ່ຍິງແມ່ນມີປະມານ 27%, ຊຶ່ງຢູ່ໃນລະດັບທີ່ຕ່ຳກ່ວາອັດຕາການ ຮູ້ໜັງສືຂອງຜູ້ຊາຍ ຫລາຍ, ຊຶ່ງມີຢູ່ປະມານ 57% (ຄະນະກຳມະການ ແຜນການແຫ່ງລັດ, 1997). ສຳຫລັບຢູ່ເຂດ ນິກສຸກ - ທ່າຟ້າ ເອງ ແມ່ນບໍ່ໄດ້ມີການບັນທຶກຢ່າງເປັນທາງການ, ແຕ່ວ່າໃນບົດລາຍງານ ໃນປີ 1994 ໄດ້ຄາດຄະເນ ວ່າ ປະມານສອງສ່ວນສາມ ຂອງພົນລະເມືອງທັງຫມົດຢູ່ເຂດດັ່ງກ່າວ ແມ່ນບໍ່ຮູ້ໜັງສື ແລະ ໃນນັ້ນ ປະມານ 95% ຂອງພົນລະເມືອງ ສາມາດເຂົ້າໃຈພາສາປາກຂອງລາວ (Brami, 2001).

## ຜົນກະທົບ ຂອງຮີດຄອງປະເພນີບາງຢ່າງຂອງບັນດາຊົນເຜົ່າ ຕໍ່ການສຶກສາ ຂອງເດັກນ້ອຍ

### ສາສະໜາ ແລະ ການສຶກສາຂອງເດັກຊາຍ

ການປະຕິບັດທາງດ້ານຮີດຄອງປະເພນີ ແລະ ສາສະໜາຂອງ ເຜົ່າລະເມດ, ຂະມຸ, ແລະ ມົ້ງ ແມ່ນອີງໃສ່ ຄວາມເຊື່ອຖືຜີ ຫລື ວິນຍານຕ່າງໆ. ພິທີກຳທາງສາສະໜາທີ່ສຳຄັນສ່ວນໃຫຍ່ຂອງຊຸມຊົນໃນເຂດນີ້ ແມ່ນປະຕິບັດໂດຍບັນດາເຖົ້າແກ່ທີ່ເປັນຜູ້ຊາຍຂອງຫມູ່ບ້ານ ແລະ ໃນເວລາດຽວກັນ ການທຳພິທີ ລ້ຽງຜີເຮືອນ ແລະ ຜີບັນພະບຸລຸດຂອງຄອບຄົວ ກໍ່ແມ່ນປະຕິບັດໂດຍຜູ້ເປັນພໍ່ໃນຖານະຫົວຫນ້າຄອບຄົວ. ສ່ວນຊົນເຜົ່າໄຕລື້ ມີຄວາມເຊື່ອຖືສາສະໜາພຸດ ນິກາຍ ມະຫາຍານ, ຊຶ່ງພິທີກຳທີ່ສຳຄັນຕ່າງໆ ສ່ວນຫລາຍ ແມ່ນເຮັດຢູ່ທີ່ວັດຂອງຫມູ່ບ້ານ ແລະ ກໍ່ໄດ້ປະຕິບັດໂດຍຄູບາອາຈານ ແລະ ຫົວຫນ້າ ຂອງຫມູ່ບ້ານ ທີ່ເປັນຜູ້ຊາຍ. ເພາະສະນັ້ນ, ໃນທັງຫມົດຫມູ່ບ້ານຂອງເຂດນີ້, ຄວາມຮູ້ກ່ຽວກັບພິທີກຳຕ່າງໆ ແມ່ນໄດ້ຖືກຖ່າຍ ທອດໃຫ້ແກ່ເດັກນ້ອຍຜູ້ຊາຍ ຈາກເຊັ່ນຄົນ ສູ່ເຊັ່ນຄົນ, ໃນຂະນະທີ່ແມ່ຍິງ ມີບົດບາດ ໃນເລື່ອງນີ້ຫນ້ອຍ ທີ່ສຸດ. ແມ່ຍິງ ແລະ ເດັກນ້ອຍຜູ້ຍິງ ສາມາດຊ່ວຍໄດ້ ພຽງແຕ່ ການກະກຽມເຄື່ອງຂອງ ທີ່ໃຊ້ໃນພິທີ ພ້ອມທັງກະກຽມອາຫານ ແລະ ເຄື່ອງດື່ມໃຫ້ແກ່ບັນດາແຂກ ທີ່ມາຮ່ວມໃນພິທີ. ພິທີກຳ ທາງດ້ານປະເພນີ ແລະ ສາສະໜາເຫລົ່ານີ້ ແມ່ນມີຄວາມສຳຄັນຫລາຍ ຕໍ່ກັບຊຸມຊົນບັນດາຊົນເຜົ່າ ເພາະສະນັ້ນ ບັນດາຜູ້ຊາຍທີ່ມີບົດບາດໃນພິທີທີ່ສຳຄັນດັ່ງກ່າວ ແມ່ນໄດ້ຮັບຄວາມນັບຖືທີ່ສຸດ ຢູ່ໃນ ຊຸມຊົນຂອງພວກເຂົາ.

ຍ້ອນການໄດ້ຮັບຄວາມຮູ້ທາງດ້ານສາສະໜາ ແມ່ນບັນຫາທີ່ກ່ຽວໂຍງໄປເຖິງເລື່ອງ ບົດບາດ ຍິງ-ຊາຍ, ດ້ວຍເຫດນັ້ນ, ການໄດ້ຮັບການສຶກສາ ກໍ່ເລີຍກາຍເປັນສິດທິຂອງເດັກນ້ອຍຜູ້ຊາຍ, ໃນຂະນະທີ່ເດັກນ້ອຍ ຜູ້ຍິງໄດ້ຖືກຖືວ່າ ບໍ່ມີຄວາມຈຳເປັນປານໃດ ທີ່ຈະຕ້ອງໄດ້ຮັບການສຶກສາແບບເປັນທາງການ ດ້ວຍເຫດທີ່ວ່າ ພວກເຂົາແມ່ນມີບົດບາດຕິດພັນກັບວຽກຢ້າວວຽກເຮືອນຂອງພວກເຂົານັ້ນເອງ. ຖ້າວ່າຄອບຄົວໃດ ມີຄວາມຈຳເປັນຕ້ອງໄດ້ ຫາລາຍໄດ້ເພີ້ມ, ມັນກໍ່ແມ່ນບັນດາເດັກນ້ອຍຜູ້ຊາຍເອງ ທີ່ຖືກຄາດຫວັງວ່າ ພວກເຂົາຕ້ອງເປັນຜູ້ໄປຊອກວຽກເຮັດງານທຳ ເພື່ອຫາລາຍໄດ້ຊ່ວຍຄອບຄົວໃນເວລາທີ່ພວກເຂົາ ເປັນຜູ້ໃຫຍ່ຂຶ້ນ. ດ້ວຍເຫດນີ້, ຖ້າຫາກວ່າພໍ່ແມ່ ມີຄວາມສາມາດສົ່ງເສີມ ດ້ານການສຶກສາໃຫ້ແກ່

ລູກເຕົ້າພຽງແຕ່ເລັກນ້ອຍ, ພວກເຂົາກໍ່ມີທ່າທີ ທີ່ຈະສົ່ງເສຍໃຫ້ລູກຊາຍ ໄດ້ຮຽນຫລາຍກວ່າລູກສາວ.

## ຮີດຄອງໃນການແຕ່ງງານ ແລະ ການສຶກສາຂອງເດັກຍິງ

ບັນດາຊົນເຜົ່າທັງຫມົດໃນເຂດນີ້ ຕາມທຳມະດາແມ່ນຈະສ້າງຄອບຄົວໃນຊ່ວງອາຍຸເກືອບ 20 ປີ, ຊຶ່ງແມ່ຍິງສ່ວນຫລາຍແມ່ນແຕ່ງງານໃນອາຍຸທີ່ນ້ອຍກ່ວາຜູ້ຊາຍ. ພາຍຫລັງທີ່ຄູ່ບ່າວສາວ ໄດ້ຕົກລົງທີ່ຈະແຕ່ງງານກັນ ພໍ່ແມ່ຂອງທັງສອງຝ່າຍ ຈະມາປຶກສາຫາລືກັນກ່ຽວກັບຄ່າດອງ, ຊຶ່ງແມ່ນທາງຄອບຄົວຂອງຝ່າຍເຈົ້າບ່າວ ເປັນຜູ້ມອບໃຫ້ແກ່ຄອບຄົວຂອງຝ່າຍເຈົ້າສາວ. ສຳຫລັບຄ່າດອງແມ່ນສາມາດ ຕໍ່ລອງໄດ້ ແລະ ມີຫລາຍແບບ ອີງຕາມແຕ່ລະບ້ານ.

ສຳຫລັບພໍ່ແມ່ ຊົນເຜົ່າລະເມດ, ຂະມຸ, ແລະ ມົ້ງ, ຕາມທຳມະດາແລ້ວ ແມ່ນພວກເຂົາເຈົ້າບໍ່ຄ່ອຍສົ່ງເສີມໃຫ້ລູກສາວໄດ້ຮັບການສຶກສາ. ພວກເຂົາເຈົ້າລໍຖ້າ ມື້ທີ່ລູກສາວຂອງເຂົາເຈົ້າຈະອອກເຮືອນຫລັງຈາກແຕ່ງງານແລ້ວ, ຊຶ່ງມັນໄດ້ເປັນໂອກາດທີ່ພວກເຂົາເຈົ້າ ຈະໄດ້ແລກປ່ຽນແຮງງານຂອງລູກສາວຂອງເຂົາເຈົ້າກັບເງິນ ຫລືວັດຖຸມີຄ່າທີ່ເປັນຄ່າດອງ. ສຳຫລັບພໍ່ແມ່ ເຜົ່າໄຕລື້ ມີຄວາມເຊື່ອວ່າລູກຊາຍທີ່ໄດ້ຜ່ານການບວດແລ້ວນັ້ນ ຈະສາມາດນຳພາດວງວິນຍານຂອງຜູ້ເປັນແມ່ໄປສູ່ ເມືອງສະຫວັນ (ເມືອງເທວະດາ) ຫລັງຈາກແມ່ຕາຍ. ເພາະສະນັ້ນ, ພວກເດັກນ້ອຍຜູ້ຊາຍຕ້ອງໄດ້ບວດເປັນຄູບາ ໃນໄລຍະເວລາໃດຫນຶ່ງ ເພື່ອສະສົມບຸນບາລະມີໃຫ້ພຽງພໍ ເພື່ອທົດແທນໃຫ້ແກ່ແມ່ (ເຫງົ້າສີວັດ, 1995). ສຳຫລັບລູກສາວຂອງ ຊົນເຜົ່າໄຕລື້ ບໍ່ສາມາດຕອບແທນບຸນຄຸນ ໃຫ້ແມ່ໄດ້ຄືກັນກັບລູກຊາຍ, ເພາະສະນັ້ນ ຈົນກ່ວາພວກເຂົາຈະເປັນຜູ້ໃຫຍ່ ແລະ ໄດ້ແຕ່ງງານອອກເຮືອນ ພວກເດັກນ້ອຍແມ່ຍິງເຜົ່າໄຕລື້ ຕ້ອງເຮັດວຽກຫນັກໂດຍສະເພາະແມ່ນວຽກເຮືອນ ເພື່ອເຮັດໃຫ້ພໍ່ແມ່ມີຄວາມສຸກ ເພື່ອພວກເຂົາເອງກໍ່ຈະໄດ້ສະສົມ ຄຸນຄວາມດີໃຫ້ຫລາຍທີ່ສຸດເທົ່າທີ່ພວກເຂົາຈະເຮັດໃຫ້ໄດ້, ຊຶ່ງເຊື່ອກັນວ່າສາມາດທົດແທນ ບຸນຄຸນ ທີ່ເປັນຫນີ້ພໍ່ແມ່ມາຕັ້ງແຕ່ເກີດ.

ເຖິງແມ່ນວ່າ ບັນດາຊົນເຜົ່າຢູ່ເຂດ ນຶກສຸກ-ທ່າຟ້າ ມີການປະຕິບັດທີ່ຕ່າງກັນ ກ່ຽວກັບການອອກເຮືອນພາຍຫລັງແຕ່ງງານແລ້ວ, ແຕ່ພວກເຂົາມີລະບົບການເຊື່ອຖືທາງດ້ານສັງຄົມທີ່ຄືກັນ ແລະ ນັ້ນກໍ່ຄື ລະບົບທີ່ພໍ່ເປັນຫົວຫນ້າຄອບຄົວ, ຊຶ່ງແມ່ນລະບົບທີ່ເຮັດໃຫ້ເດັກນ້ອຍຜູ້ຊາຍໄດ້ຮັບໂອກາດໃນການສຶກສາຫລາຍກ່ວາ ເດັກນ້ອຍຜູ້ຍິງ.

## ລະບົບຄວາມເຊື່ອຖື ແລະ ຄວາມທຸກຈົນແມ່ນເປັນອຸປະສັກ ຕໍ່ການສຶກສາຂອງເດັກນ້ອຍຊົນເຜົ່າ

ລະບົບຄວາມເຊື່ອຖື ທີ່ອີງໃສ່ ຫລື ລວມເຖິງ ແນວຄວາມຄິດກ່ຽວກັບຜີ ຫລື ວິນຍານ ຂອງຊຸມຊົນ ໃນເຂດນຶກສຸກ-ທ່າຟ້າ ໄດ້ມີຜົນກະທົບຕໍ່ການສຶກສາຂອງເດັກນ້ອຍໃນເຂດດັ່ງກ່າວ. ກໍລະນີ ທີ່ສະທ້ອນກ່ຽວກັບເລື່ອງນີ້ ແມ່ນໄດ້ປະກົດໃຫ້ເຫັນຢ່າງຊັດເຈນ ຈາກການສຳພາດເດັກນ້ອຍກຸ່ມຫນຶ່ງໃນຫມູ່ບ້ານ ຂອງຊົນເຜົ່າລະເມດ ຢູ່ບ້ານນ້ຳແຊວ ໃນປີ 2004. ມີເດັກນ້ອຍຜູ້ຊາຍຄົນຫນຶ່ງໄດ້ເລົ່າວ່າ "ຫມູ່ຂອງຂ້ອຍ - ເປັນເຄິ່ງຫ້ອງຮຽນ - ອອກໂຮງຮຽນ ເພາະວ່າພໍ່ແມ່ຂອງ ພວກເຂົາ ໄດ້ຍ້າຍອອກໄປຈາກຫມູ່ບ້ານ". ໃນເວລາທີ່ຖາມຫາສາເຫດ, ເດັກຊາຍອີກຄົນຫນຶ່ງ ກໍ່ເລົ່າເພີ່ມວ່າ "ໃນສອງສາມປີຜ່ານມາ, ໄດ້ມີ ຊາວບ້ານຕາຍ

ເປັນຈຳນວນຫລາຍ [ເດັກອີກຄົນຫນຶ່ງ ກໍ່ເວົ້າເສີມວ່າ ຕາຍເປັນສິບ], ດ້ວຍເຫດນັ້ນ ພໍ່ແມ່ ຂອງພວກເຂົາຈຶ່ງບອກກັບພວກເຂົາວ່າ ບັນດາຜີ ຫລືວິນຍານຢູ່ເຂດບ້ານເຂົາ ບໍ່ພໍໃຈ ແລະ ເຮັດໃຫ້ ພວກເຂົາເຈັບປ່ວຍ ແລະ ລົ້ມຕາຍ". ຍັງມີເລື່ອງ ບອກເລົ່າທີ່ຄ້າຍຄືກັນ ຢູ່ບ້ານເຜົ່າລະເມດອີກບ້ານຫນຶ່ງ ຄືບ້ານມຸກ-ຮຸກ, ແລະ ຊາວບ້ານຈຳນວນຫລາຍຄົນກໍ່ເວົ້າວ່າ ມັນບໍ່ແມ່ນເລື່ອງແປກສຳຫລັບປະຊາຊົນ ໃນເຂດນີ້ເລີຍ ໃນການທີ່ຈະຍ້າຍເຮືອນເປັນປະຈຳ ເພາະວ່າຜີໄດ້ບອກໃຫ້ພວກເຂົາຕ້ອງເຮັດຕາມ. ມັນເປັນທີ່ຈະແຈ້ງວ່າ ການຍົກຍ້າຍດັ່ງກ່າວໄດ້ມີຜົນໂດຍກົງ ຕໍ່ການໄປໂຮງຮຽນຂອງເດັກນ້ອຍ.

---

*ຄວາມຢູ່ລອດຂອງພວກເຂົາມື້ນີ້ ໄດ້ຖືກຖືວ່າມີຄວາມສຳຄັນຫລາຍກ່ວາ ວັນຂ້າງຫນ້າຂອງພວກເດັກນ້ອຍ*

---

ຄວາມທຸກຈົນ ກໍ່ແມ່ນບັນຫາທີ່ສຳຄັນອັນຫນຶ່ງ ທີ່ມີຜົນກະທົບຕໍ່ການເຂົ້າໂຮງຮຽນຂອງເດັກນ້ອຍໃນເຂດດັ່ງກ່າວນີ້. ຄວາມຢູ່ລອດຂອງຄອບຄົວ ແມ່ນໄດ້ອີງໃສ່ການປະກອບສ່ວນຂອງ ສະມາຊິກຄອບຄົວ ທັງຫມົດເຂົ້າໃນກິດຈະກຳ ແລະ ວຽກງານຕ່າງໆ ຂອງຄອບຄົວ. ຜູ້ເປັນພໍ່ແມ່ໃນເຂດນີ້ ສ່ວນຫລາຍໄດ້ຖືວ່າເດັກນ້ອຍກໍ່ແມ່ນສ່ວນຫນຶ່ງຂອງແຮງງານຂອງຄອບຄົວ ແລະ ພວກເຂົາຖືກຄາດຫວັງໃຫ້ແບ່ງເບົາ ພາລະ ແລະ ຄວາມຮັບຜິດຊອບໃນຄອບຄົວ. ເພາະສະນັ້ນ, ພວກເດັກນ້ອຍ ຈະຂາດຮຽນ ຖ້າວ່າເວລາໃດທີ່ຄອບຄົວຂອງພວກເຂົາ ຫາກຕ້ອງການຄວາມຊ່ວຍເຫລືອຈາກພວກເຂົາ ໃນວຽກໄຮ່ວຽກນາ ຫລື ໃນປ່າເພື່ອຊອກຫາອາຫານ ຫລື ເຄື່ອງປ່າຂອງດົງອື່ນໆ. ດ້ວຍເຫດນັ້ນ, ຄວາມຢູ່ລອດຂອງພວກເຂົາມື້ນີ້ ໄດ້ຖືກຖືວ່າມີຄວາມສຳຄັນຫລາຍກ່ວາ ວັນຂ້າງຫນ້າຂອງພວກເດັກນ້ອຍ.

## ການແບ່ງປັນມໍລະດົກ ແລະ ຄວາມຕ້ອງການທີ່ແຕກຕ່າງ ກ່ຽວກັບບົດບາດ ຍິງ-ຊາຍ

ການແບ່ງປັນມໍລະດົກ ແມ່ນຈະປະຕິບັດໃນເວລາທີ່ ພໍ່ແມ່ໄດ້ເຖົ້າແກ່ ແລະ ບໍ່ສາມາດສືບຕໍ່ເຮັດວຽກງານຕ່າງໆຂອງຄອບຄົວ ແລະ ເບິ່ງແຍງເຮືອນຊານໄດ້ແລ້ວ. ຊັບສິນບັດຂອງຄອບຄົວ ຊຶ່ງອາດຈະລວມມີດິນໄຮ່ດິນນາ, ເຮືອນ, ສວນ, ສັດລ້ຽງ, ແລະ ເງິນຄຳຕ່າງໆ ແມ່ນໄດ້ຖືກແບ່ງປັນ ໃຫ້ແກ່ພວກລູກໆ. ການແບ່ງປັນມໍລະດົກຂອງ ຊົນເຜົ່າ ລະເມດ, ຂະມຸ, ແລະ ມົ້ງ ຊຶ່ງມີພໍ່ເປັນຫົວຫນ້າຄອບຄົວ, ພວກລູກຊາຍຈະໄດ້ຮັບມໍລະດົກ ຫລາຍກ່ວາພວກລູກສາວ. ໃນນັ້ນ, ລູກຊາຍກົກຈະເປັນຜູ້ທີ່ໄດ້ ຮັບມໍລະດົກຫລາຍກ່ວາຫມູ່ ເພາະວ່າລາວຈະຕ້ອງຮັບຜິດຊອບ ໃນການລ້ຽງດູພໍ່ແມ່ທີ່ເຖົ້າແກ່. ສ່ວນລູກສາວນັ້ນຕາມທຳມະດາແລ້ວ ພວກເຂົາຈະຍິນດີຮັບມໍລະດົກ ໃນສ່ວນທີ່ຖືກແບ່ງປັນໃຫ້ພວກເຂົາ.

ສຳຫລັບຊົນເຜົ່າໄຕລື້ ຕາມທຳມະດາແລ້ວ ລູກສາວກົກ ຫລືຜູ້ທີ່ໃຫຍ່ກ່ວາ ຈະແຕ່ງງານກ່ອນຫມູ່ ແລະ ເອົາຜົວຂອງລາວ ເຂົ້າມາຢູ່ໃນເຮືອນຮ່ວມກັນ ກັບຄອບຄົວຂອງລາວ. ຫລັງຈາກນັ້ນ ສະມາຊິກທຸກຄົນຂອງຄອບຄົວຈະຊ່ວຍປຸກສ້າງເຮືອນໃຫມ່ຂອງລາວ ເທື່ອລະຫນ້ອຍຕາມຄວາມສາມາດ (ຊັບສິນຂອງຄອບຄົວ ສ່ວນຫນຶ່ງກໍ່ແມ່ນຖືກແບ່ງປັນໃຫ້ລາວກ່ອນ). ໃນເວລາດຽວກັນ ລາວ ແລະ ຜົວ ກໍ່ຊ່ວຍເຫລືອຄອບຄົວຂອງຝ່າຍຍິງ ດ້ວຍການເຮັດວຽກຕ່າງໆ ຂອງຄອບຄົວ ຊ່ວຍບັນດານ້ອງໆຂອງລາວ. ການປະຕິບັດ

ເຊັ່ນດຽວກັນນີ້ ໄດ້ຖືກລົ້ມຄືນເລື້ອຍໆ ໂດຍພວກນ້ອງສາວຜູ້ຮອງລົງມາ ແລະ ໃນທີ່ສຸດ ນ້ອງສາວຫລ້າເປັນຜູ້ຢູ່ນຳພໍ່ແມ່ພາຍຫລັງແຕ່ງງານແລ້ວ. ລາວ ແລະ ຜົວ ຂອງລາວ ຈະເປັນຜູລ້ຽງດູພໍ່ແມ່ທີ່ເຖົ້າແກ່ ແລະ ໄດ້ຮັບມໍລະດົກສ່ວນທີ່ເຫລືອທັງຫມົດ. ສຳຫລັບເດັກນ້ອຍຜູ້ຊາຍຊົນເຜົ່າໄຕລື້ ຈະໄດ້ຮັບມໍລະດົກຫນ້ອຍກ່ວາລູກສາວ ເພາະວ່າພວກເຂົາຈະເປັນຜູ້ຍ້າຍອອກຈາກເຮືອນ ເພື່ອໄປຢູ່ນຳຄອບຄົວຂອງເມຍເຂົາພາຍຫລັງແຕ່ງານ ກ່ອນທີ່ຈະໄປຕັ້ງເຮືອນ ແລະ ຄອບຄົວຂອງເຂົາເອງ. ແຕ່ເຖິງຢ່າງໃດ ກໍ່ຕາມ, ໃນໄລຍະເວລາກ່ອນການແຕ່ງງານ, ພໍ່ແມ່ໄດ້ໃຊ້ຈ່າຍ ເງິນຄຳຂອງຄອບຄົວ ໃນຈຳນວນຫລາຍ ພໍສົມຄວນສຳຫລັບຈັດພິທີງານບວດ, ໃນການສຶກສາ, ແລະ ເປັນຄ່າດອງ ໃຫ້ແກ່ພວກ ລູກຊາຍໃນການ ແຕ່ງເມຍ.

*ຖ້າວ່າພໍ່ແມ່ ມີຊັບສິນຈຳກັດ, ທຳມະດາແລ້ວ*
*ພວກເຂົາຈະເລືອກສົ່ງເສຍໃຫ້ລູກຊາຍ ໄດ້ຮັບການສຶກສາ ຫລາຍກ່ວາ ລູກສາວ*

ໃນເຂດມົກສຸກ-ທ່າຟ້າ, ພໍ່ແມ່ຈຳນວນຫລາຍແມ່ນມີຄວາມປະສົງຢາກມີລູກສາວ ເພາະວ່າພວກເຂົາຊ່ວຍເຫລືອວຽກເຮືອນວຽກຊານ ແລະ ບອກສອນງ່າຍກ່ວາລູກຊາຍ. ໃນບັນດາຊົນເຜົ່າທັງຫມົດໃນເຂດນີ້ ພວກເດັກນ້ອຍຜູ້ຊາຍເປັນຜູ້ສືບທອດນາມສະກຸນຂອງຄອບຄົວ. ເພາະສະນັ້ນ, ພໍ່ແມ່ຄາດຫວັງຢາກໄດ້ລູກຊາຍ ແລະ ຢາກໃຫ້ລູກຊາຍໄດ້ກາຍເປັນຜູ້ທີ່ມີບົດບາດສຳຄັນ ແລະ ດ້ວຍເຫດນັ້ນ ຖ້າວ່າພໍ່ແມ່ມີຊັບສິນຈຳກັດ, ທຳມະດາແລ້ວ ພວກເຂົາຈະເລືອກສົ່ງເສຍໃຫ້ລູກຊາຍ ໄດ້ຮັບການສຶກສາ ຫລາຍກ່ວາລູກສາວ.

## ໂຄງການປັບປຸງການສຶກສາ

ຕາຕະລາງ 2: ຈຳນວນໂຮງຮຽນ ແລະ ຊັ້ນຮຽນຕ່າງໆ ໃນເຂດ ມົກສຸກ-ທ່າຟ້າ

| ຊື່ບ້ານ | ບໍ່ມີໂຮງຮຽນ | ມີຊັ້ນອະນຸບານ | ໂຮງຮຽນປະຖົມ | | | | | ໂຮງຮຽນ ມັດທະຍົມ | | |
|---|---|---|---|---|---|---|---|---|---|---|
| | | | 1 | 2 | 3 | 4 | 5 | 1 | 2 | 3 |
| ບ້ານ ນາຫລວງ | | | | | | | | | | |
| ບ້ານ ນ້ຳທຸງ | | | | | | | | | | |
| ບ້ານ ນາງາມ | | | | | | | | | | |
| ບ້ານ ນ້ຳແຊວ | | | | | | | | | | |
| ບ້ານ ດອນໃຈ | | | | | | | | | | |
| ບ້ານ ດອນຄຳ | | | | | | | | | | |
| ບ້ານ ຫ້ວຍທະ | | | | | | | | | | |
| ບ້ານ ປາງສະລາວ | | | | | | | | | | |
| ບ້ານ ທ່າຟ້າ | | | | | | | | | | |
| ບ້ານ ລະໂກນ | | | | | | | | | | |
| ບ້ານ ມົກຮຸກ | | | | | | | | | | |
| ບ້ານ ຊອດ | | | | | | | | | | |

(ແຫລ່ງຂໍ້ມູນ: ໂຄງການ BIRD, ແຂວງບໍ່ແກ້ວ, ລາວ, 2004)

## ອັດຕາການເຂົ້າໂຮງຮຽນ ໃນລະບົບສາມັນສຶກສາ

ໂຮງຮຽນປະຖົມສຶກສາທຳອິດຂອງເຂດດັ່ງກ່າວໄດ້ຖືກສ້າງຂຶ້ນຢູ່ບ້ານທ່າຟ້າ ໃນປີ 1953 ໂດຍພວກຊາວບ້ານເອງ, ແຕ່ວ່າໂຮງຮຽນກໍ່ບໍ່ໄດ້ທຳການສິດສອນຕາມປົກກະຕິ ແລະ ກໍ່ໄດ້ຖືກປິດລົງ ໃນຊ່ວງໄລຍະສົງຄາມໃນລະຫວ່າງປີ 1965 ຫາ 1973 (ຈິດຕະລັດ, 2006). ໃນໄລຍະເວລາແຕ່ປີ 1985 ຫາ 1988 ໄດ້ມີການປຸກສ້າງໂຮງຮຽນປະຖົມແບບຫ້ອງດຽວ (ມີແຕ່ຊັ້ນ ປໍ 1) ຫລື ສອງຫ້ອງ (ມີຮອດຫ້ອງ ປໍ 2) ຂຶ້ນໃນເກືອບຫມົດທຸກບ້ານຂອງເຂດດັ່ງກ່າວ. ໂຮງຮຽນປະຖົມສົມບູນ ທີ່ມີຮອດຫ້ອງ ປໍ 5 ກໍ່ໄດ້ຖືກສ້າງຂຶ້ນຢູ່ບ້ານທ່າຟ້າ ແລະ ກໍ່ເປັນບ່ອນດຽວໃນເຂດດັ່ງກ່າວທີ່ມີໂຮງຮຽນອະນຸບານ. ໂຮງຮຽນທັງຫມົດເຫລົ່ານີ້ໄດ້ຮັບການປັບປຸງ ແລະ ສ້ອມແປງຄືນໃຫມ່ ໂດຍລັດຖະບານຂອງທ້ອງຖິ່ນໃນປີ 1995 ຫລື ບາງບ່ອນກໍ່ແມ່ນຊ່ວຍເຫລືອໂດຍອົງການຊ່ວຍເຫລືອທີ່ບໍ່ຂຶ້ນກັບລັດຖະບານ ຄືອົງການ Concern Worldwide ໃນປີ 1997. ເຖິງຢ່າງໃດກໍ່ຕາມສາມຫມູ່ບ້ານໃນເຂດນີ້ຍັງຄົງບໍ່ມີໂຮງຮຽນເລີຍ (ຕາຕະລາງ 2). ໂຮງຮຽນປະຖົມທັງຫມົດ ຂອງເຂດດັ່ງກ່າວ ມີເດັກນັກຮຽນທັງຫມົດ ຈຳນວນ 501 ຄົນ, ຊຶ່ງໃນນັ້ນມີເດັກຍິງ ຈຳນວນ 243 ຄົນ (48.5%), ແລະ ໃນນັ້ນ ນັກຮຽນຊັ້ນ ປໍ 1 ມີຈຳນວນ 213 ຄົນ (42.5%), ປໍ 2 ມີ 119 ຄົນ (23.8%), ຊັ້ນ ປໍ 3 ມີ 77 ຄົນ (15.4%), ປໍ 4 ມີ 48 ຄົນ (9.6%), ແລະ ຊັ້ນ ປໍ 5 ມີ 44 ຄົນ (8.8%) (ຕາຕະລາງ 3).

<u>ຕາຕະລາງ 3: ຈຳນວນເດັກນ້ອຍລົງທະບຽນເຂົ້າຮຽນ ໃນລະດັບປະຖົມ (ແບ່ງຕາມຊັ້ນຮຽນ)</u>

| ຊັ້ນຮຽນ | 1 | | 2 | | 3 | | 4 | | 5 | | ລວມ | |
|---|---|---|---|---|---|---|---|---|---|---|---|---|
| | ລ[1] | ຍ[2] | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລວມ | ຍິງ |
| ບ້ານ ນາຫລວງ | 31 | 16 | 17 | 10 | | | | | | | 48 | 26 |
| ບ້ານ ນ້ຳທຸງ | 22 | 15 | 13 | 8 | | | | | | | 35 | 23 |
| ບ້ານ ນາງາມ | 35 | 14 | 9 | 7 | 16 | 4 | | | | | 60 | 25 |
| ບ້ານ ນ້ຳແຊວ | | | | | | | | | | | | |
| ບ້ານ ດອນໃຈ | 31 | 16 | 23 | 13 | 27 | 9 | 21 | 9 | 23 | 6 | 125 | 53 |
| ບ້ານ ດອນຄຳ | | | | | | | | | | | | |
| ບ້ານ ຫ້ວຍທະ[3] | | | | | | | | | | | | |
| ບ້ານ ປາງສະລາວ | 25 | 13 | | | | | | | | | 25 | 13 |
| ບ້ານ ທ່າຟ້າ | 34 | 14 | 44 | 22 | 34 | 15 | 27 | 20 | 21 | 8 | 160 | 79 |
| ບ້ານ ລະໂກນ | | | | | | | | | | | | |
| ບ້ານ ມົກຊຸກ | 19 | 13 | 13 | 5 | | | | | | | 32 | 18 |
| ບ້ານ ຊອດ | 16 | 6 | | | | | | | | | 16 | 6 |
| ລວມ | 213 | 107 | 119 | 65 | 77 | 28 | 48 | 29 | 44 | 14 | 501 | 243 |

ຫມາຍເຫດ: ລວມ[1]; ຍິງ[2]; [3] ບ່ອນເປົ່າຫວ່າງສະແດງວ່າບໍ່ໄດ້ມີການບັນທຶກຂໍ້ມູນດັ່ງກ່າວ ຫລື ບໍ່ມີຊັ້ນຮຽນດັ່ງກ່າວຢູ່ໃນບ້ານນັ້ນ. ຊາວບ້ານຫ້ວຍທະ ເວົ້າວ່າ ເດັກນ້ອຍໃນເກນອາຍຸເຂົ້າຮຽນຂອງບ້ານພວກເຂົາ ແມ່ນໄປເຂົ້າໂຮງຮຽນຫມົດ.
(ແຫລ່ງຂໍ້ມູນ: ຫ້ອງການຂອງໂຮງຮຽນດອນໃຈ, 2004)

ເນື່ອງຈາກວ່າ ບັນດາຫມູ່ບ້ານສ່ວນຫລາຍ ມີພຽງແຕ່ຊັ້ນປະຖົມ ປີທີ 1 ຫລື ມີຮອດພຽງແຕ່ ປີທີ 2 ເທົ່ານັ້ນ,

ຈຳນວນເດັກນ້ອຍເຂົ້າໂຮງຮຽນໃນຊັ້ນເລີ່ມຕົ້ນຈຶ່ງສູງ. ຈຳນວນເດັກນ້ອຍແມ່ຍິງ ທີ່ເຂົ້າໂຮງຮຽນ ແມ່ນເກືອບເທົ່າກັບຈຳນວນເດັກນ້ອຍຜູ້ຊາຍ, ແຕ່ວ່າ ໃນຊັ້ນ ປໍ 3 ແລະ ປໍ 5 ແມ່ນມີເດັກຍິງຫນ້ອຍກ່ວາເລັກນ້ອຍ.

ຕາຕະລາງທີ 4 ໄດ້ສະແດງໃຫ້ເຫັນ ຈຳນວນເດັກນ້ອຍທີ່ເຂົ້າຮຽນໃນຊັ້ນມັດທະຍົມ ທີ່ມີພຽງແຕ່ ລະດັບມັດທະຍົມຕົ້ນ ແລະ ມີແຫ່ງດຽວໃນເຂດນີ້ ຊຶ່ງຕັ້ງຢູ່ບ້ານທ່າຟ້າ. ຈຳນວນນັກຮຽນຂອງຊັ້ນ ມັດທະຍົມມີທັງຫມົດ 83 ຄົນ, ໃນນັ້ນມີເດັກຍິງ 26 ຄົນ (ຫລື 31%), ຊຶ່ງໃນນັ້ນ ພວກເດັກນ້ອຍ ມາຈາກ ບ້ານທ່າຟ້າເອງ ມີເຖິງ 66% ແລະ ຮອງລົງມາແມ່ນມາຈາກບ້ານດອນໃຈ ຊຶ່ງມີເຖິງ 21.7%.

ຕາຕະລາງ 4: ຈຳນວນນັກຮຽນເຂົ້າຮຽນໃນຊັ້ນມັດທະຍົມ ທີ່ທ່າຟ້າ

| ຊັ້ນ | 1 | | 2 | | 3 | | ລວມ | |
|---|---|---|---|---|---|---|---|---|
| | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ | ລວມ | ຍິງ |
| ບ້ານ ນາຫລວງ | | | | | | | 0 | 0 |
| ບ້ານ ນ້ຳຫຸງ | | | | | | | 0 | 0 |
| ບ້ານ ນາງາມ | 1 | 0 | | | 1 | 0 | 2 | 0 |
| ບ້ານ ນ້ຳແຊວ | | | | | | | 2* | 0 |
| ບ້ານ ດອນໃຈ | 18 | 7 | | | | | 18 | 7 |
| ບ້ານ ດອນຄຳ | | | | | | | 1* | 0 |
| ບ້ານ ຫ້ວຍທະ | | | | | | | 1* | 0 |
| ບ້ານ ປາງສະລາວ | 1 | 0 | 1 | 0 | 1 | 1 | 3 | 1 |
| ບ້ານ ທ່າຟ້າ | 11 | 6 | 17 | 6 | 27 | 6 | 55 | 18 |
| ບ້ານ ລະໂກນ | | | | | | | 1* | 0 |
| ບ້ານ ຊອດ | | | | | | | 0 | 0 |
| ລວມ | 31 | 13 | 18 | 6 | 29 | 7 | 83 | 26 |

ຫມາຍເຫດ: * ບໍ່ຮູ້ຊັ້ນຮຽນໃດ
(ແຫລ່ງຂໍ້ມູນ: ເກັບກຳຂໍ້ມູນພາກສະຫນາມຢູ່ເຂດສຶກສາ, 2005)

ການມີໂຮງຮຽນຢູ່ໃນ ຫລື ຢູ່ໃກ້ບ້ານ ກໍ່ແມ່ນປັດໄຈທີ່ສຳຄັນອັນຫນຶ່ງ ໃນການເຂົ້າໂຮງຮຽນ ຂອງເດັກນ້ອຍ. ໃນເມື່ອບໍ່ມີໂຮງຮຽນຢູ່ໃກ້ບ້ານ, ພວກເດັກນ້ອຍຈຶ່ງຕ້ອງລໍຖ້າ ຈົນໃຫຍ່ພໍທີ່ຈະຍ່າງ ໄປໂຮງຮຽນດ້ວຍຄວາມປອດໄພ ໃນໄລຍະປະມານ 2 ຫາ 3 ກິໂລແມັດເພື່ອໄປໂຮງຮຽນທີ່ໃກ້ທີ່ສຸດ ໄດ້ດ້ວຍຕົວເອງກ່ອນ ຈຶ່ງຄ່ອຍໄດ້ໄປເຂົ້າໂຮງຮຽນ. ສະນັ້ນ ພວກເດັກນ້ອຍເຫລົ່ານັ້ນ ຈຶ່ງເລີ່ມເຂົ້າໂຮງຮຽນຂ້ອນຂ້າງຊ້າ, ໃນເວລາທີ່ພວກເຂົາມີອາຍຸປະມານ 11 ປີ, ແລະ ພວກເຂົາສ່ວນໃຫຍ່ກໍ່ຈະຮຽນພໍແຕ່ອ່ານອອກ ຂຽນເປັນເທົ່ານັ້ນ. ເພາະວ່າ ຫລັງຈາກສອງ ສາມປີ ພວກເຂົາກໍ່ຈະເຫັນວ່າ ພວກເຂົາມີອາຍຸ ຫລາຍກ່ວາຫມູ່ຮ່ວມຫ້ອງຮຽນຄົນອື່ນໆ ແລະ ເດັກນ້ອຍຈຳນວນຫລາຍກໍ່ບໍ່ໄປຮຽນຕໍ່. ອີກເຫດຜົນຫນຶ່ງ ທີ່ເຮັດໃຫ້ເດັກນ້ອຍ ອອກໂຮງຮຽນແມ່ນຄອບຄົວທີ່ມີລູກຫລາຍຄົນ ມັກຈະປະໃຫ້ລູກຜູ້ໃຫຍ່ຢູ່ເຮືອນ ແລະ ເບິ່ງແຍງ ພວກນ້ອງໆ ໃນເວລາທີ່ພໍ່ແມ່ ຕ້ອງໄປເຮັດວຽກຢູ່ໄຮ່ ຢູ່ນາ ຫລື ໄປປ່າ.

## ອຸປະກອນ ແລະ ເຄື່ອງໃຊ້ຕ່າງໆ ໃນໂຮງຮຽນ

ບັນດາອາຄານໂຮງຮຽນແບບງ່າຍດາຍຢູ່ໃນເຂດດັ່ງກ່າວ ແມ່ນ ປະກອບດ້ວຍກະດານດໍາ, ໂຕະ, ແລະ ຕັ່ງ ຊຶ່ງເຮັດໂດຍຊາວບ້ານເອງ ແລະ ກໍ່ໄດ້ຮັບການຊ່ວຍເຫລືອ ຈາກທາງລັດຖະບານ ຂອງເມືອງຫ້ວຍຊາຍ ແລະ ອົງການ Concern Worldwide. ຕາມທໍາມະດາແລ້ວ ພວກເດັກນ້ອຍ ມີໂຕະຕັ່ງພຽງພໍ ແລະ ຍັງຢູ່ໃນສະພາບທີ່ດີ. ນອກຈາກໂຮງຮຽນຢູ່ບ້ານທ່າຟ້າແລ້ວ ໂຮງຮຽນອື່ນໆໃນເຂດນີ້ ບໍ່ມີວິດຖ່າຍ ຫລື ກ໋ອກນໍ້າເລີຍ. ສໍາຫລັບເຄື່ອງຫລິ້ນຂອງເດັກນ້ອຍ ສ່ວນຫລາຍແມ່ນເຄື່ອງອັນກ້ວາງໆ ທີ່ປາສະຈາກ ເຄື່ອງຫລິ້ນກິລາຢ່າງໃດເລີຍ.

ໃນເຂດນີ້ ມີຫໍພັກສໍາຫລັບນັກຮຽນຢູ່ສອງບ່ອນ, ບ່ອນທີ່ຫນຶ່ງແມ່ນຢູ່ບ້ານດອນໃຈ ແລະ ອີກບ່ອນຫນຶ່ງ ຢູ່ບ້ານທ່າຟ້າ. ພວກນັກຮຽນທີ່ມາອາໄສຢູ່ຫໍພັກ ຈະຍ່າງ ຫລື ຂີ່ລົດຖີບ ກັບບ້ານໃນ ທຸກໆຕອນແລງວັນສຸກ ແລະ ກັບມາຫໍພັກອີກໃນຕອນແລງວັນອາທິດ. ຫໍພັກຢູ່ທີ່ບ້ານດອນໃຈ ລວມມີສອງຫລັງ ຊຶ່ງໄດ້ຮັບການ ປຸກສ້າງເປັນເຮືອນແບບເຄິ່ງຖາວອນ, ແຕ່ລະຫລັງມີຂະຫນາດ 5 ແມັດ x 8 ແມັດ, ຫລັງຫນຶ່ງສໍາຫລັບ ເດັກນ້ອຍຜູ້ຊາຍ ແລະ ອີກຫລັງຫນຶ່ງ ແມ່ນສໍາຫລັບເດັກນ້ອຍຜູ້ຍິງ. ພວກເດັກນ້ອຍທີ່ອາໄສຢູ່ຫໍພັກແຫ່ງນີ້ ແມ່ນມີອາຍຸແຕ່ 12 ຫາ 14 ປີ, ຊຶ່ງໃນນັ້ນ ມີເດັກນ້ອຍ ຜູ້ຍິງ 6 ຄົນ ຈາກບັນດາຫມູ່ບ້ານອ້ອມຂ້າງ ຂອງຫໍພັກດັ່ງກ່າວ. ຄູສອນ ແມ່ນມາຈາກ ບ້ານອື່ນ ແລະ ອາໄສຢູ່ເຮືອນຂອງຊາວບ້ານດອນໃຈ. ພວກເດັກນ້ອຍ ພາກັນເອົາເຂົ້າສານ ແລະ ອາຫານມາຈາກບ້ານ ແລະ ຄົວກິນເອງຢູ່ຫໍພັກ. ໃນເວລາທີ່ ພວກເຂົາມີບັນຫາຈໍາເປັນຕ່າງໆ ພວກເຂົາຈະໄປຂໍຄວາມຊ່ວຍເຫລືອເບື້ອງຕົ້ນ ຈາກຊາວບ້ານດອນໃຈ.

## ຄູສອນ

ໃນເຂດນີ້ມີຄູສອນຊັ້ນອະນຸບານ ຈໍານວນ 1 ຄົນ, ຄູປະຖົມ 20 ຄົນ, ແລະ ຄູມັດທະຍົມ 5 ຄົນ. ໃນນັ້ນ ມີພຽງແຕ່ຄູສອນອະນຸບານເທົ່ານັ້ນ ທີ່ເປັນຜູ້ຍິງ ແລະ ກໍ່ບໍ່ໄດ້ຜ່ານການຝຶກອົບຮົມມາເລີຍ, ແຕ່ວ່າ ລາວຮັບຜິດຊອບຫ້ອງຮຽນ ທີ່ມີເດັກນ້ອຍເຖິງ 38 ຄົນ. ສໍາຫລັບຄູສອນໂຮງຮຽນປະຖົມ ທັງຫມົດແມ່ນ ຜູ້ຊາຍ ທີ່ໄດ້ຮັບການຝຶກອົບຮົມການສິດສອນແບບພື້ນຖານ ໃນໄລຍະແຕ່ 1 ເຖິງ 3 ເດືອນ. ພວກເຂົາ ສ່ວນຫລາຍແມ່ນສອນເດັກນ້ອຍຢູ່ໂຮງຮຽນໃນຫມູ່ບ້ານຂອງເຂົາເອງ, ຍົກເວັ້ນ ຄູທີ່ຢູ່ບ້ານຊອດ ແລະ ບ້ານ ມົກຮຸກ. ອັດຕາສ່ວນຂອງຄູຕໍ່ນັກຮຽນໃນເຂດນີ້ ແມ່ນແຕ່ 1:12 ຫາ 1:48. ບັນດາຫ້ອງຮຽນທີ່ມີອັດຕາສ່ວນ ຂອງນັກຮຽນຕໍ່ນາຍຄູທີ່ສູງທີ່ສຸດ ແມ່ນຫ້ອງຮຽນທີ່ສອນຄວບ ທີ່ຢູ່ບ້ານມົກຮຸກ, ບ້ານນາຫລວງ, ແລະ ບ້ານນໍ້າທຸງ. ຜູ້ອໍານວຍການຂອງໂຮງຮຽນ ປະຖົມສົມບູນ ຢູ່ບ້ານດອນໃຈ ຜູ້ຊຶ່ງແມ່ນຊົນເຜົ່າມົ້ງ ໄດ້ຍົກຍ້າຍຄອບຄົວຈາກບ້ານເດີມຂອງລາວ ຫລັງຈາກໄດ້ຖືກສັບຊ້ອນໃຫ້ມາສິດສອນ ຢູ່ທີ່ໂຮງຮຽນ ດັ່ງກ່າວ. ລາວຍັງໄດ້ໃຫ້ການຊີ້ນໍາ ບັນດາໂຮງຮຽນ ປະຖົມອື່ນໆ ໃນເຂດດັ່ງກ່າວອີກດ້ວຍ.

---

*ຖ້າປາສະຈາກ ການໄດ້ຮໍ່າຮຽນ ເທົ່າທີ່ຄວນ ແມ່ນຈະເປັນ ເລື່ອງຍາກ*
*ທີ່ບັນດາເດັກນ້ອຍຜູ້ຍິງ ຈະສາມາດໄດ້ເຂົ້າຮຽນຕໍ່ ໃນລະດັບສູງກ່ວາ*
*ຫລືແມ້ແຕ່ ການໄດ້ຝຶກວິຊາຊີບຕ່າງໆ*

---

ຄູສອນ ຂອງໂຮງຮຽນມັດທະຍົມຕົ້ນ ຢູ່ເຂດດັ່ງກ່າວ ກໍ່ແມ່ນເປັນຜູ້ຊາຍທັງຫມົດ. ພວກເຂົາໄດ້ຜ່ານການຝຶກອົບຮົມໃນໄລຍະສັ້ນ (ປະມານ 2-3 ເດືອນ) ແລະ ໄດ້ຮັບການ ຝຶກອົບຮົມຄືນອີກ ຢູ່ທີ່ສູນຝຶກອົບຮົມຂອງເມືອງຫ້ວຍຊາຍ. ອັດຕາສ່ວນຂອງຄູ ຕໍ່ນັກຮຽນ ໃນຊັ້ນມັດທະຍົມແມ່ນ 1:16. ຄວາມບໍ່ດຸ່ນດ່ຽງທາງດ້ານບົດບາດ ຍິງ-ຊາຍ ໃນຈຳນວນຄູສອນໃນເຂດນີ້ ອາດຈະສະທ້ອນໃຫ້ເຫັນເຖິງສະພາບລວມທີ່ວ່າບົດບາດຂອງແມ່ຍິງໃນຄອບຄົວ ແມ່ນເປັນແຮງງານໃຫ້ຄອບຄົວເທົ່ານັ້ນ: ຖ້າປາສະຈາກ ການໄດ້ຮໍ່າຮຽນເທົ່າທີ່ຄວນ ແມ່ນຈະເປັນ ເລື່ອງຍາກ ທີ່ບັນດາເດັກນ້ອຍຜູ້ຍິງ ຈະສາມາດໄດ້ເຂົ້າຮຽນຕໍ່ ໃນລະດັບສູງກ່ວາ ຫລືແມ້ແຕ່ ການໄດ້ຝຶກວິຊາຊີບຕ່າງໆ.

## ປຶ້ມ ແລະ ຫລັກສູດການສອນ

ໃນໂຮງຮຽນປະຖົມຢູ່ເຂດດັ່ງກ່າວ ແມ່ນມີພຽງ 3 ວິຊາທີ່ໄດ້ຖືກສອນ ໂດຍມີປຶ້ມຄູ່ມືຕາມຫລັກສູດທີ່ເຫມາະສົມຄື: ວິຊາພາສາລາວ, ວິຊາຄະນິດສາດ, ແລະ ວິຊາຄວາມຮູ້ທົ່ວໄປ. ປຶ້ມຄູ່ມືຂອງວິຊາຮຽນ ແມ່ນສະຫນອງ ໃຫ້ໂດຍ ພະແນກສຶກສາເມືອງຫ້ວຍຊາຍ ແລະ ຕາມທຳມະດາ ແມ່ນປ່ອຍໃຫ້ເດັກນ້ອຍນັກຮຽນຢືມໄປໃຊ້ໃນແຕ່ລະປີ, ຊຶ່ງຈະເລີ່ມໃຫ້ຢືມເວລາເປີດສົກຮຽນໃຫມ່ໃນເດືອນກັນຍາ. ມີພຽງແຕ່ບ້ານດຽວໃນເຂດ ດັ່ງກ່າວ, ບ້ານນ້ຳທຸງ, ທີ່ເດັກນ້ອຍຕ້ອງໄດ້ວາງເງິນມັດຈຳ 2,000 ກີບ (ປະມານ 20 ເຊັນຂອງເງິນໂດລາ ສະຫະລັດ) ຕໍ່ການຢືມປຶ້ມ 1 ຊຸດ, ແລະ ພວກເດັກນ້ອຍຈະສົ່ງປຶ້ມຄືນ ໃຫ້ໂຮງຮຽນໃນທ້າຍສົກຮຽນ ເພື່ອໃຫ້ເດັກນ້ອຍລຸ້ນຕໍ່ໄປ ໄດ້ຢືມໄປໃຊ້ຕໍ່.

ຕາຕະລາງຂອງໂຮງຮຽນແມ່ນໄດ້ຖືກຈັດ ໂດຍອີງໃສ່ຫລັກສູດ ແລະ ຕາຕະລາງຂອງທົ່ວປະເທດ ແຕ່ສຳຫລັບກິລາ ແລະ ວັນນະຄະດີ ແມ່ນໄດ້ຮຽນແຕ່ທິດສະດີລວມໆ ເພາະວ່າບໍ່ມີເຄື່ອງອຸປະກອນກິລາ, ບໍ່ມີປຶ້ມຄູ່ມື, ແລະ ກໍ່ບໍ່ມີຫ້ອງສະຫມຸດ. ຫ້ອງສະຫມຸດພຽງແຫ່ງດຽວຂອງເຂດດັ່ງກ່າວ ແມ່ນມີ ຢູ່ບ້ານນ້ຳທຸງ, ຊຶ່ງປະກອບດ້ວຍປຶ້ມຈຳນວນ 137 ຫົວ, ແລະ ຫໍສະຫມຸດດັ່ງກ່າວແມ່ນຮັບຜິດຊອບໂດຍ ສະມາຄົມພໍ່ແມ່ນັກຮຽນຂອງບ້ານດັ່ງກ່າວ. ປຶ້ມທັງຫມົດແມ່ນເກັບໄວ້ໃນຕູ້ລີ້ນຊັກ ແລະ ສາມາດຖືກຢືມໄປອ່ານໄດ້ ໂດຍຈ່າຍຄ່າຢືມປຶ້ມ 100 ກີບ ຕໍ່ປຶ້ມ 1 ຫົວ.

## ສະມາຄົມ ພໍ່ແມ່ນັກຮຽນ

ທາງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຢູ່ຂັ້ນເມືອງ ໄດ້ຈັດຕັ້ງສະມາຄົມພໍ່ແມ່ນັກຮຽນ ໃນ 9 ຫມູ່ບ້ານຂອງເຂດດັ່ງກ່າວ ເພື່ອລະດົມໃຫ້ເດັກນ້ອຍໃນຫມູ່ບ້ານ ແລະ ພໍ່ແມ່ຂອງພວກເຂົາສົ່ງເສີມດ້ານການສຶກສາ ແລະ ເພື່ອປະສານງານກັບທາງ ການຈັດຕັ້ງບ້ານ. ສະມາຄົມພໍ່ແມ່ນັກຮຽນ ຂອງແຕ່ລະບ້ານແມ່ນມີຄະນະຮັບຜິດຊອບ ແຕ່ 3 ຫາ 4 ຄົນ, ແຕ່ວ່າ ແຕ່ລະສະມາຄົມ ບໍ່ໄດ້ມີການຕິດຕໍ່ກັນ, ກິດຈະກຳຂອງແຕ່ລະສະມາຄົມ ແມ່ນແຕກຕ່າງກັນ ຕາມແຕ່ລະບ້ານ ແລະ ກໍ່ບໍ່ໄດ້ເຮັດວຽກໄດ້ດີເທົ່າທີ່ຄວນ.

## ທັດສະນະຄະຕິຂອງເດັກນ້ອຍ ຕໍ່ການເຂົ້າໂຮງຮຽນ

ການສຳພາດແບບແກມໂອ້ລົມກັນ ໄດ້ຖືກປະຕິບັດກັບເດັກນ້ອຍຈຳນວນ 20 ຄົນ, ທີ່ມີອາຍຸແຕ່ 6 ຫາ 15

ປີ ຢູ່ບ້ານນ້ຳແຂວ ຊຶ່ງເປັນຊົນເຜົ່າລະເມດ ໃນປີ 2004. ພວກເດັກນ້ອຍ ສ່ວນໃຫຍ່ມີຄວາມ ຮູ້ສຶກວ່າ ການໄປເຂົ້າໂຮງຮຽນນັ້ນ ເປັນຫນ້າທີ່ອັນຫນຶ່ງທີ່ພໍ່ແມ່ເຂົາໄດ້ມອບຫມາຍໃຫ້ເຮັດ, ຊຶ່ງພວກພໍ່ແມ່ເອງ ກໍ່ໄດ້ຖືກບຸກລະດົມ ໂດຍທາງການຈັດຕັ້ງຂອງລັດ. ມີເດັກນ້ອຍຄົນຫນຶ່ງ ເວົ້າວ່າ: "ຖ້າພວກເຮົາບໍ່ໄປ ໂຮງຮຽນ, ພໍ່ແມ່ຂອງພວກເຮົາຈະຖືກປັບໃຫມ ໂດຍຂັ້ນເທິງ". ໃນເວລາທີ່ ຖືກຖາມວ່າ ພວກເຂົາໄດ້ນຳເອົາ ຄວາມຮູ້ທີ່ພວກເຂົາຮຽນ ມາຈາກໂຮງຮຽນໄປນຳໃຊ້ໃນຊີວິດ ປະຈຳວັນຂອງພວກເຂົາ ຄືແນວໃດ, ບໍ່ມີໃຜ ຕອບຄຳຖາມເລີຍ. ໃນເວລາຖາມວ່າ ພວກເຂົາໄດ້ ຂຽນຈົດຫມາຍ, ຂຽນບົດບັນທຶກ, ຫລື ຂຽນປ້າຍຕ່າງໆ ໃຫ້ຄອບຄົວ ຫລື ໃຫ້ກັບຫມູ່ບ້ານ ຂອງພວກເຂົາບໍ່, ພວກເຂົາທັງຫມົດເວົ້າວ່າ "ບໍ່ເຄີຍຈັກເທື່ອ". ພ້ອມນັ້ນ, ກໍ່ບໍ່ມີໃຜຈັກຄົນເລີຍທີ່ມີໂອກາດໄດ້ອ່ານຫນັງສືພິມ, ຂ່າວສານ, ແລະ ປະກາດ ຕ່າງໆ ເພາະວ່າບໍ່ມີ ຫນັງສືພິມ ຫລື ກະດານຂ່າວສານ ຕ່າງໆ ໃນຫມູ່ບ້ານຂອງພວກເຂົາເລີຍ.

ບັນດາເດັກນ້ອຍທີ່ຖືກສຳພາດ ມີຄວາມຮູ້ສຶກວ່າ ໂຮງຮຽນບໍ່ສາມາດສິດສອນ ຄວາມຮູ້ ແລະ ທັກສະ ອັນຈຳເປັນ ສຳຫລັບວຽກງານການເຮັດໄຮ່ເຮັດນາ ແລະ ສຳຫລັບການດຳລົງຊີວິດຂອງພວກເຂົາ: ຄວາມຮູ້ຫລ່ານີ້ ພວກເຂົາໄດ້ຮຽນຮູ້ ໂດຍການເຮັດວຽກຕົວຈິງ ຊ່ວຍຄອບຄົວຂອງພວກເຂົາ. ໃນເວລາທີ່ຖາມວ່າ ພວກເຂົາຢາກ ເປັນຫຍັງໃນເວລາທີ່ພວກເຂົາໃຫຍ່ຂຶ້ນ, ໃນນັ້ນ ມີພຽງເດັກນ້ອຍຜູ້ຊາຍ (ອາຍຸ 7 ປີ) ພຽງຄົນດຽວໄດ້ເວົ້າວ່າ: "ຂ້ອຍຢາກເປັນ ນາຍບ້ານ". ພວກເດັກນ້ອຍຄົນອື່ນໆຈຶ່ງເວົ້າວ່າ, "ພໍ່ຂອງລາວ ແມ່ນນາຍບ້ານ ແລະ ນັ້ນກໍ່ຄືຈະແມ່ນເຫດຜົນ". ໃນເວລາທີ່ຍົກຕົວຢ່າງ ຂອງບາງອາຊີບຂຶ້ນມາ ໃຫ້ພວກເຂົາເລືອກເຊັ່ນ: ພະຍາບານ, ຫມໍຕຳແຍ, ຫລື ນາຍຄູ, ເດັກນ້ອຍແມ່ຍິງ (ອາຍຸ 14 ປີ) ຄົນຫນຶ່ງເວົ້າວ່າ: "ມີຫມໍຕຳແຍໃນບ້ານຂອງພວກເຮົາໄດ້ຮັບການ ຝຶກອົບຮົມ ໃນຫລາຍປີຜ່ານມາແລ້ວ ແລະ ພວກເຂົາ ກໍ່ບໍ່ສາມາດຊ່ວຍຜູ້ຍິງ ໃນການເກີດລູກໄດ້ເລີຍ - ຜູ້ທີ່ຊ່ວຍໄດ້ແມ່ນບັນດາພວກແມ່ເຖົ້າ ຂອງພວກເຮົາ. ຂ້ອຍຄິດວ່າ ໃນເວລາທີ່ພວກເຮົາໃຫຍ່ຂຶ້ນ, ພວກເຮົາຈະໄດ້ຮຽນຮູ້ປະສົບການ ດ້ວຍຕົວຂອງພວກເຮົາເອງ ໂດຍການເກີດລູກຂອງພວກເຮົາ, ແລະ ພວກເຮົາກໍ່ຈະສາມາດ ຊ່ວຍເຫລືອ ຜູ້ອື່ນໄດ້. ພວກແມ່ຍິງທີ່ເຖົ້າແກ່ ໃນບ້ານຂອງພວກເຮົາ ກໍ່ລ້ວນແຕ່ ສາມາດ ຊ່ວຍໃນການເກີດລູກໄດ້ຫມົດ".

---

*ໃນເວລາທີ່ ຖືກຖາມວ່າ ພວກເຂົາໄດ້ນຳເອົາ*
*ຄວາມຮູ້ທີ່ພວກເຂົາຮຽນ ມາຈາກໂຮງຮຽນໄປນຳໃຊ້ໃນຊີວິດ*
*ປະຈຳວັນຂອງພວກເຂົາ ຄືແນວໃດ, ບໍ່ມີໃຜ ຕອບຄຳຖາມເລີຍ*

---

ທັດສະນະຄະຕິຂອງພວກເດັກນ້ອຍ ຕໍ່ການເຂົ້າໂຮງຮຽນແມ່ນມີຫລາກຫລາຍ ອີງຕາມສະພາບແວດລ້ອມ ຂອງແຕ່ລະບ້ານ. ຕົວຢ່າງ, ພວກເດັກນ້ອຍຈາກບ້ານຫວຍທະ (ຊຶ່ງແມ່ນບ້ານເຜົ່າມົ້ງ), ສ່ວນຫລາຍ ຢາກເປັນນາຍຄູ ໃນເວລາໃຫຍ່ຂຶ້ນມາ. ຊຶ່ງເລື່ອງນີ້ ອາດຈະກ່ຽວກັບຄວາມເປັນຈິງທີ່ວ່າ ຫົວຫນ້າ ອຳນວຍການຂອງໂຮງຮຽນປະຖົມສົມບູນ ບ້ານດອນໃຈ ແລະ ຫົວຫນ້າເຂດນັ້ນ ແມ່ນຄົນມົ້ງ ທີ່ມາຈາກ ບ້ານຫ້ວຍທະເຊັ່ນດຽວກັນ. ຄວາມກ້າວຫນ້າໃນວຽກງານຂອງຜູ້ຊາຍຄົນນີ້ ໄດ້ເປັນສິ່ງທີ່ລະດົມຈິດໃຈ ບັນດາເດັກນ້ອຍຢູ່ບ້ານຫ້ວຍທະ, ຊຶ່ງເດັກນ້ອຍໃນເກນອາຍຸເຂົ້າຮຽນທັງຫມົດ ແມ່ນໄດ້ເຂົ້າໂຮງຮຽນຫມົດ. ສ່ວນຢູ່ທີ່ບ້ານດອນໃຈ (ຊຶ່ງເປັນບ້ານເຜົ່າໄຕລື້) ມີພວກເດັກນ້ອຍຜູ້ຊາຍ ຈຳນວນຫລາຍຢາກເປັນ

ຄົນຂັບລົດບັນທຸກ ແລະ ມີເດັກນ້ອຍ ຜູ້ຍິງຈຳນວນຫລາຍ ຢາກຈະເປັນ ເຈົ້າຂອງຮ້ານຂາຍເຄື່ອງຍ່ອຍ ຫລື ຂາຍອາຫານ. ຄວາມໄຝ່ຝັນ ຂອງພວກເຂົາ ເບິ່ງແລ້ວອາດຈະກົງວກັບ ຄວາມຈິງທີ່ວ່າ ຫມູ່ບ້ານຂອງ ພວກເຂົາແມ່ນຕັ້ງຢູ່ແຄມທາງໃຫຍ່ ແລະ ແມ່ນຈຸດທີ່ຂະບວນລົດບັນທຸກຢຸດ ພັກເຊົາລະຫວ່າງການ ເດີນທາງ. ມີເດັກນ້ອຍແມ່ຍິງຈຳນວນຫນຶ່ງ ທີ່ເຄີຍເຫັນບັນດາພະນັກງານຜູ້ຍິງ ຈາກອົງການຊ່ວຍເຫລືອ ທີ່ບໍ່ຂຶ້ນກັບລັດຖະບານ ທີ່ມາເຮັດວຽກຢູ່ບ້ານຂອງພວກເຂົາຫລາຍຄັ້ງ ກໍ່ເຮັດໃຫ້ພວກເຂົາ ເກີດຄວາມ ສົນໃຈ ທີ່ຢາກຈະເຮັດວຽກຄືພວກພະນັກງານດັ່ງກ່າວ. ສິ່ງນີ້ໄດ້ສະແດງໃຫ້ເຫັນວ່າ ເດັກນ້ອຍຢູ່ເຂດ ມີກສຸກ-ທ່າຟ້າ ຍັງຂາດຂໍ້ມູນຂ່າວສານຈາກໂລກພາຍນອກ ແລະ ຂາດຜູ້ຊຶ່ງເປັນຕົວແບບ ໃຫ້ແກ່ພວກເຂົາ ເພື່ອເປັນສິ່ງຈູງໃຈ ໃຫ້ພວກເຂົາຢາກຮຽນຫນັງສື. ໃນຂະນະທີ່ ໃນບາງຄັ້ງ ມັນກໍ່ມີຜົນ ທາງບວກຕໍ່ພວກເຂົາ ໃນການທີ່ພວກເຂົາບໍ່ຕ້ອງຮຽນຮູ້ຈາກທາງນອກເພື່ອທີ່ຈະສືບຕໍ່ ການເຮັດໄຮ່ ເຮັດສວນ ແບບພື້ນເມືອງ ທີ່ສືບທອດກັນມາເປັນເວລາອັນຍາວນານ, ແຕ່ວ່າມັນກໍ່ອາດຈະມີປະໂຫຍດ ຕໍ່ພວກເຂົາຖ້າວ່າພວກເຂົາ ຫາກໄດ້ຮັບຂໍ້ມູນຂ່າວສານຫລາຍໆຢ່າງ ເພື່ອເຮັດໃຫ້ພວກເຂົາ ໄດ້ເພີ່ມເຕີມຄວາມຄິດ ໃນການຊອກຫາ ສິ່ງທີ່ພວກເຂົາຈະສາມາດ ປະກອບສ່ວນເຂົ້າໃນ ການພັດທະນາ ຄອບຄົວ ແລະ ຊຸມຊົນຂອງພວກເຂົາ ໃນອະນາຄົດ.

## ການສຶກສານອກລະບົບ

ໄດ້ມີຫລາຍຄວາມພະຍາຍາມທີ່ຈະເລີ່ມກິດຈະກຳການສຶກສານອກລະບົບ (ປະຊາສຶກສາ) ໃນເຂດ ມີກສຸກ-ທ່າຟ້າ. ແຕ່ວ່າ ບໍ່ທັນມີໂຄງການໃດເຮັດໄດ້ດົນ, ເຖິງແມ່ນວ່າບາງຫມູ່ບ້ານໄດ້ພະຍາຍາມທີ່ສຸດ ເພື່ອຈະເຮັດໃຫ້ຫ້ອງຮຽນໄດ້ສືບຕໍ່ ເຖິງວ່າເງື່ອນໄຂຈະບໍ່ຄ່ອຍຈະອຳນວຍເທົ່າໃດ, ເຊັ່ນ: ການຮຽນຕອນຄ່ຳ ທີ່ບໍ່ມີແສງໄຟຟ້າ. ໃນປີ 2004, ໂຄງການການສຶກສານອກລະບົບ ໄດ້ຖືກຈັດຂຶ້ນ ໃນຊ່ວງແຕ່ ເດືອນທັນວາ ຫາ ເດືອນມີນາ, ໃນ 7 ຫມູ່ບ້ານຂອງເຂດດັ່ງກ່າວຄື: ປາງສະລາວ, ດອນຄຳ, ມີກຮຸກ, ນາຫລວງ, ນ້ຳທຸງ, ນາງາມ, ແລະ ທ່າຟ້າ. ຫ້ອງຮຽນສ່ວນຫລາຍ ແມ່ນຈັດຂຶ້ນຢູ່ໂຮງຮຽນ ປະຖົມຂອງຫມູ່ບ້ານ, ໃຊ້ເວລາຮຽນ ປະມານ 2-3 ຊົ່ວໂມງ, ໃນລະຫວ່າງ 5 ຫາ 8 ໂມງແລງ, ແຕ່ວັນຈັນ ເຖິງວັນສຸກ ໂດຍການໄຕ້ທຽນ ຫລື ຕະກຽງນ້ຳມັນກາດ.

ໃນສົກຮຽນປີ 1999 - 2000, ໄດ້ມີຜູ້ໃຫຍ່ ລົງທະບຽນຮຽນ ປະຊາສຶກສາ ເຖິງ 210 ຄົນ (ໃນນັ້ນ 54% ແມ່ນແມ່ຍິງ), ຢູ່ໃນ 3 ຊັ້ນຮຽນ (ແຕ່ ປໍ 1 ເຖິງ ປໍ 3), ແຕ່ວ່າພວກເຂົາສ່ວນໃຫຍ່ ກໍ່ບໍ່ໄດ້ ໄປຮຽນຢ່າງເປັນ ປົກກະຕິ. ພວກເຂົາສ່ວນຫລາຍແລ້ວ ແມ່ນຫ້າວຫັນດີ ໃນຕອນເລີ່ມຕົ້ນ, ແຕ່ຄວາມກະຕືລືລົ້ນກໍ່ຫລຸດລົງ ຍ້ອນວ່າຫລາຍຄົນ ມີຄວາມກົດດັນໃນເລື່ອງທີ່ຈະຕ້ອງກັງວົນນຳຊີວິດການເປັນ ຢູ່ຂອງພວກເຂົາ ແລະ ຄອບຄົວໃນແຕ່ລະວັນ. ສ່ວນຜູ້ອື່ນໆ ແມ່ນຕັ້ງບໍ່ມາເຂົ້າຮຽນເລີຍ ເພາະວ່າ ພວກເຂົາອາຍ ແລະ ຮູ້ສຶກວ່າພວກເຂົາຄົງຈະເສັງບໍ່ໄດ້.

ໃນປີ 2004, ຄູສອນຫ້ອງຮຽນນອກລະບົບໃນເຂດດັ່ງກ່າວ ລວມມີ 13 ຄົນ ຊຶ່ງແມ່ນຜູ້ຊາຍທັງຫມົດ. ພວກເຂົາລ້ວນແຕ່ ມີການສຶກສາຂັ້ນພື້ນຖານ ແລະ ໄດ້ຖືກເລືອກໃຫ້ເປັນຄູສອນ ຫ້ອງຮຽນ ນອກລະບົບ ໃນຫມູ່ບ້ານຂອງພວກເຂົາເອງ. ພາຍຫລັງໄດ້ຖືກເລືອກ ພວກເຂົາໄດ້ຮັບການ ຝຶກອົບຮົມ, ຊຶ່ງຈັດໃຫ້ ໂດຍລັດຖະບານຂອງເມືອງ ແລະ ອົງການຊ່ວຍເຫລືອທີ່ບໍ່ຂຶ້ນກັບລັດຖະບານ. ສຳຫລັບ ເງິນຄ່າແຮງງານ

ປະຈຳເດືອນ ຂອງພວກນາຍຄູ ແມ່ນໄດ້ 17,500 ກີບ / 1 ຫ້ອງ ແລະ ຈະຖືກຈ່າຍ ເປັນກ້ອນໃນທ້າຍປີຮຽນ ໂດຍລັດຖະບານຂອງເມືອງ. ພວກນາຍຄູຍັງໄດ້ຮັບເງິນພິເສດຕື່ມອີກ ຖ້າວ່ານັກຮຽນຂອງພວກເຂົາ ສອບເສັງເລື່ອນຊັ້ນໄດ້ ໃນຈຳນວນ 15,000 ກີບ ຕໍ່ນັກຮຽນເສັງໄດ້ 1 ຄົນ ແລະ 5,000 ກີບ ຕໍ່ນັກຮຽນ 1 ຄົນ (ຜູ້ທີ່ພວກເຂົາໄດ້ສອນ ແຕ່ເສັງບໍ່ໄດ້) ໃນທ້າຍປີຮຽນ.

**ສະຫລຸບ**

ໃນອະດີດທີ່ຜ່ານມາ ເດັກນ້ອຍລາວໄດ້ຮຽນຮູ້ ຄວາມຮູ້ແບບພື້ນເມືອງ ທີ່ກ່ຽວກັບຊີວິດປະຈຳວັນ ຂອງພວກເຂົາ ຈາກພວກຜູ້ໃຫຍ່ ແລະ ເຖົ້າແກ່ຢູ່ໃນບ້ານ ແລະ ພໍ່ແມ່ຂອງພວກເຂົາເອງ. ເດັກນ້ອຍຊົນເຜົ່າທີ່ຢູ່ຕາມຫມູ່ບ້ານ ຊົນນະບົດ ສ່ວນຫລາຍແມ່ນ ຮຽນຄວາມຮູ້ ແລະ ທັກສະຈາກການປະຕິບັດວຽກງານຕົວຈິງ ຊຶ່ງມັນແຕກຕ່າງຈາກສິ່ງທີ່ພວກເຂົາໄດ້ຮຽນ ໃນຫ້ອງຮຽນສາມັນສຶກສາ. ຍ້ອນມີປະສົບການໃນການຮຽນຮູ້ແບບພື້ນເມືອງ, ພວກເດັກນ້ອຍຫລ່ານີ້ມີຄວາມຮູ້ສຶກວ່າ ຄວາມຮູ້ໃນການດຳລົງຊີວິດຂອງພວກເຂົາ ບໍ່ໄດ້ຖືກສິດສອນໃຫ້ທີ່ໂຮງຮຽນ.

ວັດຖະນະທຳ ແລະ ລະບົບຄວາມເຊື່ອຖືບາງຢ່າງ ຂອງບັນດາຊົນເຜົ່າຢູ່ໃນເຂດດັ່ງກ່າວ ບາງຄັ້ງໄດ້ກາຍເປັນບັນຫາໃນການ ເຮັດໃຫ້ໂອກາດທີ່ຈະໄດ້ຮັບການສຶກສາ ຂອງເດັກນ້ອຍ ຫລຸດລົງ, ໂດຍສະເພາະເດັກນ້ອຍຜູ້ຍິງ, ແລະ ໄດ້ກາຍເປັນອຸປະສັກອັນສຳຄັນ ຕໍ່ຄວາມພະຍາຍາມທີ່ຈະເຮັດໃຫ້ ແມ່ຍິງໄດ້ຮັບການສຶກສາເພີ່ມຂຶ້ນ ໃນຊຸມຊົນດັ່ງກ່າວ. ຖ້າບັນຫາດັ່ງກ່າວບໍ່ໄດ້ຮັບການແກ້ໄຂ, ແມ່ຍິງ ກໍ່ຈະບໍ່ໄດ້ມີການສຶກສາສູງຂຶ້ນ ແລະ ບໍ່ໄດ້ມີສ່ວນຮ່ວມໃນການຕັດສິນບັນຫາຕ່າງໆ, ຄຳຄິດຄຳເຫັນ ຂອງພວກແມ່ຍິງ ກໍ່ຈະຍັງສືບຕໍ່ບໍ່ໄດ້ຖືກຍົກຂຶ້ນມາ ຫລືບໍ່ມີໃຜເວົ້າເຖິງເລີຍ. ຄວາມທຸກຈົນ ກໍ່ແມ່ນປັດໄຈ ທີ່ສຳຄັນອັນຫນຶ່ງ ທີ່ເຮັດໃຫ້ພໍ່ແມ່ບໍ່ໄດ້ເອົາໃຈໃສ່ ລະດົມລູກໃຫ້ເຂົ້າ ໂຮງຮຽນ ຫລື ຊອກຮຽນຮູ້ ເອົາຄວາມຮູ້ເສີມອື່ນໆ ໃສ່ຕົວເຂົາເອງ. ພວກເຂົາສ່ວນຫລາຍ ແມ່ນຖືກ ສະພາບແວດລ້ອມບັງຄັບ ໃຫ້ເຂົາຄິດເຖິງ ພຽງແຕ່ຄວາມຢູ່ລອດ ຂອງມື້ນີ້ ຫລາຍກວ່າທີ່ຈະຄິດເຖິງ ຊ່ອງທາງໃນການສ້າງອະນາຄົດ. ການຕັ້ງບ້ານ ຢູ່ແບບກະແຈກກະຈາຍ ຂອງຊາວບ້ານໃນເຂດດັ່ງກ່າວ ແລະ ການຍົກຍ້າຍບ້ານເຮືອນເລື້ອຍໆ ອັນເນື່ອງ ມາຈາກຄວາມເຊື່ອຖືຕ່າງໆ ແມ່ນລ້ວນແຕ່ເປັນ ບັນຫາທີ່ທ້າທາຍ ຕໍ່ທັງຝ່າຍລັດ ແລະ ອົງການຊ່ວຍເຫລືອທີ່ບໍ່ຂຶ້ນກັບລັດຖະບານຕ່າງໆ ໃນຄວາມພະຍາຍາມທີ່ຈະ ປັບປຸງ ແລະ ສົ່ງເສີມດ້ານການສຶກສາ.

ໂຮງຮຽນໃນເຂດດັ່ງກ່າວ ກໍ່ບໍ່ໄດ້ມີການປັບ ເພື່ອໃຫ້ແທດເຫມາະ ກັບສະພາບຂອງພວກເດັກນ້ອຍສະເຫມີໄປ. ແຕ່ທີ່ຈິງແລ້ວ ແມ່ນພວກເດັກນ້ອຍເອງ ເປັນຜູ້ທີ່ຕ້ອງໄດ້ປັບໂຕເອງ ໄປຕາມຫລັກສູດຂອງໂຮງຮຽນ, ພາສາທີ່ໃຊ້ໃນການສິດສອນ, ແລະ ຕາຕະລາງຂອງຫ້ອງຮຽນ, ຊຶ່ງບໍ່ມີສິ່ງໃດຈະຕົງກັບຄວາມຕ້ອງການຂອງພວກເດັກນ້ອຍເລີຍ. ສະຫລຸບແລ້ວ, ໂຮງຮຽນໃນເຂດດັ່ງກ່າວ ແມ່ນບໍ່ສາມາດ ຈະຕອບສະຫນອງຫລັກສູດ ແລະ ກິດຈະກຳພິເສດຕ່າງໆ ທີ່ຈະເປັນສິ່ງຈູງໃຈ ໃຫ້ພວກເດັກນ້ອຍ ມາເຂົ້າໂຮງຮຽນ.

**ພາກແນະນຳ**

ເພື່ອປັບປຸງສະພາບການທີ່ເປັນຢູ່ໃນປະຈຸບັນ, ການດຳເນີນໂຄງການໃນອະນາຄົດ ໃນເຂດ ນ້ຳສຸກ-ທ່າຟ້າ ແລະ ເຂດອື່ນໆ ທີ່ມີບັນຫາທີ່ຄ້າຍຄືກັນ ອາດຈະໄດ້ເອົາໃຈໃສ່ ໃນບາງຂໍ້ແນະນຳຕ່າງໆ ດັ່ງລຸ່ມນີ້:

1) ໂຄງການປັບປຸງດ້ານການສຶກສາ ຄວນຈະຕ້ອງໄດ້ດຳເນີນໄປຄຽງຄູ່ກັບວຽກງານ ໃນຂະແໜງການອື່ນໆ. ບັນຫາໃນການດຳລົງຊີວິດແຕ່ລະວັນ ເຊັ່ນ: ການຊອກຫາອາຫານ ແລະ ບັນຫາເລື່ອງການຮັກສາສຸຂະພາບ ແມ່ນຕ້ອງໄດ້ຮັບການແກ້ໄຂໃຫ້ດີຂຶ້ນເຊັ່ນກັນ ຈຶ່ງຈະເຮັດໃຫ້ວຽກງານດ້ານ ການສຶກສາສາມາດກ້າວໜ້າ ແລະ ພັດທະນາຫລາຍຂຶ້ນ.
2) ຫລັກສູດການສອນ ຄວນຈະສາມາດປັບປ່ຽນ ແລະ ສາມາດລວມເອົາ ສິ່ງຕ່າງໆ ທີ່ກ່ຽວພັນເຖິງສະພາບແວດລ້ອມ ຂອງນັກຮຽນໃນເຂດດັ່ງກ່າວ. ການສຶກສາ ບໍ່ຄວນຈະມີເປົ້າໝາຍພຽງແຕ່ເຮັດໃຫ້ພວກເຂົາສາມາດອ່ານອອກຂຽນເປັນເທົ່ານັ້ນ, ແຕ່ຄວນຈະໃຫ້ ມີຄວາມແທດເໝາະກັບສະພາບແວດລ້ອມ ແລະ ຄວາມເປັນຈິງ ຫລື ມີຄວາມກ່ຽວພັນກັບຊີວິດປະຈຳວັນ ຂອງພວກເດັກນ້ອຍ.
3) ຫໍສະໝຸດແບບຖາວອນ ຫລື ແບບເຄື່ອນທີ່ ຄວນຈັດໃຫ້ມີໃນເຂດດັ່ງກ່າວ ເພື່ອເສີມຂະຫຍາຍຄວາມສຳນຶກ ແລະ ຈິນຕະນະການຕໍ່ໂລກກ້ວາງຂອງພວກເດັກນ້ອຍ, ເພື່ອເພີ່ມພູນນິໄສມັກໃນການອ່ານປຶ້ມ ໃຫ້ແກ່ພວກເດັກນ້ອຍ, ເປັນການລະດົມໃຫ້ພວກເຂົາຊອກຫາຄວາມຮູ້, ຫລື ພຽງແຕ່ເພື່ອໃຫ້ພວກເຂົາໄດ້ມີບ່ອນທີ່ ພວກເຂົາສາມາດມີຄວາມເພີດເພີນໃນການ ອ່ານປຶ້ມໃນເວລາຫວ່າງຂອງພວກເຂົາ.
4) ຖ້າການສ້າງໂຮງຮຽນຢູ່ໃນໝູ່ບ້ານນ້ອຍໆ ບໍ່ສາມາດເປັນໄປໄດ້, ຍ້ອນວ່າມີຈຳນວນເດັກນ້ອຍໜ້ອຍເກີນໄປ, ຫໍພັກທີ່ມີຢູ່ ກໍ່ຄວນໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ອຳນາດການປົກຄອງທ້ອງຖິ່ນ ຄວນໃຫ້ຄວາມຊ່ວຍເຫລືອເທົ່າທີ່ຄວນ ແກ່ພວກເດັກນ້ອຍທີ່ມີຄວາມຈຳເປັນຕ້ອງໄດ້ ມາຢູ່ຫໍພັກ.
5) ການຈັດຕັ້ງຊຸມຊົນຕ່າງໆ ຄວນໄດ້ຮັບການປັບປຸງ ໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ ແລະ ຫໍປະຊຸມ ຫລື ສູນລວມ ຂອງຊຸມຊົນ ຄວນຖືກສ້າງຂຶ້ນ ເພື່ອເຮັດໃຫ້ຊາວບ້ານທັງຫລາຍໄດ້ມີບ່ອນປຶກສາ ຫາລື ແລະ ແລກປ່ຽນບົດຮຽນນຳກັນ ໃນເວລາທີ່ມີບັນຫາ, ຫລືແມ້ກະທັ້ງເປັນບ່ອນທີ່ພວກເຂົາໄດ້ຊອກຫາຄຳແນະນຳ ຈາກຜູ້ທີ່ມີຄວາມຮູ້ ແລະ ຄວາມຊຳນານດ້ານຕ່າງໆ ຈາກຄົນທາງໃນ ແລະ ນອກຊຸມຊົນ ຂອງພວກເຂົາ.
6) ແລະ ສຸດທ້າຍ, ຄວນລະດົມໃຫ້ມີຜູ້ເປັນແບບຢ່າງຂອງຊຸມຊົນ. ການຈັດຕັ້ງບ້ານ, ພະແນກຕ່າງໆ ຂອງລັດ, ແລະ ໂຄງການພັດທະນາຂອງອົງການຊ່ວຍເຫລືອທີ່ບໍ່ຂຶ້ນກັບລັດຖະບານ ຄວນເພີ່ມຈຳນວນ ພະນັກງານ ແມ່ຍິງຂຶ້ນອີກ ເພື່ອໄປເຮັດວຽກຮ່ວມກັບຊາວບ້ານ ຢູ່ໃນຊຸມຊົນ ເພື່ອເປັນການເພີ່ມຈິດສຳນຶກ ໃຫ້ແກ່ພວກເດັກນ້ອຍ ກ່ຽວກັບບົດບາດຂອງແມ່ຍິງ ທີ່ເຮັດວຽກເພື່ອຊຸມຊົນ ແລະ ສັງຄົມ.

## ກ່ຽວກັບຜູ້ຂຽນ

ຈິດຕະລັດ ແສງອຳພອນ (chithtalath@yahoo.com ຫລື sengamphone@mrcmekong.org) ປະຈຸບັນ ໄດ້ສຳເລັດການສຶກສາ ໃນລະດັບປະລິນຍາເອກ ຈາກພະແນກ ມະນຸດ ແລະ ວິທະຍາສາດ, ມະຫາວິທະຍາໄລແມ່ຍິງ ນາລະ, ປະເທດຍີປຸ່ນ. ປະຈຸບັນ ຜູ້ກ່ຽວເຮັດວຽກຢູ່ ຫ້ອງການກອງເລຂາ ຄະນະກຳມາທິການ ແມ່ນ້ຳຂອງ ສາກົນ ທີ່ ນະຄອນຫລວງວຽງຈັນ.

### ເອກະສານອ້າງອີງ

Brami A. 2001. *Bokeo Integrated Rural Development (BIRD) Participatory Rural Appraisal*. Bokeo.

Chithtalath S. 2006. *A Study of Development Projects and Ethnic Minorities in the MoksukTafa Area, Bokeo Province, Lao PDR*. Unpublished Doctoral Dissertation, Graduate School of Humanities and Sciences, Nara Women's University, Japan.

GoL. 2003. *National Poverty Eradication Programme*. Vientiane.

Izikowitz, K. G. & Needham, R. 1979. *Lamet – Hill Peasants in French Indochina*. AMS Press. New York. Originally in *Etnografiska studies*, No 17, 1951. Etnografiska museet, Gothenburg.

Ngaosyvathn M. 1995. *Lao Women Yesterday and Today*. State Printing Enterprise. Vientiane.

State Planning Committee, National Statistics Centre. 1997. *Results from the Population Census 1995*. Vientiane.

Stuart-Fox, M. 1995. Foreword to Ngaosyvathn, M. *Lao Women Yesterday and Today*. State Printing Enterprise. Vientiane.

# ການນຳໃຊ້ທຳມະເຂົ້າໃນໃນສັງຄົມຮ່ວມສະໄຫມ: ສາສະຫນາພຸດທີ່ເຊື່ອມເຂົ້າກັບສັງຄົມ ກັບ ວຽກງານການພັດທະນາໃນ ສປປ ລາວ

ໂດຍ: Patrice Ladwig

*ສາສະຫນາພຸດ, ເປັນມໍລະດົກຕົກທອດທີ່ຝັງຕິດກັບວັດທະນະທຳຂອງລາວ, ແຕ່ບໍ່ຖືກຖືວ່າເປັນພື້ນຖານ ສຳຄັນ ໃນຂະບວນການສ້າງສາ ແລະ ພັດທະນາ ຢູ່ໃນ ສປປ ລາວ. ບົດຄວາມສະບັບນີ້ ໄດ້ວິເຄາະວ່າ ສາສະຫນາພຸດຈະສາມາດຊ່ວຍເຂົ້າ ໃນການພັດທະນາໄດ້ແນວໃດໂດຍໄດ້ສຶກສາບາງ ບົດບາດອັນດັ້ງເດີມ ແລະ ບົດບາດທີ່ເກີດຂຶ້ນໃຫມ່ຂອງສາສະຫນາພຸດໃນສັງຄົມ. ການວິເຄາະນີ້ພົວພັນເຖິງການພັນລະນາກ່ຽວກັບ ແນວຄວາມຄິດ ”ທຶນຮອນທາງສັງຄົມ” ທີ່ກ່ຽວຂ້ອງກັບສາສະຫນາພຸດຂອງລາວໂດຍຫຍໍ້, ຈາກນັ້ນ ຈະເວົ້າເຖິງ ວຽກງານສັງຄົມສົງເຄາະ 3 ຂະແຫນງການ ໃນປະຈຸບັນ ທີ່ສະຖາບັນພະສົງມີສ່ວນຮ່ວມນຳ. ພາຍຫລັງທີ່ໄດ້ສະເຫນີສາສະຫນາພຸດ ສຳລັບໂຄງການການພັດທະນາໂດຍຫຍໍ້ແລ້ວ, ໃນບົດສະຫລຸບ, ນອກຈາກຈະກ່າວ ເຖິງຈຸດດີ ຂອງ ການປະສົມປະສານ ສາສະຫນາພຸດໃສ່ກັບວຽກງານການພັດທະນາບາງຂະແຫນງແລ້ວ, ຍັງຈະກ່າວເຖິງ ບັນຫາທີ່ຫລີກລ້ຽງບໍ່ໄດ້ ແລະ ຂໍ້ຈຳກັດຂອງການປະສົມປະສານ ດັ່ງກ່າວ.*

ສາສະຫນາພຸດ ແລະ ສາສະຫນາ ໂດຍທົ່ວໄປແລ້ວ ກ່ຽວຂ້ອງແນວໃດ ກັບການພັດທະນາ ທີ່ຍັງຖືກຖືວ່າເປັນກົນໄກໃນການຂັບເຄື່ອນ ການເຄື່ອນໄຫວຂອງສັງຄົມຢ່າງມີເຫດຜົນ? ບາງຄົນອາດຈະລວມເອົາສາດສະຫນາ ເຂົ້າກັບປະເພນີ, ເຂົ້າກັບພິທີກຳຕ່າງໆ ແລະ ເຂົ້າກັບໂລກຈິດວິນຍານ ແລະ ໃນຂະນະດຽວກັນ ກໍ່ຖືເອົາສາສະຫນາປະສານເຂົ້າກັບ ວິທະຍາສາດ, ການວາງແຜນ ແລະ ການເຄື່ອນໄຫວທາງໂລກ. ເຖິງແມ່ນວ່າ “ວັດທະນະທຳ” ຈະເປັນທີ່ຮັບຮູ້ຢ່າງກ້ວາງຂວາງ ວ່າເປັນພາກສ່ວນທີ່ສຳຄັນ ຂອງຂະບວນການ ການພັດທະນາ, ສາສະຫນາ, ເຖິງວ່າ ໂດຍເນື້ອໃນແລ້ວ ກໍ່ເປັນສ່ວນຫນຶ່ງທີ່ຕິດກັບວັດທະນາທຳ, ພັດບໍ່ຖືກຖືວ່າເປັນ ຮາກເຫງົ້າອັນສຳຄັນ ສຳລັບ ການປັບປຸງຂະບວນການ ການພັດທະນາ ຢ່າງຫນ້າແປກໃຈ. ເຖິງຢ່າງໃດກໍ່ຕາມ, ແນວຄິດໃນການເຊື່ອມໂຍງອົງການສາສະຫນາຕ່າງໆ ກັບການພັດທະນາບາງຂະແຫນງ - ແລະ ກ້າວໄປສູ່ຂະບວນ ການພັດທະນາ ທີ່ລວມເອົາທັງຮູບການນຳໃຊ້ສຽງ ແລະ ການປາຖະກະຖາ ຫລື ການບັນລະຍາຍ ຈາກພາຍໃນວັດທະນະທຳໃດຫນຶ່ງ - ສະແດງເຖິງແນວຄິດ ຊຶ່ງເປັນທາງເລືອກຫນຶ່ງໃນຂະບວນ ການພັດທະນາທີ່ມີອະນຸພາບ ທີ່ບໍ່ຄວນຖືກມອງຂ້າມ.

ເມື່ອເວົ້າ ເຖິງ ສປປ ລາວ, ຄົນສ່ວນຫລາຍຈະເຫັນພ້ອມກັນວ່າສາສະຫນາພຸດມີບົດບາດອັນສຳຄັນໃນຊີວິດ ປະຈຳວັນ ສຳລັບປະຊາຊົນລາວຊົນເຜົ່າລາວລຸ່ມສ່ວນຫລາຍ ແລະ ປະຊາຊົນເຜົ່າສ່ວນຫນ້ອຍອື່ນໆທີ່ນັບຖືສາສະຫນາພຸດ. ເພື່ອໃຫ້ສາມາດນຶກເຫັນພາບຄວາມສຳຄັນດັ່ງກ່າວ, ມັນມີຄວາມຈຳເປັນທີ່ຈະຊີ້ໃຫ້ເຫັນວ່າ ສາສະຫນາພຸດນິກາຍມະຫາຍານ ຫລື ນິກາຍເຖລະວາດບໍ່ໄດ້ຖືກແຍກອອກ ຈາກສັງຄົມລາວ ຢ່າງໂດດດ່ຽວ ຫລື ບໍ່ພຽງແຕ່ປະຕິບັດ ແລະ ນັບຖືຢູ່ພຽງແຕ່

ໃນວັດໃນວາ ຫລື ສາສະຫນາຈັກເທົ່ານັ້ນ. ເວົ້າໃຫ້ຖືກແທ້, ຄຸນຄ່າ ແລະ ແນວຄິດຂອງສາສະຫນາພຸດນິກາຍມະຫາຍານແມ່ນພົບເຫັນໄດ້ໃນສັງຄົມ. ເຖິງວ່າບັນດາຮີດຄອງປະເພນີຫລາຍໆ ຢ່າງທາງດ້ານສາສະຫນາ ຈະເບິ່ງຄື ກັບວ່າ ໂດຍທຳມະຊາດແລ້ວແມ່ນບໍ່ກ່ຽວຂ້ອງກັບປະຫວັດສາດ ແລະ ບໍ່ມີຄວາມເປັນຈິງ, ປະເພນີຫລ່ານັ້ນ ແມ່ນໄດ້ຖືກຕີຄວາມຫມາຍຄືນອີກຢູ່ຕະຫລອດເວລາ ເພື່ອຮັກສາໃຫ້ປະເພນີເຫລົ່ານັ້ນມີ ຄວາມຫມາຍຕໍ່ກັບຊີວິດປະຈຳວັນຂອງຜູ້ທີ່ນັບຖືສາສະຫນາພຸດ. ການປະຕິບັດຢ່າງບໍ່ສະຫມ່ຳສະເຫມີໃນສັງຄົມ, ອັນເນື່ອງຈາກບາງປັດໄຈເຊັ່ນ: ການກ້າວໄປສູ່ຄວາມທັນສະໄຫມຢ່າງໄວວາ ແລະ ຜົນກະທົບຂອງໂລກໂລກາວິວັດ, ໄດ້ກາຍເປັນສາເຫດຂອງການຫັນປ່ຽນແນວຄິດ ການສິດສອນສາສະຫນາ ແລະ ກໍ່ ໄດ້ຊຸກຍູ້ໃຫ້ເກີດມີນັກເຄື່ອນໄຫວສາສະຫນາ. ໃນກໍລະນີຂອງສາສະຫນາພຸດ, ຂະບວນການນີ້ ໄດ້ຖືກເອີ້ນວ່າ: 'ສາສະຫນາພຸດທີ່ເຊື່ອມເຂົ້າກັບສັງຄົມ' (Queen & King, 1996). ບຸກຄົນຜູ້ມີຊື່ສຽງໂດ່ງດັງເຊັ່ນ: ພະອາຈານ ພຸດທະທາດພິຊຸ ແລະ ທ່ານ ສຸລັກ ສີວາລັກສາ ໃນປະເທດ ໄທ ຫລື ທ່ານ ທິກຍັດແຮງ ຢູ່ ສສ ຫວຽດນາມ, ໄດ້ສະແດງໃຫ້ເຫັນເຖິງຄວາມຫລາກຫລາຍ ຂອງການເຄື່ອນໄຫວ ທີ່ແນໃສ່ການຂະຫຍາຍ ແລະ ຫັນປ່ຽນບົດບາດຂອງສາສະຫນາພຸດ ໃນສັງຄົມທີ່ທັນສະໄຫມ. ພວກເພິ່ນໄດ້ຮຽກຮ້ອງໃຫ້ດຳລົງຮັກສາສາສະຫນາພຸດທີ່ຕິດແຫນ້ນຢູ່ໃນຮີດຄອງປະເພນີ, ແຕ່ກໍ່ຍອມຮັບເອົາສິ່ງທ້າທາຍ ຕ່າງໆທີ່ມາຈາກການປ່ຽນແປງສະພາບຂອງສັງຄົມ ແລະ ໃຫ້ນຳໃຊ້ສາສະຫນາພຸດ ຢ່າງຈະແຈ້ງແນ່ນອນເຂົ້າໃສ່ວຽກງານສັງຄົມ, ການພັດທະນາ, ການຮັກສາສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ ແລະ ການສ້າງສັນຕິພາບ, ເຊິ່ງຈະນຳໄປສູ່ການສ້າງສັງຄົມທີ່ທ່ຽງທຳ. ທັດສະນະກ່ຽວກັບທຳມະຂອງສາສະຫນາພຸດຂອງເຂົາເຈົ້າແມ່ນການ ກຳນົດ ແລະ ການນຳໃຊ້ການສິດສອນ, ການປະຕິບັດ ແລະ ສະຖາບັນຕ່າງໆ ທີ່ສາມາດນຳໃຊ້ເຂົ້າໃນວຽກງານການພັດທະນາ ແລະ ມີຄວາມເປັນໄປໄດ້ ທີ່ຈະເປັນ ປະໂຫຍດຕໍ່ວຽກງານເຫລົ່ານັ້ນ ໃນວົງກ້ວາງທີ່ສຸດ. ການເຄື່ອນໄຫວ ແບບນີ້ ອາດເວົ້າໄດ້ວ່າ ພົ້ນເດັ່ນ ແລະ ກ້າວໄກກວ່າຫມູ່ ຢູ່ໃນປະເທດໄທ, ເຊິ່ງເປັນປະເທດທີ່ມີ 'ພະສົງນັກພັດທະນາ' (ພະສົງ ທີ່ມີສ່ວນຮ່ວມໃນວຽກການພັດທະນາ ) ຢູ່ຂ້ອນຂ້າງຫລາຍ ແລະ ຫລາກຫລາຍ.

ໃນ ສປປ ລາວ ໃນໄລຍະທີ່ຜ່ານມາ ກໍ່ໄດ້ມີຄວາມພະຍາຍາມໃນການນຳເອົາພະສົງເຂົ້າ ໄປເປັນສ່ວນຮ່ວມ ໃນວຽກງານພັດທະນາ, ແຕ່ກໍ່ດຳເນີນໄປໃນຮູບແບບທີ່ຂ້ອນຂ້າງບໍ່ເປັນລະບົບ ແລະ ບໍ່ມີການຈັດສັນທີ່ດີປານໃດ. ເຖິງຢ່າງໃດກໍ່ຕາມ, ການເຄື່ອນໄຫວໃນສາສະຫນາ ໃນປະຈຸບັນ ຂອງພະສົງນັກພັດທະນາ ຫລື ຄະນະສົງທີ່ເຮັດວຽກງານພັດທະນາສ່ວນຫນ້ອຍ ສາມາດເຫັນໄດ້ວ່າ ເປັນການເກີດຂຶ້ນຂອງສາສະຫນາພຸດທີ່ເຊື່ອມເຂົ້າກັບສັງຄົມ ເພື່ອການພັດທະນາ, ເຊິ່ງໄດ້ຮັບການຊຸກຍູ້ຈາກການກ້າວເຂົ້າສູ່ຄວາມທັນສະໄຫມທີ່ໄວວາຂອງປະເທດ. ເຖິງວ່າຄະນະສົງ ລາວໄດ້ມີສ່ວນຮ່ວມກັບກິດຈະກຳຕ່າງໆ ທີ່ກ່ຽວເນື່ອງກັບວຽກການສັງຄົມ ໄດ້ໄລຍະໃດຫນຶ່ງແລ້ວ, ແຜນການໃຫມ່ໆກຳລັງກໍ່ຕົວຂຶ້ນ ໂດຍມີເປົ້າຫມາຍຫັນປ່ຽນໃຫ້ສອດຄ່ອງ ແລະ ທ່ວງທັນກັບ ການປ່ຽນແປງຕາມຍຸກຕາມສະໄຫມ ໃນສັງຄົມລາວ: ການຕິດຢາເສບຕິດ, ການເຊື່ອມໂຊມຂອງສິ່ງແວດລ້ອມ, ບັນຫາໂສເພນີ, ການຄ້າຂາຍມະນຸດ ແລະ ແຮງງານຕ່າງດ້າວ ແລະ ການຂະຫຍາຍຕົວທີ່ເພີ່ມຂຶ້ນຂອງ HIV/AIDS, ເຖິງວ່າຈະເປັນບັນຫາສັງຄົມທີ່ເກີດຂຶ້ນຊ້າ ແຕ່ກໍ່ເປັນບັນຫາທີ່ຮຸນແຮງຂອງສັງຄົມທີ່ທັນສະໄຫມ ແລະ ຂອງໂລກໂລກາວິວັດ ຢູ່ໃນລາວ. ພະສົງສ່ວນໃຫຍ່ມີຄວາມເຊື່ອທີ່ວ່າ

ການກ້າວໄປສູ່ຄວາມທັນສະໄໝ ຂອງປະເທດຊາດ ແມ່ນການພັດທະນາໃນດ້ານບວກ ເປັນສ່ວນຫລາຍ, ແຕ່ກໍ່ຮູ້ສຶກວ່າ ຜົນສະທ້ອນດ້ານລົບທີ່ຕາມມາ ແມ່ນສິ່ງທີ່ທ້າທາຍ ແລະ ບາງເທື່ອກໍ່ເປັນສິ່ງທີ່ນາບຂູ່ ສັງຄົມລາວ. ພະສົງເຊື່ອວ່າ ຕົນສາມາດຊຸກຍູ້ການພັດທະນາເຫລົ່ານີ້ ໃຫ້ໄປໃນທາງດ້ານດີ ແລະ ກໍ່ເຊື່ອວ່າ ສິ່ງນັ້ນ ແມ່ນໜ້າທີ່ ທີ່ພວກຕົນທີ່ຕ້ອງໄດ້ຮັບຜິດຊອບ. ຕາມທັດສະນະຄະຕິຂອງຫລັກສາສະໜາພຸດ, ມັນແມ່ນໜ້າທີ່ຂອງ ພະສົງ ທີ່ຈະແນະນຳ ປະຊາຊົນທົ່ວໄປ ໃນດ້ານການສິດສອນສາສະໜາພຸດ ແລະ ຫລັກຈະລິຍະທຳຂອງສາສະໜາພຸດ, ເພື່ອເປັນການຊຸກຍູ້ຊ່ວຍເຫລືອ ທາງດ້ານຈິດໃຈ ແລະ ກາຍເປັນສ່ວນໜຶ່ງໃນບັນດາກິດຈະກຳ ຕ່າງໆ ເພື່ອຫລຸດຜ່ອນ "ທຸກຂະ" (ຄວາມທຸກທໍລະມານ). ໃນເວລາທີ່ມີການສົນທະນາປຶກສາຫາລືບັນຫາເຫລົ່ານີ້ ໃນປີ 2004, ເຈົ້າອະທິການວັດຂອງວັດ ໜຶ່ງໃນນະຄອນຫຼວງວຽງຈັນ ໄດ້ອະທິບາຍວ່າ "ທຳມະ" ແມ່ນເປັນຫຼັກທຳ ຂອງພະພຸດທະອົງທີ່ຕາຍໂຕ, ແຕ່ບັນຫາຂໍ້ຫຍຸ້ງຍາກຕ່າງໆ ທີ່ສັງຄົມຕ້ອງໄດ້ປະເຊີນໜ້າ ແລະ ຕໍ່ສູ້ ແລະ ແຫລ່ງກຳ ເນີດຂອງຄວາມທຸກທໍລະມານນັ້ນມີການປ່ຽນແປງ. ຄວາມທຸກທໍລະມານຕ່າງໆ ໃນສະໄໝພຸດທະການ ທີ່ ພະພຸດທະເຈົ້າ ໄດ້ປະສົບພົບພໍ້ແມ່ນແຕກຕ່າງກັບ ຄວາມທຸກທໍລະມານ ທີ່ພວກເຮົາປະເຊີນໃນປະຈຸບັນ, ດັ່ງນັ້ນ ມັນສຳຄັນທີ່ພວກເຮົາຕ້ອງອະທິບາຍການສິດສອນ ສາສະໜາ ອັນທີ່ເປັນພື້ນຖານຄືນອີກ ແລະ ເຊື່ອມໂຍງຄຳສອນເຫລົ່ານັ້ນໃຫ້ຕິດພັນກັບການ ດຳລົງຊີວິດປະຈຳວັນຂອງຄົນທົ່ວໄປ ເພື່ອທີ່ຈະຊ່ວຍພວກ ເຂົາໃຫ້ຮັບຮູ້ ແລະ ເຂົ້າໃຈ ທຳມະ ແລະ ນຳໄປສູ່ການມີຊີວິດທີ່ດີຂຶ້ນ (ການສົນທະນາສ່ວນ ຕົວ ກັບ ເຈົ້າອະທິການວັດ, ພະຈິກ 2004)

## ຄະນະພະສົງ ທີ່ຖືວ່າເປັນທຶນຮອນຂອງສັງຄົມ ແລະ ຄວາມອາດສາມາດໃນການນຳໃຊ້ເຂົ້າໃນການພັດທະນາ

ການສຶກສາດ້ານມະນຸດວິທະຍາໃນເມື່ອກ່ອນ ທີ່ກ່ຽວກັບສາສະໜາພຸດຂອງລາວ ສ່ວນໜ້ອຍທີ່ສຸດທີ່ຈະລືມກ່າວເຖິງ ບົດບາດອັນຕົ້ນຕໍຂອງວັດຂອງສາສະໜາພຸດ (ວັດພຸດ) ທີ່ມີຕໍ່ຊຸມຊົນໃນໝູ່ບ້ານ. ບົດບາດທີ່ສຳຄັນຂອງພະສົງທີ່ມີຢູ່ໃນການເຄື່ອນໄຫວ ຂອງບ້ານ, ອິດທິພົນຂອງພະສົງ ທີ່ມີຕໍ່ສາສະນິກະຊົນ ແລະ ເຄືອຄ່າຍ ຂອງສະຖາບັນສົງ ແລະ ສາຍພົວພັນສ່ວນຕົວ ລ້ວນແລ້ວແຕ່ສະແດງອອກໃຫ້ເຫັນວ່າ ເປັນສ່ວນໜຶ່ງຂອງ ລັກສະນະທີ່ພົ້ນເດັ່ນຂອງສັງຄົມລາວ. ທ່ານ Condominas (1998), ໃນການສຶກສາກ່ຽວ ກັບສາສະໜາພຸດ ຢູ່ເຂດຫ່າງໄກສອກຫລີກ ຂອງລາວໃນຊຸມ ປີ 1950 ແລະ 1960 , ໄດ້ເວົ້າເຖິງ ພາລະບົດບາດ ໜ້າທີ່ຕ່າງໆ ທີ່ເຮັດໂດຍວັດໃນທ້ອງຖິ່ນນັ້ນ. ຄຽງຄູ່ໄປກັບ ການເປັນຈຸດສຸມ ໃນການຈັດພິທີກຳທາງສາສະໜາຕ່າງໆແລ້ວ, ໃນເວລາດຽວກັນ ວັດຍັງປຽບ ສະເໝືອນກັບໂຮງຮຽນ, ຫ້ອງການປົກຄອງບ້ານ, ສານທ້ອງຖິ່ນ, ສະຖານທີ່ຈັດງານບຸນ, ໂຮງໝໍພື້ນ ເມືອງ, ບ່ອນພັກເຊົາສຳລັບແຂກ, ບ່ອນໃຫ້ຄຳປຶກສາຫາລື ແລະ ເປັນບ່ອນໂຮມຊຸມນຸມທົ່ວໄປ ສຳລັບຊຸມຊົນໃນຊົນນະບົດ. ວັດຍັງເປັນສູນກາງຂອງສັນຍາລັກທາງດ້ານຈິດໃຈ ທີ່ກ່ຽວຂ້ອງກັບການແລກປ່ຽນທາງເສດຖະກິດ ແລະ ການເງິນ. ວັດຍັງຖືວ່າ ເປັນບ່ອນ "ແບ່ງປັນຄວາມຍຸທິທຳ" (Rawls, 1971) ເພາະກອງທຶນສະສົມໃນວັດ ຊຶ່ງໄດ້ມາຈາກ ພຸດທະສາສະນິກະຊົນ ຫລືຜູ້ມີໃຈໃສ ສັດທານັ້ນ ໄດ້ຖືກນຳໃຊ້ເຊັ່ນ : ມອບການສຶກສາໃຫ້ສາມະເນນ ທີ່ມາຈາກຄອບຄົວທີ່ທຸກຍາກ. ສິ່ງນີ້ສະແດງໃຫ້ເຫັນເຖິງສິ່ງທີ່ຄົນລາວເອີ້ນວ່າ " ຄວາມສາມັກຄີ ".

ແຫລ່ງຂໍ້ມູນຕ່າງໆ ຂອງທາງການມັກທີ່ຈະກ່າວເຖິງຈິດໃຈໃນເນື້ອໃນຂອງຄຸນຄ່າຂອງສາສະໜາພຸດ ເກີນກ່ວາຈະກ່າວເຖິງຈິດໃຈບໍລິສຸດ ແລະ ເນັ້ນໜັກເຖິງບົດບາດທີ່ເປັນປະໂຫຍດຂອງ ສາສະໜາພຸດ ໃນສັງຄົມ (ພົມວິຫານ 1992; ວັນນະໂສພາ, 2003). ໃນເວລາທີ່ ໜ້າວຽກຕ່າງໆ ທີ່ເປັນວຽກຕາມຮີດຕາມຄອງຂອງວັດໄດ້ຖືກປ່ຽນແປງ ຫລື ຍຶດຄອງໂດຍ ສະຖາບັນສະເພາະພິເສດຕ່າງໆ ຂອງລັດ, ເຊິ່ງເຮັດໃຫ້ມີການປ່ຽນແປງ ນິຍາມຂອງ ບົດບາດຂອງສາສະໜາພຸດ ໂດຍຜ່ານການຈໍາແນກລະຫວ່າງ "ທາງໂລກ" ແລະ "ທາງທໍາ", ເຖິງຢ່າງໃດກໍ່ຕາມ ໃນບາງທ້ອງຖິ່ນ, ພະສົງກໍ່ຍັງຄົງສືບຕໍ່ ໃນການດໍາເນີນບົດບາດຂອງພຸດທະສາສະໜາ ທີ່ກ່ຽວພັນກັບສັງຄົມຢ່າງຈູບຈ້າວຫ້າວຫັນ (ວິຈິດ, 2003). ພະສົງທີ່ມີ ສ່ວນຮ່ວມກັບສັງຄົມ ດຽວນີ້ໄດ້ພາກັນເຫັນວ່າ ມັນມີຄວາມຈໍາເປັນທີ່ຈະຍອມຮັບ ໃນສິ່ງທີ່ສາສະໜາພຸດ ສາມາດປະກອບສ່ວນໃສ່ກັບການພັດທະນາຂອງສັງຄົມລາວ ໃນຍຸກສະໃໝປະຈຸບັນ. ດັ່ງນັ້ນ, ພະສົງບາງອົງ ກໍາລັງຄົ້ນຄ້ວາວິໄຈຊອກຫາຄວາມເປັນໄປໄດ້ ທີ່ການມີສ່ວນຮ່ວມຂອງ ສາສະໜາພຸດ ແລະ ການສິດສອນພຸດທະສາສະໜາ ຈະຊ່ວຍໃນການພັດທະນາວິຖີທາງ ຂອງການເຄື່ອນໄຫວທາງສັງຄົມ.

ສາສະໜາພຸດ ມີທັດສະນະຄະຕິທາງດ້ານຫລັກທໍາຂອງສັງຄົມຢ່າງເຂັ້ມງວດ, ບໍ່ວ່າຈະເປັນຫລັກທໍາຂອງພະສົງ ກໍ່ຄືຂອງປະຊາຊົນທົ່ວໄປ (Rajavaramuni, 1990). ແນວຄວາມຄິດຕ່າງໆເຊັ່ນ: ໜ້າທີ່ຮັບຜິດຊອບ, ຄວາມສົນໃຈ ແລະ ການສະແຫວງຫາຄວາມດີ ແມ່ນບໍ່ພຽງແຕ່ກ່ຽວຂ້ອງກັບປະຊາຊົນທົ່ວໄປ ແຕ່ຍັງກ່ຽວຂ້ອງກັບຊຸມຊົນຕ່າງໆ. ວັດຍັງຄົງເປັນຈຸດສູນກາງ ຂອງກິດຈະກໍາທາງສັງຄົມ ເຊິ່ງສິນທໍາ ແລະ ຫລັກທໍາຂອງສາສະໜາພຸດ ໄດ້ຖືກເຜີຍແຜ່ ຫລື ຖືກສັ່ງສອນໃນມື້ວັນບຸນ ວັນສິນສໍາຄັນຕ່າງ ເຊິ່ງເປັນມື້ທີ່ປະຊາຊົນໄດ້ຈັດງານບຸນປະເພນີຕ່າງ ຂອງບ້ານ ຫລືຊຸມຊົນ. ຕາມເນື້ອໃນແລ້ວ, ພະສົງມີຄວາມສໍາຄັນສະເພາະຄື: ມີໜ້າທີ່ ອະທິບາຍພະທໍາຄໍາສອນຫລື ທໍາມະ ໃຫ້ປະຊາຊົນ ຫລື ພຸດທະສາສະນິກະຊົນ ແລະ ເບິ່ງແຍງຄວາມຈໍາເປັນ ຫລື ຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນເຫລົ່ານັ້ນ, ພະສົງ ໄດ້ຖືກຍົກໃຫ້ຢູ່ໃນຖານະທີ່ສໍາຄັນໃນສັງຄົມ ແລະ ໄດ້ຖືກຍົກສິດທິພິເສດໃຫ້. ພະສົງໄດ້ຮັບການເຄົາລົບນັບຖືຢ່າງສູງ ໂດຍບັນດາປະຊາຊົນໃນຊຸມຊົນ ຊຶ່ງສາມາດຈໍາແນກໃຫ້ເຫັນໄດ້ຢ່າງຈະແຈ້ງໂດຍ ວິຖີການດໍາລົງຊີວິດ ແລະ ກິດຈະວັດປະຈໍາວັນຂອງສົງ. ພະສົງຖືວ່າເປັນຜູ້ມີຄວາມຮູ້ເໜືອກ່ວາຊາວບ້ານຜູ້ອື່ນໆ ແລະ ປະຊາຊົນກໍ່ມັກປຶກສາຫາລື ກັບພະສົງກ່ຽວກັບ ວິກິດການຫຍໍ້ທໍ້ຕ່າງໆ ໃນຊີວິດ ແລະ ບັນຫາຄອບຄົວຕ່າງໆ. ການລົງໄປຢ້ຽມຢາມໂຮງຮຽນ ແລະ ການສິດສອນທໍາມະ, ຫລັກຈະລິຍະທໍາ ແລະ ສິນທໍາ ຂອງສາສະໜາພຸດ, ໃນປະຈຸບັນນີ້, ສ່ວນຫລາຍແລ້ວ ຖືເປັນເລື່ອງປົກກະຕິ ແລະ ພົບເຫັນໄດ້ ໃນສັງຄົມຕົວເມືອງ. ການສິດສອນທໍາມະແບບນີ້, ສ່ວນຫລາຍແລ້ວຈະສຸມໃສ່ຫົວຂໍ້ພື້ນຖານຕ່າງໆ ຂອງສາສະໜາພຸດ (ຮຽນຮູ້ການໄຫ້ວພະ-ການສວດມົນ, ນັບຖືຜູ້ເຖົ້າຜູ້ແກ່ ແລະ ຄູບາອາຈານ, ຄຸນຄ່າຂອງການສຶກສາ ແລະ ວັດທະນາທໍາລາວ), ແຕ່ໃນປະຈຸບັນນີ້, ການສິດສອນກໍ່ເລີ່ມພົວພັນເຖິງບັນຫາສິ່ງແວດລ້ອມ, ການຕ້ານ ແລະ ສະກັດກັ້ນຢາເສບຕິດ ຂຶ້ນເລື້ອຍໆ.

---

*ມີການສອນຫລັກທໍາຕ່າງໆ ຊຶ່ງສາມາດ*

*ນໍາໃຊ້ເປັນແນວທາງ-ແນວຄວາມຄິດຂອງການພັດທະນາແບບຍືນຍົງ*

---

ການເທດສະໜາທຳ ຈະເປັນປະໂຫຍດ ແລະ ຈະສາມາດມີອິດທິພົນຕໍ່ທັດສະນະ ຫລື ແນວຄິດຂອງປະຊາຊົນໄດ້ ຖ້າຫາກວ່າເມື່ອການອະທິບາຍຫລັກທຳໄດ້ຖືກນຳໃຊ້ຕາມເນື້ອໃນໃຫມ່ແບບມີສີສັນ ແລະ ເລັງໃສ່ບັນຫາຕ່າງໆ ຂອງສັງຄົມສະໄຫມໃຫມ່. ການອະທິບາຍທຳມະ ກາຍເປັນພັນທະ ແລະ ການກະທຳທີ່ເປັນບຸນກຸສົນ ຂອງພະສົງ. ຄົນທົ່ວໄປທີ່ຟັງເທດ ກໍ່ໄດ້ບຸນ, ໃນເວລາດຽວກັນ ຄຳສອນ, ປຶ້ມກ່ຽວກັບພະທຳຄຳສອນ, ແລະ ການສົນທະນາ ປາຖະກະຖາຕ່າງໆ ທີ່ພົວພັນເຖິງທຳມະ ຖືວ່າແມ່ນ "ສິ່ງທີ່ມີຄ່າທີ່ໄດ້ມາຈາກຄວາມຈິງ". ເມື່ອເວົ້າເຖິງການປະພຶດທີ່ມີສິນທຳ, ພະສົງຄວນເປັນແບບເປັນຢ່າງສຳລັບຄົນທົ່ວໄປ. ຮູບແບບການວິຖີການດຳລົງຊີວິດຂອງສົງ ທີ່ຖືກຕ້ອງ ຢ່າງແທ້ຈິງ, ຊຶ່ງຖືກກຳນົດໂດຍວິໄນສົງ, ຖືເປັນວິຖີການດຳລົງຊີວິດແບບຢ່າງ ທີ່ປະຕິບັດບົນພື້ນຖານສິນທຳ, ຄວາມບໍລິສຸດ, ແລະ ເມດຕາ ຕໍ່ສິ່ງທີ່ມີຊີວິດທັງຫມົດ. ສຳລັບຄົນທົ່ວໄປແລ້ວ, ຍັງມີຄຳສອນພຸດທະສາສະໜາອີກຫລາຍຢ່າງເຊັ່ນ: ມະຄະມີອົງແປດ, ສິບປາຣະມີ, ແລະ ພົມມະວິຫານສີ່ ແລະ ການຫລີກລ້ຽງກິເຫລດຕັນຫາ. ຄຳສອນດັ່ງກ່າວນີ້ ມີສ່ວນພົວພັນກັບການເຮັດບຸນ ຫລື ກະທຳ ຄວາມດີ ໂດຍບຸກຄົນ ຊຶ່ງຖືເປັນການໃຫ້ພຸດທະສາສະນິກະຊົນ ໄດ້ເກັບກ່ຽວເອົາຄຸນງາມຄວາມດີ ຫລື ບຸນ. ຫລັກທຳແນວນີ້ ມີຫນ້າທີ່ ທີ່ຄ້າຍຄືກັບແນວຄິດຂອງທ່ານ ມິເຊວ ຟູໂຄ (Michel Foucault) ທີ່ວ່າ "ການປະພຶດປະຕິບັດດ້ວຍໂຕຂອງຕົນເອງ ດ້ວຍວິທີການຂອງຕົນເອງ ຫລື ດ້ວຍຄວາມຊ່ວຍເຫລືອຈາກຜູ້ອື່ນ ຈະເຮັດໃຫ້ຄົນຜູ້ນັ້ນສາມາດປັບປຸງການປະພຶດ, ການກະທຳ, ແນວຄິດ, ຈິດໃຈ ແລະ ວິຖີການດຳລົງຊີວິດ, ເພື່ອທີ່ຈະໄດ້ຮັບສະພາບແຫ່ງ ຄວາມສຸກ, ບໍລິສຸດ, ຄວາມສະຫລຽວສະຫລາດ, ແລະ ຄວາມສົມບູນແບບ" (1997) ນອກຈາກພະທຳຄຳສອນ ສຳລັບປະຊາຊົນດັ່ງກ່າວນີ້ແລ້ວ, ຍັງມີຫລັກທຳຕ່າງໆທີ່ລະອຽດ ຊຶ່ງສາມາດ ນຳໃຊ້ເປັນແນວທາງ-ແນວຄວາມຄິດຂອງ ການພັດທະນາແບບຍືນຍົງ, ຕົວຢ່າງ ການປົກປັກຮັກສາສິ່ງແວດລ້ອມ (Harris, 1995).

ຖ້າວ່າຫລັກທຳຄຳສອນ ແລະ ສະຖານທີ່ປະຕິບັດທຳຕ່າງໆ ສາມາດເຊື່ອມໂຍງກັບສັງຄົມໃນປະຈຸບັນ ແລະ ພະສົງສາມາດຕີຄວາມຫມາຍຂອງທຳມະ ກັບບັນຫາຕ່າງໆ ເຊັ່ນ: ເຊື້ອ HIV, ຢາເສບຕິດ ແລະ ການປົກປັກຮັກສາສິ່ງແວດລ້ອມໃນຮູບແບບ ທຳມະ, ມັນຈະກໍ່ໃຫ້ເກີດມີໂອກາດອັນສຳຄັນທີ່ມີອິດທິພົນຕໍ່ພຶດຕິກຳ ແລະ ທັດສະນະຂອງຄົນ. ພະສົງ, ທີ່ມີສະຖາບັນປະຕິບັດທຳ ອັນປະກອບມີເຄືອຂ່າຍ ທີ່ກ້ວາງຂວາງ ແລະ ກະບອກສຽງທີ່ມີອິດທິພົນໃນຫມູ່ບ້ານ, ມີຄວາມສາມາດຫລາຍໆຢ່າງ ເຊິ່ງນັກຊ່ຽວຊານທາງດ້ານການພັດທະນາ ແລະ ນັກມະນຸດວິທະຍາ ໄດ້ເອີ້ນວ່າ 'ທຶນຮອນທາງ

*ພະສົງ, ຕາມຫລັກຂອງສົງ ແລະ ເຄືອຂ່າຍອັນກ້ວາງຂວາງ,*
*ແມ່ນຢູ່ໃນສະຖານະພາບທີ່ພິເສດ ທີ່ຈະເປັນປາກເປັນສຽງ,*
*ເປັນຜູ້ເຜີຍແຜ່ບັນຫາສັງ ຄົມຕ່າງໆ*

ດ້ານສັງຄົມ'. ທ່ານ Putman (2000), ໄດ້ໃຫ້ນິຍາມ ຄຳສັບ 'ທຶນຮອນທາງດ້ານສັງຄົມ' ວ່າເປັນຄວາມຄິດທີ່ມີຫລາຍຮູບແບບ ຫລາຍມິຕິ ປະກອບດ້ວຍ ການເຊື່ອຖື ແລະ ໄວ້ເນື້ອເຊື່ອໃຈ, ບັນທັດຖານທາງສັງຄົມ, ເຄືອຂ່າຍ ແລະ ອົງການຈັດຕັ້ງຕ່າງໆ ທີ່ມີອິດທິພົນຕໍ່ສາຍພົວພັນ ລະຫວ່າງຄົນກັບຄົນ ແລະ

ມີຜົນປະໂຫຍດຕໍ່ບຸກຄົນ ແລະ ຕໍ່ຄວາມຜາສຸກ ຂອງສັງຄົມ. ທຶນຮອນທາງສັງຄົມຍັງຝັງແໜ້ນຢູ່ໃນໂຄງສ້າງຂອງສັງຄົມ ໃນຮູບແບບຕ່າງໆ ເຊັ່ນ: ສາຍພົວພັນຂອງຍາດຕິພີ່ນ້ອງ, ກຸ່ມຄົນທີ່ເຮັດວຽກຮ່ວມກັນ ແລະ ວຽກງານໜ້າທີ່ອື່ນທີ່ກ່ຽວຂ້ອງທີ່ພວກ ເຂົາມີໜ້າທີ່ຮັບຜິດຊອບຮ່ວມກັນ. ນອກຈາກນີ້, ຍັງສາມາດພົບເຫັນໄດ້ ໃນຊຸມຊົນ ແລະ ສະຖາບັນຕ່າງໆ ທີ່ນັບຖືສາສະໜາຢ່າງເຄັ່ງຄັດ (Greely, 2001). ໃນ ສປປ ລາວ, ທຶນຮອນທາງສັງຄົມນີ້ສາມາດພົບເຫັນໄດ້ໃນການບໍລິຈາກໃຫ້ວັດ, ກຳມະທິການວັດ ແລະ ການເຄື່ອນໄຫວປະຕິບັດທຳຕ່າງໆ ຂອງພຸດທະສາສະນິກະຊົນ ແລະ ພະສົງ ເພື່ອບຳລຸງຮັກສາ ແລະ ປັບປຸງສິມ ແລະ ອາຄານອື່ນໆໃນວັດ. ພະສົງ, ຕາມຫລັກຂອງສົງ ແລະ ເຄືອຂ່າຍອັນກ້ວາງຂວາງ, ແມ່ນຢູ່ໃນສະຖານະພາບທີ່ພິເສດ ທີ່ຈະເປັນປາກເປັນສຽງ, ເປັນຜູ້ເຜີຍແຜ່ບັນຫາສັງ ຄົມຕ່າງໆ ຕາມຫລັກທຳມະຂອງສາສະໜາພຸດຕາມທີ່ໄດ້ກ່າວມາແລ້ວນັ້ນ. ການນຳໃຊ້ຫລັກທຳມະຂອງສາສະໜາພຸດ ສະແດງເຖິງວິທີການປະຕິບັດ ທີ່ມີປະສິດທິພາບ ໃນການ ໃຫ້ຄຳຄິດຄຳເຫັນຕໍ່ກັບບັນຫາ ຕ່າງໆ ເຊັ່ນ: ການໃຊ້ຢາເສບຕິດ ແລະ HIV ຍ້ອນວ່າພະສົງ ບໍ່ພຽງແຕ່ສາມາດນຳໃຊ້ ການເທດສະໜາ ແລະ ຄຳເວົ້າທີ່ເປັນທີ່ຄຸ້ນເຄີຍຂອງ ພຸດທະສາສະນິກະຊົນ, ໃນເວລາດຽວກັນ ກໍ່ຍັງສາມາດເຮັດໃຫ້ເກີດໂອກາດໃນການສອດແຊກແນວຄິດການພັດທະນາແນວໃໝ່ໃນສັງຄົມອີກ.

## ສາມຕົວຢ່າງຂອງການມີສ່ວນຮ່ວມຂອງພະສົງໃນການພັດທະນາ

ກິດຈະກຳຕ່າງໆຕໍ່ໄປນີ້ໄດ້ມີຈຸດສຸມແນໃສ່ການແກ້ໄຂ ບັນຫາຕ່າງໆ ຂອງສັງຄົມປະຈຸບັນ (ຫລືທີ່ພະສົງລາວບາງອົງເອີ້ນວ່າ 'ແຫລ່ງທີ່ມາຂອງທຸກ') ໂດຍນຳໃຊ້ຫລັກ ທຳຄຳສອນຂອງພຸດທະສາສະໜາ ຫລື ຮູບແບບຂອງທຶນຮອນທາງສັງຄົມຮູບແບບອື່ນ ໃນວິທີທີ່ແຕກຕ່າງກັນ ໃຫ້ເປັນປະໂຫຍດ ແລະ ບັນດາກິດຈະກຳເຫລົ່ານີ້ມຸ່ງໝາຍໃຫ້ປະຊາຊົນເຫັນຄຸນຄ່າ ແລະ ຄວາມໝາຍຂອງທຳມະ, ກະຕຸກຊຸກຍູ້ໃຫ້ມີການ ຄຶດທົບທວນເບິ່ງບັນຫາສັງຄົມເຫລົ່ານີ້, ແລະ ໃນທີ່ສຸດກໍ່ປ່ຽນແປງການປະພຶດ ແລະ ທັດສະນະຂອງຄົນ. ບາງກິດຈະກຳກໍ່ຍັງດຳເນີນໃນຂອບ ເຂດຈຳກັດກໍ່ຄື ຢູ່ໃນແຕ່ລະຂອບເຂດ ນະຄອນຫລວງວຽງຈັນ, ໃນຂະນະທີ່ກິດຈະກຳອື່ນ ໆ ມີເປົ້າໝາຍຈະນຳໃຊ້ໃນທົ່ວປະເທດ. ຂອບເຂດ ແລະ ວິທີທີ່ກິດຈະກຳເຫລົ່ານັ້ນ ໄດ້ຖືກຈັດຕັ້ງແມ່ນແຕກຕ່າງກັນ; ແຕ່ທຸກໆກິດຈະກຳ ແມ່ນມີການປະກອບສ່ວນຂອງພະສົງ (ແລະ ບາງເທື່ອກໍ່ມີແມ່ຂາວ) ເປັນພາກສ່ວນຕົ້ນຕໍ ແລະ ກໍ່ເລັ່ງໃສ່ການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ຄົນ ຜູ້ທີ່ປະເຊີນໜ້າກັບບັນຫາຕ່າງໆ ໃນທາງກົງ ຫລື ທາງອ້ອມ.

## ໂຄງການ ເມດຕາທຳ HIV/AIDS

ເຖິງວ່າຕົວເລກຢ່າງເປັນທາງການ ຂອງການລະບາດຂອງ HIV/AIDS ຍັງຕ່ຳຢູ່ໃນ ສປປ ລາວ - ໃນປີ 2005 ມີ 1, 827 ຄົນ ທີ່ຖືກລາຍງານການຕິດເຊື້ອ HIV, 1,065 ຄົນ ຕິດ AIDS ແລະ 637 ຄົນເສຍຊີວິດຍ້ອນ AIDS (ສູນHIV/AIDS/ພະຍາດຕິດຕໍ່ທາງເພດສຳພັນ, ທັນວາ 2005) - ການເຕີບໃຫຍ່ຂອງການຄ້າຊາຍແດນ ແລະ ຂອງຈຳນວນແຮງງານຕ່າງດ້າວໝາຍເຖິງ ໂອກາດພະຍາດນີ້ຈະຂະຫຍາຍຕົວອອກ ແລະ ກາຍເປັນໂລກລະບາດໃນອະນາຄົດ. ໜຶ່ງໃນສິ່ງທີ່ທ້າທາຍ

ທີ່ສຸດໃນການ ປ້ອງກັນເຫດການ ດັ່ງກ່າວ ແມ່ນການຂາດເຂີນ ເຊິ່ງຄວາມຮູ້ ຄວາມເຂົ້າໃຈຂອງປະຊາຊົນລາວ ຕໍ່ເຊື້ອໂລກດັ່ງກ່າວ: ໃນປີ 2001, ປະມານ 1/3 ຂອງແມ່ຍິງລາວ ບໍ່ເຄີຍໄດ້ຍິນ HIV/AIDS ມາກ່ອນ. 'ສະຖາບັນຜູ້ນຳສາສະໜາພຸດ' ແມ່ນການຮ່ວມມືກັນລະຫວ່າງ ແມ່ຂາວ ແລະ ພະສົງຜູ້ທີ່ໄດ້ສ້າງເຄືອຄ່າຍໃນຫລາຍໆປະເທດໃນ ອາຊີຕາເວັນອອກສ່ຽງໃຕ້ ເພື່ອເປັນຜູ້ນຳໜ້າພາທາງໃນວຽກງານຮັກສາ ແລະ ປ້ອງກັນເຊື້ອ HIV ໃນຂັ້ນຊຸມຊົນ. ວຽກງານນີ້ໄດ້ຮັບການອຸປະຖຳໂດຍອົງການ Unicef ແລະ ວຽກງານແມ່ນດຳເນີນໄປບົນພື້ນຖານການນຳໃຊ້ທຶນຮອນ ທີ່ບໍ່ສູງ. ກິດຈະກຳຕ່າງໆລວມມີ ການສຳມະນາ ແລະ ການປາຖະກະຖາກ່ຽວກັບການປ້ອງກັນເຊື້ອ HIV, ການໃຫ້ຄຳປຶກສາແນະນຳເພື່ອປິ່ວແປງດ້ານຈິດໃຈຂອງຜູ້ທີ່ ຕິດເຊື້ອແລ້ວ, ລວມທັງການຊ່ວຍເຫລືອທາງດ້ານເຄື່ອງໃຊ້ຂອງສອຍປະຈຳວັນທີ່ຈຳເປັນສຳລັບຜູ້ທີ່ຕິດເຊື້ອ ທີ່ບໍ່ສາມາດເຮັດວຽກຫາລາຍໄດ້ດ້ວຍຕົນເອງໄດ້ແລ້ວ (Unicef, 2003). ໂຄງລ່າງພື້ນຖານ ທີ່ນຳໃຊ້ ແມ່ນໄດ້ສ້າງຂຶ້ນມາແລ້ວໂດຍຄະນະສົງ - ເຄືອຄ່າຍຂອງ ແມ່ຂາວ, ພະສົງ, ວັດ ແລະ ຄະນະກຳມະການໃນທົ່ວປະເທດ.

ພະສົງລາວ ໄດ້ເຂົ້າຮ່ວມໃນໂຄງການ ໃນເດືອນກັນຍາ ປີ 2001 ແລະ ກໍ່ໄດ້ຮ່ວມມືກັບຜູ້ຕາງໜ້າຂອງ ກົມສາສະໜາຂອງແນວລາວສ້າງຊາດ ແລະ ຜູ້ນຳຄະນະພະສົງຂອງອົງການພຸດທະສາສະໜາລາວ, ຈັດການຝຶກອົບຮົມແນະນຳໃຫ້ພະສົງ ແລະ ແມ່ຂາວ 80 ອົງ, ຈາກນັ້ນ ກໍໄດ້ມີການຈັດການຝຶກອົບຮົມ ໃຫ້ສາມະເນນ ຈາກໂຮງຮຽນສົງ ຢູ່ ວັດອົງຕື້. ໂຄງການດັ່ງກ່າວ ໄດ້ມີຫ້ອງການຖາວອນຢູ່ ນະຄອນຫລວງວຽງຈັນ ແລະ ພະສົງຈຳນວນໜຶ່ງກໍ່ໄດ້ປະກອບສ່ວນຢ່າງ ຊຳນິຊຳນານໃນໄລຍະຍາວ. ພື້ນຖານແນວຄວາມຄິດ ແລະ ການເຄື່ອນໄຫວຂອງໂຄງການ ທີ່ໄດ້ຂະຫຍາຍຕົວອອກ ແມ່ນເປັນພື້ນຖານຂອງ ທຳມະ ຫລື ຫລັກທຳຄຳສອນຂອງສາສະໜາພຸດ. ຫລັກທຳ ແລະຄຳສອນຂອງສາສະໜາພຸດ ເຊັ່ນ ສິນຫ້າ, ແລະ ແນວທາງອື່ນໆເຊັ່ນ ເຊັ່ນ: ຄວາມພໍພຽງ, ຄວາມມີລະບຽບວິໄນຕໍ່ຕົນເອງ ແລະ ຄວາມມີເມດຕາ ຈະເກີດຂຶ້ນ ເມື່ອມີການເຜີຍແຜ່ຄຳສັ່ງສອນເຫລົ່ານັ້ນໃຫ້ກັບຜູ້ຄົນທົ່ວໄປ. ຈຸດປະສົງອັນຈະແຈ້ງຂອງໂຄງ ການ ລວມມີ:

- ຫລຸດຜ່ອນລະດັບຂອງການຖືກລັງກຽດຄຽດຊັງ ຫຼື ຖືກຈຳແນກ ແລະ ຖືກແບ່ງແຍກທີ່ປະສົບໂດຍຄົນທີ່ຕິດເຊື້ອ HIV. ຖ້າຜູ້ຕິດເຊື້ອຫາກຖືກປະປ່ອຍໃຫ້ຢູ່ຢ່າງໂດດດ່ຽວຢູ່ໃນຊຸມຊົນຂອງພວກເຂົາ, ພະສົງຄວນດັດແປງຫລັກທຳຄຳສອນຂອງສາສະໜາພຸດ ເຊັ່ນ: ເມດຕາ, ກະລຸນາ ແລະ ອຸເບກຂາ ເພື່ອປ່ຽນແປງຈິດຈຳນຶກ, ພຶດຕິກຳລັງກຽດ ແລະ ຈຳແນກຕໍ່ຜູ້ຕິດເຊື້ອ. ພະສົງຄວນສະເໜີຕື່ມອີກວ່າ ພຶດຕິກຳໃນການ ລັງກຽດ ແລະ ແບ່ງແຍກແມ່ນຖືວ່າເປັນການເຮັດບາບ ແລະ ການສະແດງຄວາມມີເມດຕາ ແລະ ການຊ່ວຍເຫລືອດ້ວຍຈິດໃຈ ບໍລິສຸດ ຖືເປັນການກະທຳທີ່ໄດ້ບຸນ.

- ຊຸກຍູ້ສະໜັບສະໜູນໃຫ້ ພະສົງຕິດຕໍ່ພົວພັນໂດຍກົງກັບຜູ້ທີ່ຕິດເຊື້ອ HIV. ເພື່ອທີ່ຈະສະແດງອອກເຖິງຄວາມເປັນຜູ້ນຳໃນການບໍ່ຈຳແນກ ແລະ ລັງກຽດ, ພະສົງ ຄວນຈະໄປຢ້ຽມຢາມຖາມຂ່າວ ຄອບຄົວຂອງຜູ້ທີ່ຕິດເຊື້ອ HIV ຢ່າງເປັນປະຈຳ. ພະສົງ ສາມາດສະເໜີການໃຫ້ຄຳປຶກສາ, ການໃຫ້ຄຳປຶກສາແນະນຳອົບອຸ່ນຈິດໃຈ ຜູ້ຕິດເຊື້ອກ່ອນຈະເສຍຊີວິດ, ສອນການນັ່ງສະມາທິ, ປັດເປົ່າເຄາະເຂັນ ຫລື ສູດທົດນ້ຳ ໃຫ້ຜູ້ທີ່ຕິດເຊື້ອ. ມັນຍັງຕ້ອງຮັບ

ປະກັນຕື່ມອີກວ່າ ຜູ້ທີ່ເສຍຊີວິດຍ້ອນ AIDS ຈະມີການຈັດງານສົບສິ່ງສະການ ຕາມພິທີກຳທາງສາສະໜາພຸດ ຢ່າງເຕັມຮູບແບບ.

- ການສຶກສາອົບຮົມໃນຊຸມຊົນກ່ຽວກັບວິທີປ້ອງກັນເຊື້ອ HIV ໂດຍພະສົງທ້ອງຖິ່ນ. ພະສົງຄວນປະສົມປະສານຂໍ້ມູນການສຶກສາອົບຮົມກ່ຽວກັບເຊື້ອ HIV ເຂົ້າໃນການອະທິບາຍ ແລະ ເທດສະໜາພະທຳຄຳສອນຢູ່ວັດ. ພະສົງ ກໍ່ຄວນໄປ ຢ້ຽມຢາມໂຮງຮຽນ ໃນທ້ອງຖິ່ນ ແລະ ໃຫ້ຄຳອະທິບາຍໃນຮູບແບບທີ່ເຂົ້າໃຈງ່າຍ ກ່ຽວກັບ ບັນຫາສັງຄົມຕ່າງໆ ເຊິ່ງລວມທັງບັນຫາເຊື້ອ HIV, ການຕິດຢາເສບຕິດ ແລະ ກໍ່ຄວນຢ້ຳຄືນເລື້ອຍໆ ກ່ຽວກັບ ຫລັກທຳພື້ນຖານຂອງສາສະໜາພຸດທີ່ກ່ຽວຂ້ອງ ເຊັ່ນ: ການຮັກສາສິນ, ໃຫ້ເລື້ອຍທີ່ສຸດເທົ່າທີ່ຈະເຮັດໄດ້.

ໃນປະຈຸບັນ, ພະສົງໄດ້ສຸມໃສ່ວຽກງານການສະກັດກັ້ນ ແລະ ການຕໍ່ສູ້ກັບການລັງກຽດ ແລະ ຈຳແນກ ຜູ້ທີ່ຕິດເຊື້ອ HIV ເປັນຕົ້ນຕໍ. ໂຄງການແມ່ນກຳລັງດຳເນີນໄປຢ່າງຕໍ່ເນື່ອງ ຢູ່ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ, ຫລວງພະບາງ ແລະ ບໍ່ແກ້ວ. ຢູ່ໃນແຂວງອື່ນໆ, ພະສົງແມ່ນຍັງຂາດການຝຶກອົບຮົມ ແລະ ປະສົບການກ່ຽວກັບບັນຫາເຫລົ່ານີ້. ຈາກທັດສະນະລວມແລ້ວ, ໂຄງການໃນລະດັບນີ້ແມ່ນເປັນສິ່ງທ້າທາຍສຳລັບພະສົງ ແລະ ຄົນທົ່ວໄປ ເພາະມັນຈະຕ້ອງມີການປະສົມປະສານ ພະທຳຄຳສອນຂອງສາສາໜາພຸດທີ່ປັບປຸ່ງແລ້ວ ກັບການປະຕິບັດທີ່ເປັນຮູບປະທຳ. ບາງບັນຫາທີ່ເກີດຂຶ້ນໃນເວລາທີ່ດຳເນີນໂຄງການເຫລົ່ານີ້ ໄດ້ກ່າວໄວ້ໃນຕອນທ້າຍຂອງເອກະສານ.

## ການປ້ອງກັນການໃຊ້ຢາເສບຕິດ ແລະ ວຽກງານສັງຄົມ

ການໃຊ້ຢາເສບຕິດຂອງກຸ່ມຄົນໄວໜຸ່ມສາວ ແມ່ນບັນຫາທີ່ກຳລັງລະບາດຢູ່ໃນ ສປປ ລາວ, ສ່ວນໃຫຍ່ຢູ່ຕາມເຂດຕົວເມືອງໃຫຍ່ຕ່າງໆ. ນອກຈາກຢາທີ່ຖືກກົດໝາຍ ເຊັ່ນ: ເຫລົ້າ ແລະ ຢາສູບ ແລ້ວ, ສິ່ງທີ່ໜ້າເປັນຫ່ວງກວ່າໝູ່ແມ່ນການໃຊ້ຢາບ້າ. ພະສົງໄດ້ເລີ່ມສຸມໃສ່ວຽກງານໂຄສະນາເຜີຍແຜ່ ໂດຍມີສ່ວນພົວພັນກັບການປຸກລະດົມຕໍ່ຕ້ານຢາເສບຕິດໃນທົ່ວປະເທດ. ກິດຈະກຳຕ່າງໆລວມມີການໄປຢ້ຽມຢາມໂຮງຮຽນ ແລະ ສົນທະນາທຳມະ, ຮູບແບບການດຳລົງຊີວິດ ແລະ ຜົນກະທົບທີ່ເປັນອັນຕະລາຍ ຂອງຢາເສບຕິດຕໍ່ຈິດໃຈ ແລະ ຮ່າງກາຍ. ຜູ້ຂຽນ ໄດ້ສັງເກດເຫັນພະສົງນຳໃຊ້ວິທີເທດສະໜາທີ່ມີຊີວິດຊີວາ ແລະ ຮອບດ້ານ ເຊິ່ງແຕກຕ່າງກັບທິດສະດີການສອນແບບແຕ່ເທິງລົງລຸ່ມທີ່ມັກຖືກນຳໃຊ້ໂດຍທົ່ວໄປ (ການສອນທີ່ຜູ້ສອນມີສິດອຳນາດຜູ້ດຽວໃນການສິດສອນ ແລະ

---

*ສຳລັບສັງຄົມໃດໜຶ່ງ ທີ່ການຖ່າຍທອດ*

*ສິ່ງຕໍ່ຄວາມຮູ້ແມ່ນຍັງດຳເນີນໄປໂດຍຜ່ານວິທີການເລົ່າເລື່ອງ,*

*ເລົ່ານິທານນັ້ນ, ການເທດສະໜາ*

*ແມ່ນເປັນພາຫະນະໃນການນຳສິ່ງຂໍ້ມູນຂ່າວສານທີ່ມີປະສິດທິພາບ*

---

ຜູ້ຮຽນກໍ່ມີແຕ່ຮັບຢ່າງດຽວໂດຍບໍ່ສາມາດອອກຄຳຄິດຄຳເຫັນ ຫລື ແນະນຳ ໄດ້ເລີຍ). ໂດຍທົ່ວໄປແລ້ວການສິດສອນຈະອີງໃສ່ສິນຫ້າ, "ຂັນຕິ-ຄວາມອົດທົນ ຈາກສິ່ງຍົ້ວຍຸ ຊຶ່ງຈະເຮັດໃຫ້ເກີດການຂາດສະຕິ-ຄວາມປະໝາດ", ແລະ ເຫດ ແລະ ຜົນ ທີ່ຈະນຳໄປສູ່ການຕິດຢາເສບຕິດ ກໍເປັນຫົວຂໍ້ຂອງການເທດສະໜາ.

ບາງຄັ້ງ ໃນການເທດສະໜາ ໃນງານບຸນປະເພນີຕ່າງໆ, ກໍ່ໄດ້ມີການເຕືອນກ່ຽວກັບຜົນຮ້າຍຂອງການນຳໃຊ້ຢາເສບຕິດ. ສຳລັບສັງຄົມໃດໜຶ່ງ ທີ່ການຖ່າຍທອດ ສິ່ງຕໍ່ຄວາມຮູ້ແມ່ນຍັງດຳເນີນໄປໂດຍຜ່ານວິທີການເລົ່າເລື່ອງ, ເລົ່ານິທານ ນັ້ນ, ວິທີການເຫລົ່ານີ້ ແມ່ນເປັນພາຫະນະ ໃນການນຳສິ່ງຂໍ້ມູນຂ່າວສານທີ່ມີປະສິດທິພາບ. ນອກ ຈາກຈະມອບຄວາມມ່ວນຊື່ນ ແລະ ໂອກາດໃນການເຮັດບຸນແລ້ວ, ງານບຸນປະເພນີຕ່າງໆທີ່ຈັດຂຶ້ນຢູ່ວັດຍັງ ເປີດໂອກາດໃຫ້ມີການເຜີຍແຜ່ຂໍ້ມູນຂ່າວສານເພື່ອຊຸກຍູ້ປວງຊົນ ເຂົ້າໃນການປູກຈິດສຳນຶກ ແລະ ການຕ້ານ ແລະ ສະກັດກັ້ນຢາເສບຕິດ ໂດຍນຳໃຊ້ການເທດສະໜາທຳ. ຜູ້ສັງເກດການ ພາຍນອກ ມັກຈະປະເມີນຄ່າຂອງປະສິດທິພາບ ຂອງການເຮັດວຽກແບບເລົ່າເລື່ອງບໍ່ສູງເທົ່າທີ່ຄວນ: ໃນປະເທດລາວ, ພາສາ, ສັບຄຳເວົ້າຂອງສາສະໜາພຸດ, ການເຮັດບຸນເຊັ່ນ: ການຟັງທຳ ແລະ ການເທດສະໜາທຳ ຖືວ່າແມ່ນກິດຈະກຳການສຶກສາທຳມະຂັ້ນສູງ (Hallisey & Hansen, 1996). ເພື່ອໃຫ້ຂ່າວສານໄດ້ຖືກສົ່ງໃຫ້ຜູ້ຟັງຢ່າງເຂົ້າອົກເຂົ້າໃຈ, ເງື່ອນໄຂມີຢູ່ວ່າ ຮູບແບບການເທດສະໜາຂອງພະສົງແມ່ນເປັນທີ່ເຂົ້າໃຈໄດ້ງ່າຍໂດຍຄົນທົ່ວໄປ ແລະ ຫລີກລ້ຽງການໃຊ້ສັບສະເພາະທີ່ເປັນພາສາບາລີຫລາຍເກີນໄປ. ປະຈຸບັນ ມີພະສົງຫລາຍໆອົງໄດ້ເນັ້ນໜັກເລື່ອງດັ່ງກ່າວ.

## ສາສະໜາພຸດ ແລະ ນິເວດວິທະຍາ : ສາສະໜາພຸດ ເພື່ອໂຄງການພັດທະນາ

ນອກຈາກໂຄງການທີ່ດຳເນີນຮ່ວມກັບອົງການສາກົນ (Unicef) ແລະ ວຽກງານການຕ້ານ ແລະ ສະກັດກັ້ນຢາເສບຕິດ, ຊຶ່ງສ່ວນຫລາຍດຳເນີນເປັນກິດຈະກຳພິເສດຂອງແຕ່ລະວັດ. ປະຈຸບັນນີ້ພະສົງ ແລະ ຄາລະວາດ ໄດ້ຈັດຕັ້ງເປັນກຸ່ມນ້ອຍ ຂຶ້ນເພື່ອແນໃສ່ ການໜູນໃຊ້ສາສະໜາພຸດເຂົ້າໃນການ ພັດທະນາ ຫຼື 'ສາສະໜາພຸດທີ່ເຊື່ອມເຂົ້າກັບສັງຄົມ' ຢູ່ໃນ ສປປ ລາວ ໃຫ້ເປັນອົງການ ຫລື ຮູບການຈັດຕັ້ງໃດໜຶ່ງ ຢູ່ໃນ ສປປ ລາວ. ລັດຖະບານ (ໃນຮູບແບບຂອງອົງການພຸດທະສາສະໜາ ແລະ ແນວລາວສ້າງຊາດ) ໄດ້ອະນຸມັດການສ້າງຕັ້ງ 'ສາສະໜາພຸດເພື່ອໂຄງການພັດທະນາ'. ເປັນເວລາ 2-3 ປີມາແລ້ວ ທີ່ກຸ່ມນີ້ບໍ່ພຽງແຕ່ໄດ້ມີສ່ວນຮ່ວມຕົ້ນຕໍໃນວຽກງານປົກປັກຮັກສານິເວດວິທະຍາເທົ່ານັ້ນ, ແຕ່ກໍ່ຍັງມີການປະກອບສ່ວນ ກັບການໜູນໃຊ້ສາສະໜາເຂົ້າກັບການພັດທະນາຂະແໜງອື່ນໆອີກ, ບາງຄັ້ງກໍ່ໄດ້ປະກອບສ່ວນກັບສູນການຝຶກອົບຮົມ ການພັດທະນາ ແລະການມີສ່ວນຮ່ວມ. ໂຄງການຕ່າງໆ ເຊັ່ນ ການສ້າງຕັ້ງສູນເພາະພັນຕົ້ນໄມ້, ໂຄສະນາເຜີຍແຜ່ການຕ້ານການນຳໃຊ້ປຸ໋ຍເຄມີ ທີ່ເປັນອັນຕະລາຍ, ການພິມປຶ້ມຄູ່ມືນ້ອຍກ່ຽວກັບການສູນພັນ ຂອງສັດປ່າ, ເຊິ່ງເປັນການຮ່ວມມືກັບ ອົງການອະນຸລັກສັດປ່າ (WCS, 2004). ພາຍໃຕ້ການຮ່ວມມືກັບອົງການສາສະໜາອັງກິດ, ກຸ່ມພັນທະມິດເພື່ອສາສະໜາ ແລະ ການອະນຸລັກ, ກຸ່ມດັ່ງກ່າວໄດ້ລວບລວມເອົາຂໍ້ມູນເພື່ອສ້າງປຶ້ມຄູ່ມືກ່ຽວກັບສິ່ງແວດລ້ອມສຳລັບພະສົງ ເພື່ອເທດສະໜາຢູ່ໂຮງຮຽນປະຖົມ; ເພື່ອປະສົມປະສານພະທຳຄຳສອນຂອງສາສະໜາພຸດ ກັບ ຈິດສຳນຶກໃນການ

ປົກປັກຮັກສາສິ່ງແວດລ້ອມ. ອົງການພຸດທະສາສະໜາ ຍັງວາງແຜນທີ່ຈະເຮັດໃຫ້ວັດຕ່າງໆ ທີ່ຢູ່ໃນປ່າ ກາຍເປັນເຂດສະຫງວນທາງດ້ານນິເວດວິທະຍາ ແລະ ຍັງເປັນການສົ່ງເສີມວິຖີ 'ພຸດທະກະເສດ' ຕື່ມອີກ.

ເກືອບວ່າທັງຫມົດຂອງກິດຈະກໍາຕ່າງໆເຫລົ່ານີ້ ແມ່ນພາກສ່ວນຫນຶ່ງຂອງໂຄງການ ການສຶກສາອົບຮົມຫລັກສູດ ສາມປີ ຊຶ່ງຈັດໂດຍອົງການພຸດທະສາສະຫນາຂອງລາວ ຊຶ່ງມີພະສົງເຂົ້າຮ່ວມຫລາຍກ່ວາ 60 ອົງ ຈາກທົ່ວທຸກແຂວງຂອງ ສປປ ລາວ. ຄຽງຄູ່ກັບຫນ້າທີ່ ທີ່ເຮັດເປັນປະຈໍາ ເຊັ່ນ: ການນັ່ງສະມາທິ ແລະ ການສຶກສາທໍາມະ, ຈຸດປະສົງຂອງຫລັກສູດນີ້ ແມ່ນເພື່ອຝຶກອົບຮົມ ພະສົງ ແລະ ຄົນທົ່ວໄປເພື່ອໃຫ້ກາຍເປັນ 'ຜູ້ນໍາໃນການພັດທະນາຊຸມຊົນ', ເປົ້າຫມາຍຂອງຫລັກສູດດັ່ງກ່າວ ແມ່ນເພື່ອ "ປະສົມປະສານຫລັກ ເຫດ ແລະ ຜົນຂອງສາສະຫນາພຸດກັບວຽກງານສັງຄົມ, ໂດຍສະເພາະໃນລະດັບຮາກຫຍ້າ". (ສາສະຫນາພຸດເພື່ອໂຄງການພັດທະນາ, 2004). ຫລັກສູດຫນຶ່ງຂອງການຝຶກອົບຮົມນີ້ ປະກອບດ້ວຍ ຈຸດປະສົງຕ່າງໆ ດັ່ງລຸ່ມນີ້:

- ເພື່ອໃຫ້ເຂົ້າໃຈບັນຫາສັງຄົມສະໄຫມໃຫມ່ທີ່ສະຫລັບສັບຊ້ອນໃນປະຈຸບັນ ໃນລະດັບທ້ອງຖິ່ນ, ລະດັບ ພູມມິພາກ ແລະ ສາກົນ.
- ຍົກສູງສະຕິ ແລະ ທັດສະນະກ່ຽວກັບການພັດທະນາຊຸມຊົນທີ່ຍືນຍົງ.
- ຮັບປະກັນຄວາມສອດຄ່ອງກົມກຽວທາງດ້ານວັດທະນະທໍາໃນຊຸມຊົນ.
- ຮຽນຮູ້ວິທີທີ່ຈະນໍາໃຊ້ ຄວາມຫມາຍ ແລະ ແນວທາງ ຂອງສາສະຫນາພຸດເຂົ້າໃນການພັດທະນາທີ່ຍືນຍົງ.
- ພັດທະນາທັກສະທີ່ຈໍາເປັນສໍາລັບການຄຸ້ມຄອງບໍລິຫານອົງການຈັດຕັ້ງຂອງຊຸມຊົນ
- ຝຶກອົບຮົມ ແລະ ສ້າງຊັບພະຍາກອນມະນຸດໃນທ້ອງຖິ່ນເພື່ອການເຄື່ອນໄຫວວຽກງານຂອງຊຸມຊົນໂດຍການນໍາໃຊ້ວິຖີຂອງພຸດທະສາສະຫນາ
- ຊຸກຍູ້ການວິໄຈດ້ານສັງຄົມ ແລະ ຍົກສູງຈິດສໍານຶກກ່ຽວກັບບົດບາດ ຍິງ-ຊາຍ.

ຜູ້ຕາງຫນ້າຂອງ ສາສະຫນາພຸດເພື່ອໂຄງການພັດທະນາ ຫາກໍ່ເລີ່ມຕົ້ນພັດທະນາຮູບແບບຂອງການຫມູນໃຊ້ ສາສະຫນາພຸດເຊື່ອມເຂົ້າກັບການພັດທະນາ ຊຶ່ງເປັນຮູບແບບສະເພາະພິເສດ ສໍາລັບ ສປປ ລາວ. ຄະນະພະສົງທີ່ນໍາຫນ້າພາທາງ, ພະອາຈານ ຊາລີ ກັນຕະສີໂລ ທີ່ໄດ້ຮັບການເຄົາລົບນັບຖືຢ່າງສູງ ໄດ້ອະທິບາຍວ່າ ຄະນະພະສົງດັ່ງກ່າວ ໄດ້ ດໍາເນີນງານຢູ່ໃນໄລຍະຕົ້ນຂອງການພັດທະນາຮູບແບບແນວທາງ ການນໍາໃຊ້ສາສະຫນາພຸດກັບການພັດທະນາ ແລະ ກໍ່ກໍາລັງມີການປັບປຸງຮູບແບບການຈັດຕັ້ງຂອງຄະນະສົງດັ່ງກ່າວ ເພື່ອໃຫ້ມີຄວາມຫມັ້ນຄົງໃນຕໍ່ຫນ້າ. (ຂໍ້ມູນຈາກສົນທະນາສ່ວນຕົວກັບກັບພະອາຈານ ຊາລີ ກັນຕະສີໂລ, ພຶດສະພາ 2005). ມັນຈະຕ້ອງໃຊ້ເວລາອີກ 2-3 ປີ ທີ່ຈະສາມາດຕີລາຄາ ແລະ ປະເມີນຜົນ ເຖິງປະສິດທິພາບຂອງການຝຶກອົບຮົມ ແລະ ການຈັດຕັ້ງປະຕິບັດຍຸດທະສາດທີ່ໄດ້ຮຽນມາ. ຄວາມສໍາເລັດຂອງວຽກງານດັ່ງກ່າວ ຍັງຈະຂຶ້ນກັບວ່າ ຄວາມຄິດໃຫມ່ໆນີ້ຈະຖືກຮັບເອົາແນວໃດ ຕາມເງື່ອນໄຂຂອງ ລາວ ແລະ ຈະສາມາດເຊື່ອມເຂົ້າກັບທໍາມະ ໄດ້ແທ້ຈິງຄືແນວໃດ, ຍ້ອນວ່າ ຄາລະວາດໄດ້ສໍາຜັດກັບແນວຄິດດັ່ງກ່າວພຽງແຕ່ຫນ້ອຍດຽວ ຫລື ບໍ່ເຄີຍເລີຍ. ຫນ້າວຽກຫນຶ່ງທີ່ເປັນປະໂຫຍດ ຂອງຄະນະສົງ

ນີ້ແມ່ນ ການແນໃສ່ພັດທະນາ ຮູບແບບວິທີການທີ່ເຫມາະສົມໃນການແກ້ໄຂບັນຫາການພັດທະນາ, ການຝຶກອົບຮົມພະສົງໃນຫົວຂໍ້ຕ່າງໆທີ່ກ່ຽວຂ້ອງ ເຊິ່ງໃນທາງດຽວກັນກໍ່ເປັນການສ້າງ ຄວາມຮູ້ພື້ນຖານແກ່ພະສົງໃຫ້ແຫນັ້ນ. ການວາງຈຸດສຸມໃສ່ພື້ນຖານ ລະດັບຮາກຫຍ້າ ແລະ ການວາງແຜນເຜີຍແຜ່ແນວຄວາມຄິດດັ່ງກ່າວ ໃນແຂວງຕ່າງໆ ພາຍຫລັງທີ່ບັນດາພະສົງໄດ້ສຳເລັດ ການຝຶກອົບຮົມແລ້ວນັ້ນ ກໍ່ເປັນບັນຫາທີ່ສຳຄັນເຊັ່ນດຽວກັນ. ໃນໄລຍະທີ່ຜ່ານມາ ໂຄງການນີ້ ແມ່ນໂຄງການຂະຫນາດນ້ອຍ, ແຕ່ກໍ່ອາດມີ ຜົນສະທ້ອນທີ່ມີປະສິດທິຜົນແບບຄ່ອຍເປັນຄ່ອຍໄປ ແລະ ຕໍ່ເນື່ອງເພາະໂຄງການໄດ້ຢູ່ບົນພື້ນຖານຄວາມຍືນຍົງໂດຍໃຊ້ຄ່າໃຊ້ ຈ່າຍບໍ່ສູງ, ຊຶ່ງໄດ້ມີການປະກອບສ່ວນຈາກວັດທ້ອງຖິ່ນ ແລະ ດຶງເອົາຄົນຫນຸ່ມສາວໃນຊຸມຊົນເຂົ້າຮ່ວມໃນໂຄງການ

## ຂໍ້ຈຳກັດ ແລະ ສິ່ງທີ່ຕ້ອງຄຳນຶງ

ສາມໂຄງການທີ່ໄດ້ກ່າວມາຂ້າງເທິງນັ້ນ ໄດ້ສະແດງໃຫ້ເຫັນວ່າ ພາກສ່ວນນ້ອຍໃນຄະນະສົງຂອງລາວ ກຳລັງມີຄວາມຈູບຈ້າວຫ້າວຫັນ ໃນການແກ້ໄຂບັນຫາສັງຄົມ ໃນປະຈຸບັນ. ພວກເພິ່ນ ກຳລັງພະຍາຍາມຝຶກແອບການນຳໃຊ້ສາສະຫນາພຸດທີ່ມີ ທຳມະ ເປັນຮາກຖານ, ແຕ່ກໍ່ກຳລັງພະຍາຍາມປະກອບສ່ວນໃນການແກ້ໄຂປະກົດການຫຍໍ້ທໍ້ ໃນສັງຄົມລາວເຊັ່ນດຽວກັນ. ວິຖີທາງທີ່ໂຄງການເຫລົ່ານີ້ຈະຈຸດປະກາຍ ລິເລີ່ມກິດຈະກຳອື່ນໆ ແລະ ສືບຕໍ່ຂະຫຍາຍການພັດທະ ນາສັງຄົມແມ່ນຈຳເປັນຕ້ອງຂຶ້ນກັບໂຄງສ້າງພາຍໃນ ແລະ ຄວາມອາດສາມາດຂອງຄະນະສົງ ແລະ ວຽກງານໃນຂະແຫນງອື່ນໆອີກຫລາຍຂະແຫນງທີ່ ຄະນະສົງໄດ້ມີສ່ວນຮ່ວມ.

ການມີສ່ວນຮ່ວມຂອງພະສົງໃນປະຈຸບັນແມ່ນ ອີງໃສ່ອຳນາດທົ່ວໄປ ແລະ ອິດທິພົນທີ່ຄູບາມີຕໍ່ບັນດາຊຸມຊົນ ແລະ ຄົນທົ່ວໄປ. ທຶນຮອນດ້ານສັງຄົມທີ່ພະສົງມີ ແມ່ນ ຊັບພະຍາກອນທີ່ດີເລີດທີ່ສາມາດນຳໃຊ້ເຂົ້າໃນການແຈກຢາຍຂໍ້ມູນ ແລະ ດຳເນີນວຽກງານການປ້ອງກັນໃນທຸກໆ ດ້ານ

---

*ພະສົງບໍ່ໄດ້ເປັນຜູ້ເທດສະຫນາໂດຍກົງ, ແຕ່ເຮັດວຽກຮ່ວມກັບ*
*ຄົນທົ່ວໄປ ເຊິ່ງເປັນຜູ້ທີ່ໂອ້ລົມກ່ຽວກັບບັນຫາຕ່າງໆທີ່ກ່ຽວຂ້ອງ*

---

ທີ່ກ່ຽວກັບບັນຫາຕ່າງໆໃນການພັດທະນາ. ພະສົງຫລາຍໆອົງ ໄດ້ຮັບຮູ້ດີເຖິງບັນຫາໃນສັງຄົມປະຈຸບັນ ແລະ ກໍ່ກະຕືລືລົ້ນທີ່ຈະເຮັດຫນ້າທີ່ຕ່າງໆທີ່ ຈະສາມາດລວມເອົາກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບການສິດສອນສາສະຫນາພຸດ, ແຕ່ກໍ່ຄຽງຄູ່ໄປກັບ ການຂະຫຍາຍບົດບາດດັ້ງເດີມຂອງພະສົງອອກໄປໃຫ້ກ້ວາງ. ເຖິງຢ່າງໃດກໍ່ຕາມ ການສ້າງຊັບພະຍາ ກອນມະນຸດໃນຄະນະສົງແມ່ນເປັນບັນຫາ ເພາະພະສົງຍັງຂາດທັກສະພື້ນຖານ ເຊັ່ນ: ການຂຽນບົດສະເຫນີແຜນການ, ການວາງແຜນ, ການລົງມືປະຕິບັດ ແລະ ການຕິດຕາມ. ຄະນະສົງບໍ່ມີຊັບພະຍາກອນ ແລະ

ປະສົບການ ໃນການເຮັດການຝຶກອົບຮົມ ແລະ ບໍ່ວ່າຈະເປັນລັດຖະບານ ລາວ ຫລື ອົງການສາກົນ ເກືອບທັງຫມົດ (ຍົກເວັ້ນ Unicef, ARC ແລະ WCS) ແມ່ນບໍ່ໄດ້ສະແດງຄວາມສົນໃຈ ໃນການເສີມສ້າງ ຍົກລະດັບ ທັກສະເຫລົ່ານີ້ໃຫ້ພະສົງເລີຍ. ພາຍໃນຄະນະສົງຂອງລາວ, ມີພຽງແຕ່ 'ສາສະຫນາພຸດເພື່ອໂຄງການການພັດທະນາ' ທີ່ມີແຜນການທີ່ຫລາກຫລາຍ (ແຕ່ບໍ່ມີທຶນຮອນ) ໃນການກໍ່ສ້າງຄວາມອາດສາມາດເຫລົ່ານີ້. ວິທະຍາໄລສົງ ຢູ່ວັດອົງຕື້ ອາດເປັນສະຖານທີ່ ທີ່ໃຊ້ ສິດສອນຫົວຂໍ້ຕ່າງໆ ເຊັ່ນ: ການພັດທະນາສັງຄົມ ແລະ ວຽກງານສັງຄົມ. ແຕ່ໃນປະຈຸບັນ ວິທະຍາໄລ ດັ່ງກ່າວ ບໍ່ມີທຶນ ແລະ ບໍ່ມີປະສົບການທີ່ ຈະຂະຫຍາຍແຜນງານດັ່ງກ່າວ ແລະ ລວມເອົາ ວິຊາເຫລົ່ານັ້ນ ເຂົ້າໃນຫລັກສູດ.

ມັນຕ້ອງຖືກກ່າວອີກວ່າ ບໍ່ແມ່ນພະສົງທຸກອົງ ຫລື ຄົນທົ່ວໄປທຸກຄົນທີ່ເຊື່ອຫມັ້ນວ່າບົດບາດ ໃຫມ່ເຫລົ່ານີ້ແມ່ນຫນ້າທີ່ຂອງຄະນະສົງ. ຄົນສ່ວນຫນ້ອຍ ແມ່ນຢາກໃຫ້ ພະສົງ ຢູ່ໃນຂະ ແຫນງການ ຫລື ພາກສ່ວນທີ່ ພະສົງ ເຄີຍຢູ່ແຕ່ດັ້ງເດີມ ແລະ ບໍ່ໃຫ້ ພະສົງ ເຮັດຫນ້າທີ່ ຕ່າງໆທີ່ສາມາດກ່ຽວພັນ ກັບວຽກງານສັງຄົມ ຫລື ມີສ່ວນພົວພັນຢ່າງຫ້າວຫັນໃນສັງຄົມ. ເວລາທີ່ ພະສົງ ມີສ່ວນພົວພັນກັບ ໂຄງການຕ່າງໆທີ່ຢູ່ທາງໂລກ, ຈະມີຄວາມຢ້ານກົວຢູ່ສະເຫມີວ່າ ພະສົງ ອາດຈະເສຍຄວາມເປັນພະ ແລະ ຄວາມສັນໂດດ ແລະ ອາດຈະລະເມີດວິໄນຂອງສົງ. ຝ່າຍຄ້ານອະນຸລັກນິຍົມຂອງສາສະຫນາ ພຸດທີ່ເຊື່ອມເຂົ້າກັບສັງຄົມ ໃນປະເທດໄທ ໄດ້ໃຊ້ຄໍາຄັດຄ້ານນີ້ ໃນການກໍານົດຢ່າງເຂັ້ມງວດ ຕໍ່ບົດບາດຂອງສາສະຫນາພຸດໃນສັງຄົມ ແລະ ຮຽກຮ້ອງໃຫ້ມີ ການກັບໄປສູ່ສາສະຫນາພຸດອັນ ດັ້ງເດີມ ທີ່ບໍ່ຫຍຸ້ງກ່ຽວ ແລະ ຢູ່ຫ່າງໄກຈາກ ເຫດການທາງໂລກ. ໃນໂຄງການປ້ອງກັນເຊື້ອ HIV ໃນລາວ, ໄດ້ມີຄວາມຫວັ່ນວິຕົກວ່າຫົວຂໍ້ດັ່ງກ່າວ ອາດເປັນບັນຫາຕໍ່ກັບວິໄນສົງຂອງສາສະຫນາພຸດ. ການປະນີປະນອມໄດ້ເກີດຂຶ້ນຄື: ພະສົງບໍ່ໄດ້ເປັນຜູ້ເທດສະຫນາໂດຍກົງ, ແຕ່ເຮັດວຽກຮ່ວມກັບ ຄົນທົ່ວໄປ (ສ່ວນໃຫຍ່ແມ່ນອາສາສະຫມັກໄວຫນຸ່ມສາວໃນຕົວເມືອງຈາກແນວລາວສ້າງຊາດ) ເຊິ່ງເປັນຜູ້ທີ່ໂອ້ລົມກ່ຽວກັບບັນຫາຕ່າງໆທີ່ກ່ຽວຂ້ອງ. ສ່ວນພະສົງ ແມ່ນສຸມໃສ່ ຄວາມຫມາຍ ແລະ ແນວທາງ ທີ່ມີຫນ້າທີ່ໃນການເຮັດໃຫ້ຄົນ ຄິດຕຶກຕອງ ກ່ຽວກັບຫົວຂໍ້ຕ່າງ ທີ່ກ່ຽວພັນກັບເຊື້ອ HIV. ໃນກໍລະນີນີ້, ມັນມີບັນຫາໃນການຊອກຫາແນວທາງ ຫລື ແບບແຜນ ທີ່ຖືກຕ້ອງ ແລະ ເຫມາະສົມສໍາ ລັບການ ຕີຄວາມຫມາຍ ການສິດສອນສາສະຫນາພຸດ ຄືນໃຫມ່ ຫລາຍກ່ວາການ ເລືອກລະຫວ່າງ 'ແມ່ນ' ຫລື 'ບໍ່ແມ່ນ'. ກົດລະບຽບຕ່າງໆຂອງການປະພຶດຂອງສົງ, ເຊິ່ງເປັນ ແຫລ່ງກໍາເນີດຂອງ ອໍານາດຂອງສົງ, ໃນເກືອບທຸກໆກໍລະນີ, ສາມາດຖືກປັບປຸງ ແລະ ດັດແປງ ເຊິ່ງເຮັດໃຫ້ ເປັນທີ່ ເຫມາະສົມ ແລະ ກ່ຽວພັນກັບ ວຽກງານພັດທະນາ. ເຖິງແນວໃດກໍ່ຕາມ, ການມີສ່ວນຮ່ວມຂອງພະສົງ ຮຽກຮ້ອງໃຫ້ມີຂະບວນການ ການວາງແຜນທີ່ລະມັດລະວັງ ແລະ ຜ່ານການຕຶກຕອງທີ່ດີ.

---

***ຄະນະສົງລາວຂາດເຂີນທຶນຮອນ ແລະ***

***ໂອກາດໃນການຝຶກອົບຮົມຢູ່ຕະຫລອດເວລາ***

---

ໃນໂຄງການເມດຕາທຳເຊັ່ນດຽວກັນ, ມັນເປັນທີ່ຈະແຈ້ງວ່າ ເຖິງຈະມີຄວາມກະຕືລືລົ້ນ ທີ່ສະແດງອອກໂດຍ ພະສົງທີ່ມີພັນສາຍັງອ່ອນ, ແຕ່ກໍ່ຍັງຂາດທາງດ້ານປະສົບການໃນ ການຮັບມື ກັບວຽກງານໃຫມ່ນັ້ນ. ຄົນສ່ວນໃຫຍ່ທີ່ເຂົ້າຮ່ວມການຝຶກອົບຮົມໃນຫມູ່ບ້ານທີ່ມີ ຄົນຕິດເຊື້ອ HIV ໄດ້ສະແດງປະຕິກິລິຍາທາງດ້ານບວກ; ແຕ່ກໍ່ມີຄົນສ່ວນຫນ້ອຍ ແລະພະສົງຜູ້ອາວຸໂສ ແລະ ອະນຸລັກນິຍົມໄດ້ຕຳນິຕິຕຽນ ແລະ ບໍ່ເຫັນດີກັບການມີສ່ວນຮ່ວມຂອງຄະນະສົງ. ຜູ້ອາວຸໂສຂອງ ຄະນະສົງສ່ວນໃຫຍ່ ແມ່ນກະຕືລືລົ້ນ ແຕ່ກໍ່ຮັບຮູ້ວ່າ ຂາດປະສົບການໃນການປະເຊີນກັບບັນຫາ HIV/AIDS. ພະສົງຜູ້ອາວຸໂສ ຮູ້ສຶກວ່າ ພວກເພິ່ນບໍ່ຮູ້ເຖິງທາງເລືອກທຸກ ທາງທີ່ວຽກງານ ນີ້ອາດຈະມີສ່ວນພົວພັນນຳແລະ ກໍ່ຂາດທັກສະໃນການຈັດຕັ້ງ ເພື່ອຈະດຳ ເນີນວຽກງານ ທີ່ໄດ້ຮັບການສະເຫນີມາ. ຕໍ່ກັບບັນຫາດັ່ງກ່າວ, ອົງການ Unicef ໄດ້ປະເມີນຜົນທີ່ໄດ້ ຮັບ ພາຍຫລັງທີ່ວຽກງານໄດ້ດຳເນີນໄປຫນຶ່ງປີ ແລະ ກໍ່ໄດ້ແນະນຳວິທີທີ່ຈະປັບປຸງ ແລະເຮັດໃຫ້ແຜນງານດີຂຶ້ນ (Unicef, 2003a).

ບາງຈຸດທີ່ໄດ້ກ່າວໃນບົດລາຍງານ ແມ່ນເປັນຕົວຢ່າງທີ່ດີທີ່ ສຸດສຳລັບການ ເຮັດວຽກກັບພະສົງທີ່ຂາດປະສົບການດ້ານ ການເຄື່ອນໄຫວທາງສັງຄົມ ແລະ ມີສ່ວນພົວພັນແບບໂດຍກົງກັບວຽກງານຫນ້ອຍ. ໃນຕອນເລີ່ມຕົ້ນ ພະສົງໄດ້ສຸມໃສ່ການເທດສະຫນາ ແລະ ບໍ່ໄດ້ມີການໂອ້ລົມສື່ສານ ກັບຜູ້ທີ່ຕິດເຊື້ອ ໃນຂະນະທີ່ ພະສົງທີ່ມີພັນສາຍັງອ່ອນແມ່ນກະຕືລືລົ້ນຫລາຍ, ພະສົງຜູ້ອາວຸໂສ ແລະ ເຈົ້າອະທິການວັດ ບາງເທື່ອກໍ່ສະແດງຄວາມສົນໃຈພຽງເລັກນ້ອຍ ຫລືບໍ່ມີຄວາມສົນໃຈເລີຍ ຕໍ່ກັບກິດຈະກຳໃຫມ່ໆ. ໃນຫລາຍໆກໍລະນີ, ເປັນທີ່ສັງເກດເຫັນວ່າ ພະສົງບໍ່ໄດ້ມີຄວາມເຂົ້າໃຈຢ່າງແທ້ຈິງວ່າ ພວກເພິ່ນຄວນມີສ່ວນຮ່ວມກັບວຽກງານສັງຄົມແນວໃດ ແລະເປັນຫຍັງຄວນມີສ່ວນຮ່ວມກັບວຽກງານສັງຄົມ (ibid). ການເຂົ້າເຖິງຜູ້ຟັງ ກໍ່ແມ່ນອີກ ບັນຫາຫນຶ່ງ. ຄົນສ່ວນໃຫຍ່ທີ່ເຂົ້າມາຮ່ວມໃນງານບຸນວັດຕ່າງໆແມ່ນອາຍຸ 50 ປີຂຶ້ນໄປ. ເພື່ອແກ້ໄຂ ບັນຫາດັ່ງກ່າວອົງການພຸດທະສາສະຫນາລາວ ໄດ້ສ້າງຕັ້ງ ໂຄງການ ການອຸປະສົມບົດ ຂຶ້ນ, ເຊິ່ງໂຄງການດັ່ງກ່າວໄດ້ຈັດພິທີ ອຸປະສົມບົດ ແບບຊົ່ວຄາວ 1 ອາທິດ ສຳລັບເດັກຍິງ ແລະ ຊາຍ ໃນຂອບເຂດນະຄອນຫລວງວຽງຈັນ ບວກກັບການຝຶກອົບຮົມ ດ້ານ ຄວາມຫມາຍ ແລະ ແນວທາງ, ສິນທຳຂອງສາສະຫນາພຸດ, ແລະກໍ່ຮວມມີ ການປ້ອງກັນເຊື້ອ HIV ແລະ ການຕໍ່ຕ້ານ ການໃຊ້ ຢາເສບຕິດ.

ອາຍຸ, ປະສົບການ ແລະ ຄວາມເຫມາະສົມຂອງ ຄະນະສົງລາວ ສຳລັບວຽກງານປະເພດນີ້ກໍ່ເປັນອີກປັດໄຈສຳຄັນປັດໄຈຫນຶ່ງ ທີ່ຈຳກັດຄວາມອາດສາມາດຂອງວຽກງານ. ຄະນະສົງທີ່ເຮັດວຽກງານນີ້ ສ່ວນໃຫຍ່ແມ່ນປະກອບດ້ວຍສາມະເນນ ແລະ ພະສົງທີ່ລາສິກຂາ ພາຍຫລັງການສຶກສາໄດ້ສິ້ນສຸດແລ້ວ. ຍ້ອນເປັນໂຮງຮຽນກິນນອນຂອງວັດ, ມັນໄດ້ເປີດ ໂອກາດແກ່ຊາຍໄວ ຫນຸ່ມຫລາຍໆຄົນທີ່ມາຈາກຊົນນະບົດໄດ້ຮັບການສຶກສາໃນລະດັບຂັ້ນທີ່ສູງ - ໂອກາດທີ່ພວກເຂົາອາດຈະບໍ່ມີເລີຍ ຖ້າບໍ່ໄດ້ເຂົ້າໂຮງຮຽນດັ່ງກ່າວ. ໂດຍສະເລ່ຍແລ້ວ ພະສົງໃຊ້ເວລາພຽງແຕ່ 4 ປີໃນການຮຽນຮູ້ທຳມະກັບຄະນະສົງ. ຜົນທີ່ຕາມມາກໍ່ຄື ພະສົງອົງທີ່ມີອາຍຸ 30 ປີຂຶ້ນໄປ (ປະມານ 57% ຂອງ ຄະນະສົງ) ມີວຽກງານດ້ານບໍລິຫານ ໃນໄລຍະຍາວ ທີ່ບາງເທື່ອກໍ່ສ້າງຄວາມກົດດັນໃຫ້ພະສົງ. ພະສົງຕ້ອງປະຕິບັດພິທີກຳທາງສາສະຫນາກັບປະຊາຊົນ, ດູແລກຸຕິວິຫານວັດ ແລະເບິ່ງແຍງສາມະເນນຈຳນວນຫລາຍໆອົງ. ເວລາເຫລືອສຳລັບການຄົ້ນຄວ້າວິຊາ ການຂະແຫນງໃຫມ່ໆ ແລະ ຮຽນຮູ້ວິທີການໃຫມ່ໆ ແມ່ນຈຳກັດ. ມັນອາດເປັນການສົມຄວນທີ່ ຈະມອບການຝຶກ

ອົບຮົມ ດ້ານວຽກງານສັງຄົມ ແລະ ວຽກງານການພັດທະນາໃຫ້ພະສົງຢ່າງຫນ້ອຍ 2-3 ອົງ, ເຊິ່ງພະເຫລົ່ານັ້ນໄປສາມາດສົ່ງຕໍ່ຄວາມຮູ້ດັ່ງກ່າວໃຫ້ພະສົງອົງອື່ນໆທີ່ສົນໃຈ. ໂຄງຮ່າງທາງດ້ານຊົນເຜົ່າຂອງລາວ ກໍ່ຄວນຖືກຄໍານຶງ: ອົງໃສ່ການຄາດຄະເນທີ່ບໍ່ເປັນທາງການ, ປະມານ 30 40% ຂອງປະຊາກອນ ບໍ່ໄດ້ຖືສາສະຫນາພຸດ. ຈິດສໍານຶກດ້ານບົດບາດຍິງ-ຊາຍ ກໍ່ເປັນອີກບັນຫາຫນຶ່ງທີ່ຕ້ອງຄໍານຶງ. ມີພຽງແມ່ຂາວຈໍານວນຫນ້ອຍດຽວທີ່ເຂົ້າ ຮ່ວມໃນບັນດາໂຄງການຕ່າງໆ ແລະ ມັນອາດເປັນສິ່ງທີ່ພຶງປາຖະຫນາທີ່ຈະເພີ່ມຈໍານວນແມ່ຂາວ, ເຊິ່ງກໍ່ເປັນການເສີມສ້າງ ເພີ່ມພູນຈິດສໍານຶກກ່ຽວກັບບົດບາດຍິງ-ຊາຍ, ເພີ່ມພູນຄວາມ ອາດສາມາດໃນການຊອກຫາກຸ່ມເປົ້າຫມາຍໃນການຮັບການຊ່ວຍເຫລືອ ແລະ ປະສິດຕິຜົນ ຂອງບັນດາໂຄງການຕ່າງໆ.

**ສະຫລຸບ**

ການມີສ່ວນຮ່ວມຂອງພະສົງ ແມ່ນອນວ່າບໍ່ແມ່ນຕົວເລືອກທົ່ວໄປທີ່ ສາມາດນໍາໃຊ້ໄດ້ ໃນທຸກຂະແຫນງການຂອງການພັດທະນາ. ການມີສ່ວນຮ່ວມຂອງ ຄະນະສົງ ຂອງລາວໃນການ ພັດທະນາຂອງປະເທດ ຕ້ອງຖືກຈັດຂຶ້ນໂດຍມີສ່ວນພົວພັນກັບ ທຶນຮອນຂອງສັງຄົມ. ການປ້ອງກັນ, ການສຶກສາ ແລະ ການໂຄສະນາຂໍ້ມູນຂ່າວສານ ແມ່ນເປັນສິ່ງທີ່ເຫມາະສົມ ແລະ ວຽກງານສັງຄົມທີ່ກ່ຽວພັນກັບການໃຊ້ຢາເສບຕິດ, ນິເວດວິທະຍາ, ຂະແຫນງການສາທາລະນະສຸກ ແລະ ວຽກງານທີ່ກ່ຽວພັນກັບ HIV/AIDS ກໍ່ສາມາດນໍາໃຊ້ໄດ້, ເພາະການສິດສອນຫລັກທໍາ ຂອງສາສະຫນາພຸດສາມາດນໍາໃຊ້ເຂົ້າໃນກໍລະນີເຈາະຈົງ ໃນຂະແຫນງວຽກງານເຫລົ່ານີ້ ໄດ້ຢ່າງງ່າຍດາຍ. ທາງເລືອກອື່ນໆໃນການທີ່ຈະນໍາເອົາພະສົງເຂົ້າມາມີສ່ວນຮ່ວມ ແມ່ນຫນ້ອຍຫນັກ ຫນ້ອຍຫນາທີ່ຈະຖືກຄໍານຶງເຖິງ ຍ້ອນບາງເຫດຜົນ. ສິ່ງທໍາອິດກໍ່ແມ່ນບັນຫາທາງດ້ານຄໍານິຍາມ ຂອງຫນ້າທີ່ຮັບຜິດຊອບຂອງ ພະສົງ ໃນສັງຄົມ. ບາງທີ ສິ່ງທີ່ຈໍາເປັນຕ້ອງໄດ້ເຮັດແມ່ນຄະນະສົງເປີດການສົນທະນາແບບເປີດກ້ວາງ ກ່ຽວກັບບົດບາດຂອງຄະນະສົງໃນສັງຄົມ, ກ່ຽວກັບຄວາມສໍາຄັນຂອງວຽກງານສັງຄົມ ຫລື ວຽກງານການພັດທະນາ ແລະ ສ່ວນພົວພັນຂອງວຽກງານເຫລົ່ານັ້ນກັບທໍາມະ. ບັນຫາທີສອງກໍ່ແມ່ນ ຄະນະສົງ ມີສິ່ງອໍານວຍຄວາມສະດວກທີ່ຈໍາກັດ ແລະມັນກໍ່ມີຄວາມຈໍາເປັນ ທີ່ກ່ອນອື່ນຫມົດ ຕ້ອງຮັບປະກັນດ້ານຄວາມຮູ້ໃນລະດັບທີ່ແນ່ນອນໃດຫນຶ່ງຂອງການສິດສອນຫລັກທໍາໃນຄະນະສົງ ເອງ ກ່ອນທີ່ຈະເຜີຍແຜ່ໄປສູ່ຂະແຫນງການໃຫມ່ອື່ນໆ. ຄະນະສົງ ກໍ່ຄືກັບສະຖາບັນອື່ນໆໃນ ລາວ, ມັກຈະຂາດເຂີນທຶນຮອນ ແລະ ໂອກາດໃນການຝຶກອົບຮົມຢູ່ຕະຫລອດເວລາ ແລະ ການມີສ່ວນຮ່ວມກັບວຽກງານພັດທະນາຈະເປັນປະໂຫຍດໄດ້ກໍ່ຕໍ່ເມື່ອ ຫນ້າທີ່ປະຈໍາວັນຂອງ ພະສົງໄດ້ສໍາເລັດແລ້ວ.

ອີກດ້ານຫນຶ່ງ, ສະຖານະການທີ່ລໍາບາກຂອງ ບັນດາໂຄງການທີ່ກ່າວມາຂ້າງເທິງໄດ້ຜ່ານພົ້ນມາ, ຄວາມສໍາເລັດ ແລະ ຄວາມກະຕືລືລົ້ນຂອງ ພະສົງທີ່ມີພັນສາຍັງອ່ອນ ກໍ່ແມ່ນສັນຍານຂອງການທຸ່ມເທທີ່ເຕັມປ່ຽມ. ທຸ່ມເທນີ້ ອາດຈະກໍ່ໃຫ້ເກີດ ມີການຮ່ວມແຮງຮ່ວມໃຈກັນຂອງຫລາຍພາກສ່ວນໃນອະນາຄົດ ແລະ ກໍ່ຄ່ອຍໆ ນໍາໄປສູ່ການເກີດມີ 'ກຸ່ມພະສົງທີ່ຊໍານິຊໍານານໃນວຽກງານພັດທະນາ' ກຸ່ມນ້ອຍກຸ່ມຫນຶ່ງ ທີ່ມີຍຸດທະສາດການເຮັດວຽກທີ່ເຫມາະສົມ. ການແລກປ່ຽນຄວາມຮູ້ກັບ ປະເທດໄທ ແລະ ປະເທດພຸດອື່ນໆ ສາມາດຊ່ວຍໃຫ້ໄດ້ຮັບຫມາກ

ຜົນດັ່ງກ່າວ, ແຕ່ຊຸມຊົນສາກົນ ແລະ ຄວາມຕັ້ງໃຈຂອງລັດຖະບານລາວ ໃນການສະໜອງທຶນ, ການຝຶກອົບຮົມ ແລະ ໂອກາດໃນໂຄງການທີ່ເໝາະສົມ ກໍ່ສຳຄັນເຊັ່ນດຽວກັນ.

## ກ່ຽວກັບຜູ້ຂຽນ

ທ່ານ Patrice Ladwig (PL255@cam.ac.uk) ແມ່ນນັກສຶກສາປະລິນຍາເອກ ດ້ານມະນຸດວິທະຍາທາງສັງຄົມ ຢູ່ມະຫາວິທະຍາໄລແຄມບຣິດຈ໌ (University of Cambridge). ປະຈຸບັນ, ຜູ້ຂຽນກຳລັງເຮັດວຽກກ່ຽວກັບສາສະໜາພຸດຂອງລາວໃນສັງຄົມຮ່ວມສະໄໝ ແລະ ຢາກກ່າວຄຳຂອບໃຈຕໍ່ ຄູບາ, ແມ່ຂາວ, ສາມະເນນ ທຸກອົງ ແລະ ພຸດທະສາສະນິກະຊົນທຸກຄົນ ທີ່ໄດ້ແບ່ງປັນຄວາມຄິດຕ່າງໆກັບຜູ້ຂຽນ. ຜູ້ຂຽນ ຂໍສະແດງຄວາມຮູ້ບຸນຄຸນພິເສດມາຍັງ ອົງການພຸດທະສາສະໜາລາວ, ກົມສາສະໜາຂອງແນວລາວສ້າງຊາດ, ກຸ່ມສາສະໜາພຸດ ເພື່ອການພັດທະນາ, ກຸ່ມພັນທະມິດເພື່ອສາສະໜາ ແລະ ການອະນຸລັກ, ອົງການອະນຸລັກສັດປ່າ ແລະ ພະສົງທີ່ເປັນຄູ ແລະ ນັກຮຽນທຸກອົງ ທີ່ຢູ່ ວິທະຍາໄລສົງວັດອົງຕື້, ນະຄອນຫລວງວຽງຈັນ. ເຖິງຢ່າງໃດກໍ່ຕາມ, ຄວາມຄິດເຫັນທີ່ ຖ່າຍທອດອອກມາໃນເອກະສານນີ້ ແມ່ນເປັນຂອງຜູ້ຂຽນ ເກືອບທັງໝົດ.

### ເອກະສານອ້າງອີງ

Boutsavath, V. & Chapelier, G. 1973. "Lao Popular Buddhism and Community Development". *Journal of the Siam Society*, Vol. LXI (2).

Condominas, G. 1998. *Le Bouddhisme au Village*. Vientiane.

Foucault, M. 1997. *Ethics* (ed. by Paul Rabinow). London.

Greely, A. 2001. "Coleman Revisited: Religious Structures as a Source of Social Capital", in Edwards, B., Foley M.W. & Diani, M. (eds.). *Beyond Toqueville – Civil Society and the Social Capital Debate in Comparative Perspective*. Hanover/London.

Hallisey, C. & Hansen, A. 1996. "Narrative, Subethics and the Moral Life. Some Evidence from Theravada Buddhism". *Journal of Religious Ethics*, Vol. 24(2).

Harris, I. 1995. "Getting to Grips with Buddhist Environmentalism: A Provisional Typology". *Journal of Buddhist Ethics*, Vol.2.

Phomvihane, K. 1992. *Resolution of the Central Committee of the Lao Revolutionary Party Concerning Religion*. Vientiane [in Lao].

Putnam, R. 2000. *Bowling Alone: The Collapse and Revival of American Community*. New York.

Queen, C.S. & King, S.B. 1996. *Engaged Buddhism: Buddhist Liberation Movements in Asia*. Albany.

Rajavaramuni, P. 1990. "Foundations of Buddhist Social Ethics", in: Sizemore, R.F. & Swearer, D.K. *Ethics, Wealth and Salvation. A Study in Buddhist Social Ethics*. Columbia.

Rawls, J. 1971. *A Theory of Justice*. Harvard.

Unicef. 2003. *Strategy Monitoring and Evaluation Framework: Buddhist Leadership Initiative*. Bangkok.

Unicef. 2003a. "The Regional Buddhist Leadership Initiative – Mekong Partnership and Beyond", (www.unicef.org/eaprohivaids/regpro/buddhist_response).

Vannasopha, Maha K. 2003. *Religious Affairs in the Lao PDR*. Vientiane.

Vichit, Dr. Phra Maha (Singalaat). 2003. "Speech Given at the Third Buddhist Summit in the Kingdom of Cambodia", in Vannasopha, Maha K. *Religious Affairs in Lao PDR*. Vientiane.

WCS. 2004. *Man Raises Animal – Animal Raises Man. Merit and Demerit*. Vientiane [in Lao].

# ການສ້າງເຂື່ອນໃນ ສປປ ລາວ: ສຽງທີ່ສະທ້ອນຄວາມຄິດເຫັນຂອງແມ່ຍິງ

ໂດຍ: ປ່າຟີວລີ ລີຈີ່ຜູງ

*ການພັດທະນາເຂື່ອນໄຟຟ້ານ້ຳຕົກແມ່ນຫົວຂໍ້ທີ່ສຳຄັນສຳລັບ ສປປ ລາວ ເນື່ອງຈາກວ່າ ພະລັງງານ ໄຟຟ້ານ້ຳຕົກ ໄດ້ຖືກຖືວ່າເປັນໜຶ່ງໃນບັນດາແຫລ່ງລາຍຮັບອັນຕົ້ນຕໍຂອງປະເທດ. ການພັດທະນາເຂື່ອນໄຟຟ້ານ້ຳຕົກ ແມ່ນມີຜົນກະທົບທາງບວກ ແລະ ທາງລົບຕໍ່ປະຊາຊົນ ລາວ, ໂດຍສະເພາະແມ່ນປະຊາຊົນໃນເຂດຊົນນະບົດ. ເອກະສານນີ້ ໄດ້ສຶກສາເຖິງຄວາມຮູ້ສຶກຂອງແມ່ຍິງຜູ້ທີ່ໄດ້ຮັບຜົນກະທົບຈາກການກໍ່ສ້າງເຂື່ອນ ແລະ ໝາກຜົນທີ່ໄດ້ຮັບຈາກເຂື່ອນ, ເຊິ່ງລວມມີການຍົກຍ້າຍ-ຈັດສັນບ່ອນຢູ່ອາໄສ, ການຕໍ່ໄຟຟ້າເຂົ້າເຂດຊົນນະບົດ ແລະທົນທາງທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ. ໃນການຄົ້ນຄ້ວາເພື່ອຊອກຮູ້ວ່າ ເຂື່ອນໄຟຟ້າໄດ້ຊ່ວຍຫລຸດຜ່ອນຄວາມແຕກຕ່າງ ລະຫວ່າງຍິງ-ເພດຊາຍ ຫລື ບໍ່ນັ້ນ, ຜູ້ຂຽນໄດ້ບົດສະຫລຸບວ່າ ໂດຍສ່ວນໃຫຍ່ແລ້ວແມ່ຍິງ ທີ່ມີຖານະຂ້ອນຂ້າງດີ ຈະມີຄວາມສາມາດສວຍໃຊ້ຜົນປະໂຫຍດຈາກໂຄງລ່າງພື້ນຖານອັນໃຫມ່ໄດ້ດີກ່ວາ. ມີແມ່ຍິງບາງຄົນ ແລະ ປະຊາຊົນເກືອບທັງໝົດໃນບາງໝູ່ບ້ານ ໄດ້ຕົກຢູ່ໃນສະຖານະການທີ່ຮ້າຍແຮງກ່ວາແຕ່ກ່ອນ ແລະກຳແພງທີ່ແບ່ງເພດຍິງ-ເພດຊາຍ ກໍ່ບໍ່ອາດຖືກມ້າງທຳລາຍໄດ້.*

ມີຫລາຍໆຄົນເຊື່ອວ່າ ການກໍ່ສ້າງເຂື່ອນ ແລະ ການສົ່ງອອກໄຟຟ້າ ສາມາດປະກອບສ່ວນໃນການຂະຫຍາຍຕົວຂອງເສດຖະກິດຂອງປະເທດລາວ ເຊິ່ງຈະນຳໄປສູ່ການສ້າງຄວາມທັນສະໄໝໃຫ້ປະເທດ. ແຕ່ໃນເວລາດຽວກັນ ກໍ່ມີອີກຫລາຍໆຄົນ ເປັນຫ່ວງວ່າການກໍ່ສ້າງເຂື່ອນໃນຈຳນວນ ຫລາຍຈະມີຜົນກະທົບອັນໃຫຍ່ຫລວງຕໍ່ກັບສິ່ງແວດລ້ອມ ແລະ ປະຊາຊົນລາວ. ໄດ້ມີຫລາຍໆການສຶກສາຄົ້ນຄ້ວາ ກ່ຽວກັບ ຜົນກະທົບຂອງເຂື່ອນທີ່ມີຕໍ່ສັງຄົມ, ເສດຖະກິດ ແລະ ໂດຍສະເພາະແມ່ນຕໍ່ກັບສິ່ງແວດລ້ອມ. ເຖິງຢ່າງໃດກໍ່ຕາມ, ມີຈຳນວນໜ້ອຍທີ່ໄດ້ສຶກສາແບບສະເພາະເຈາະຈົງ ກ່ຽວກັບ ຜົນກະທົບຂອງບັນດາໂຄງການ ພະລັງງານໄຟຟ້ານ້ຳຕົກ ແລະ ການພັດທະນາທີ່ຕາມມາ ທີ່ມີຕໍ່ກັບແມ່ຍິງ.

ບັນດາແມ່ຍິງໄດ້ຮັບຜົນກະທົບແນວໃດຈາກໂຄງການພັດທະນາເຂື່ອນໄຟຟ້າ ໃນ ສປປ ລາວ? ພາຍໃຕ້ເງື່ອນໄຂທີ່ເອື້ອອຳນວຍ, ການສ້າງ ເຂື່ອນອາດສາມາດຫລຸດຜ່ອນຄວາມແຕກໂຕນກັນລະຫວ່າງບົດບາດຍິງ-ຊາຍ. ພາລະໜ້າທີ່ ທີ່ ແມ່ຍິງຕ້ອງໄດ້ແບກຫາບ ກໍ່ອາດຈະຖືກແບ່ງເບົາລົງ ແລະ ສຸຂະພາບຂອງພວກເຂົາກໍ່ອາດໄດ້ຮັບການປັບປຸງໃຫ້ດີຂຶ້ນ ຜ່ານການນຳໃຊ້ເຄື່ອງໃຊ້ໄຟຟ້າຕ່າງໆ ແລະ ທົນທາງທີ່ດີຂຶ້ນ. ແຕ່ໃນອີກ ດ້ານໜຶ່ງ, ແມ່ຍິງອາດໄດ້ຮັບຜົນກະທົບ ຢ່າງຮ້າຍແຮງຈາກການປ່ຽນແປງຂອງສິ່ງແວດລ້ອມ ແລະ ການສູນເສຍລາຍຮັບ, ວິຖີຊີວິດແບບດັ້ງເດີມ ແລະ ຮີດຄອງປະເພນີຕ່າງໆ. ບົດຂຽນນີ້ໄດ້ບັນທຶກເອົາທັດສະນະຄະຕິ ແລະ ຄຳຄິດຄຳເຫັນຂອງແມ່ຍິງຈຳນວນໜຶ່ງທີ່ໄດ້ຮັບຜົນກະທົບຈາກເຂື່ອນໄຟຟ້ານ້ຳມັງ 3 , ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້ານ້ຳເທີນຫີນບູນ ແລະ ໂຄງການເຂື່ອນໄຟຟ້ານ້ຳເທີນ 2. ແມ່ຍິງເຫລົ່ານີ້ ໄດ້ຮັບຜົນກະທົບທີ່ແຕກຕ່າງກັນ ອີງຕາມເງື່ອນໄຂ ແລະ ສະຖານທີ່ທີ່ແຕກຕ່າງກັນ, ແຕ່ພວກເຂົາກໍ່ໄດ້ຮັບຜົນກະທົບບາງຢ່າງ ທີ່ຄ້າຍຄືກັນ.

ເອກະສານສະບັບນີ້ໄດ້ອີງໃສ່ກຳລະນີສຶກສາທີ່ໄດ້ດຳເນີນໃນ 5 ບ້ານຄື: ບ້ານພູເຂົາແກ້ວ, ບ້ານພູເຂົາຄວາຍ, ບ້ານຫ້ວຍເລີກ, ບ້ານແກ້ງບິດ ແລະ ບ້ານໜອງບົວ, ເຊິ່ງປະຊາຊົນໃນໝູ່ບ້ານ ເຫລົ່ານີ້ ແມ່ນໄດ້ຮັບຜົນກະທົບຈາກໂຄງການເຂື່ອນໄຟຟ້າທີ່ໄດ້ກ່າວມາຂ້າງເທິງ. ວິທີວິທະຍາທີ່ ໃຊ້ເປັນຫລັກໃນການຄົ້ນຄວ້າແມ່ນການສຳພາດກຸ່ມຊາວບ້ານແບບຄັດເລືອກເຈາະຈົງເອົາຜູ້ເຂົ້າຮ່ວມ ແລະ ການສັງເກດການເບິ່ງວິຖີຊີວິດການເປັນຢູ່ຂອງປະຊາຊົນໃນໝູ່ບ້ານ.

## ໂຄງການເຂື່ອນໄຟຟ້ານ້ຳຕົກທີ່ມີຢູ່ ແລະ ໂຄງການເຂື່ອນໄຟຟ້າໃນແຜນພັດທະນາ

ມາຮອດປີ 2004, ປະເທດລາວເຊິ່ງເປັນປະເທດທີ່ອຸດົມສົມບູນໄປດ້ວຍແມ່ນ້ຳ, ມີໂຄງການເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ, ກາງ ແລະ ໃຫຍ່ ຫລາຍກ່ວາ 40 ໂຄງການ. ໃນປີ 2003, ມີ 6 ເຂື່ອນທີ່ຖືວ່າເປັນແຫລ່ງຜະລິດໄຟຟ້າຂະໜາດໃຫຍ່ (ມີກຳລັງຜະລິດ 50 ເມກາວັດ ຂຶ້ນໄປ ຫລື ມີເນື້ອທີ່ທີ່ໃຊ້ເກັບນ້ຳ 10,000 ເຮັກຕາ ຂຶ້ນໄປ ແລະ ມີນ້ຳເຕັມເຂື່ອນ) ຫລື ຂະໜາດກາງ, ເຊິ່ງລວມມີ 9 ແຫລ່ງຜະລິດໄຟຟ້າຫລັກ: ນ້ຳງື່ມ I , ເຊເສັດ, ເຊລະບຳ, ນ້ຳເທີນຫີນບູນ, ຫ້ວຍເຫາະ, ນ້ຳເລີກ, ນ້ຳກໍ່, ນ້ຳດົງ ແລະ ນ້ຳພ້າວ. ໃນລະຫວ່າງ ປີ 2005 ຫາ ປີ 2020, ມີຄວາມເປັນໄປໄດ້ວ່າ ຈະໄດ້ມີການກໍ່ສ້າງແຫລ່ງຜະລິດໄຟຟ້າຂະໜາດນ້ອຍ, ກາງ ແລະ ໃຫຍ່ ປະມານ 30 ແຫ່ງ. ໃນບັນດາໂຄງການພະລັງງານໄຟຟ້ານ້ຳຕົກ ທີ່ຢູ່ໃນໂຄງການຈະສ້າງໃນ ອະນາຄົດໄດ້ລວມມີໂຄງການນ້ຳເທີນ 2 ເຊິ່ງເປັນໂຄງການທີ່ມີການໂຕ້ຖຽງກັນຢ່າງກວ້າງຂວາງ, ການຂະຫຍາຍໂຄງການເຂື່ອນໄຟຟ້ານ້ຳເທີນຫີນບູນ, ເຂື່ອນໄຟຟ້ານ້ຳງື່ມ II ແລະ ເຂື່ອນໄຟຟ້າ ນ້ຳງື່ມ III (ເຂື່ອນໄຟຟ້ານ້ຳງື່ມ II ແມ່ນຢູ່ໃນໄລຍະການກໍ່ສ້າງຂັ້ນທຳອິດ). ຕາຕະລາງຂ້າງລຸ່ມນີ້ ໄດ້ລວບລວມເອົາບາງໂຄງການພະລັງງານໄຟຟ້ານ້ຳຕົກທີ່ສຳຄັນ. ຫລາຍໆໂຄງການທີ່ສຳເລັດແລ້ວ ແລະ ໂຄງການໃນແຜນພັດທະນາລ້ວນແຕ່ມີຈຸດປະສົງຫລັກໃນການສົ່ງອອກໄຟຟ້າ. ໂຄງການນ້ຳເທີນ II ເມື່ອສຳເລັດສົມບູນແລ້ວຈະກາຍເປັນເຂື່ອນໄຟຟ້າທີ່ໃຫຍ່ທີ່ສຸດໃນປະເທດລາວ ແລະ ຄາດວ່າຈະສາມາດປະກອບສ່ວນອັນໃຫຍ່ຫລວງ ຕໍ່ກັບເສດຖະກິດຂອງປະເທດ( ກະຊວງອຸດສາຫະກຳ ແລະ ຫັດຖະກຳ, 2004 ).

<u>ບາງໂຄງການພະລັງງານໄຟຟ້ານ້ຳຕົກທີ່ສຳຄັນໃນ ສປປ ລາວ</u>

| ຊື່ໂຄງການ | ແຂວງ | ກຳລັງການຜະລິດ (ເມກາວັດ) | ປີທີ່ສຳເລັດການກໍ່ສ້າງ |
|---|---|---|---|
| 1. ນ້ຳງື່ມ | ວຽງຈັນ | 30 | 1970s |
| 2. ເຊເຊັດ | ສາລະວັນ | 6 | 1991 |
| 3. ເທີນຫີນບູນ | ຄຳມ່ວນ | 210 | 1998 |
| 4. ຫ້ວຍເຫາະ | ອັດຕະປື | 150 | 1999 |
| 5. ນ້ຳເລີກ | ວຽງຈັນ | 60 | 2000 |
| 6. ນ້ຳມັງ | ວຽງຈັນ | 60 | ເດືອນມັງກອນ, 2005 |
| 7. ນ້ຳເທີນ 2 | ຄຳມ່ວນ | 1070/1088 | 2009 |

| | | | |
|---|---|---|---|
| 8. ນ້ຳງື່ມ 2 | ວຽງຈັນ | 615 | 2009 |
| 9. ນ້ຳງື່ມ 3 | ວຽງຈັນ | 460 | 2009 |
| 10. ເຊກະໜມານ 1 | ອັດຕະປື | 468 | 2011 |
| 11. ເຊປຽນເຊນ້ຳນ້ອຍ | ອັດຕະປື | 390 | 2010 |
| 12. ນ້ຳເທີນ I | ບໍລິຄຳໄຊ | 400 | 2011-2020 |
| 13. ເຊກອງ 4 | ເຊກອງ | 440 | 2011-2020 |
| 14. ເຊກອງ 5 | ເຊກອງ | 253 | 2011-2020 |
| 15. ນ້ຳຂອງ 1 | ອັດຕະປື | 240 | 2011-2020 |
| 16. ນ້ຳທາ 1 | ບໍ່ແກ້ວ | 263 | 2011-2020 |
| 17. ນ້ຳອູ 2 | ຜົ້ງສາລີ | 630 | 2011-2020 |
| 18. ນ້ຳໂມ້ | ຊຽງຂວາງ | 105 | 2006-2010 |
| 19. ເຊກະໜມານ 3 | ເຊກອງ | 218 | 2006-2010 |
| 20. ເທີນຫີນບູນ ໄລຍະ II | ບໍລິຄຳໄຊ | 210 | 2006-2010 |
| 21. ນ້ຳງຽບ I | ບໍລິຄຳໄຊ | 240 | 2006-2010 |
| 22. ນ້ຳເທີນ III | ບໍລິຄຳໄຊ | 237 | 2006-2010 |

ແຫລ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ຫັດຖະກຳ ແລະ Maunsell & Lahmeyer International

ຮູບສະແດງ 1. ສະແດງໃຫ້ເຫັນການເພີ່ມຂຶ້ນຢ່າງຕໍ່ເນື່ອງຂອງການສົ່ງອອກກະແສໄຟຟ້າ ໃນລະຫວ່າງປີ 1990 ຫາປີ 2003. ປະລິມານກະແສໄຟຟ້າທີ່ສົ່ງອອກທັງໝົດເພີ່ມຂຶ້ນຢ່າງວ່ອງໄວ ແຕ່ປີ 1997 ເຊິ່ງເປັນຜົນພວງມາຈາກການເປີດໃຊ້ເຂື່ອນໄຟຟ້ານ້ຳເທີນຫີນບູນ ແລະ ເຂື່ອນໄຟຟ້າຫ້ວຍເຫາະ.

ໃນປີ 1995 ປະເທດລາວໄດ້ຮັບຜົນປະໂຫຍດ ຈາກການສົ່ງອອກກະແສໄຟຟ້າໂດຍລັດວິສາຫະກິດໄຟຟ້າລາວ ແລະ ຜູ້ຜະລິດເອກະລາດ ເປັນເງິນ $14.5 ລ້ານ ຫລື 0.8% ຂອງມູນຄ່າຜະລິດຕະພັນພາຍໃນ, ແຕ່ໂຕເລກນີ້ ກໍ່ຄາດວ່າ ຈະເພີ່ມຂຶ້ນເປັນ $121.3 ລ້ານ, ເຊິ່ງເທົ່າກັບ 4.7 % ຂອງມູນຄ່າຜະລິດຕະພັນພາຍໃນ ກ່ອນປີ 2010. ໂຕເລກເຫລົ່ານີ້ ອາດເບິ່ງໄດ້ໃນແງ່ໜຶ່ງວ່າ ເປັນໂຕເລກທີ່ໜ້າຜິດຫວັງ ເມື່ອທຽບໃສ່ວ່າ ພະລັງງານໄຟຟ້າ ເປັນໜຶ່ງໃນລາຍຮັບຫລັກ ຂອງປະເທດຊາດ. ເຖິງຢ່າງໃດກໍ່ຕາມ, ມີບາງທາງສຽງໄດ້ກ່າວວ່າ ໂຕເລກເຫລົ່ານີ້ ບໍ່ໄດ້ຄຳນວນເຖິງຜົນກະທົບອື່ນໆ ທີ່ພະລັງງານໄຟຟ້າ ອາດຈະປະກອບສ່ວນ ໃສ່ເສດຖະກິດໂດຍລວມ. ຄຳຖາມທີ່ສຳຄັນທີ່ໄດ້ເກີດຂຶ້ນແມ່ນລາຍໄດ້ຈາກການສົ່ງອອກໄຟຟ້ານີ້ ຈະຖືກນຳໃຊ້ແນວໃດ ເພື່ອກໍ່ໃຫ້ເກີດຜົນປະໂຫຍດສູງສຸດຕໍ່ປະຊາຊົນຜູ້ທຸກຍາກ ແລະ ແມ່ຍິງ.

<u>ຮູບສະແດງ 1. ພະລັງງານໄຟຟ້າທັງໝົດທີ່ສົ່ງອອກໃນລະຫວ່າງປີ 1990 ແລະ 2003</u>




*ແຫລ່ງຂໍ້ມູນ: ຄະນະກຳມະ ການ ພະລັງງານແຫ່ງຊາດ (2004) & ກະຊວງອຸດສາຫະກຳ ແລະ ຫັດຖະກຳ (2003)*

## ວິທີວິທະຍາ

ບົດລາຍງານນີ້ ໄດ້ໃຊ້ຫລາຍວິທີໃນການລວບລວມຂໍ້ມູນ, ເຊິ່ງລວມມີ ການຄົ້ນຄ້ວາບົດ ສຶກສາທີ່ກ່ຽວຂ້ອງ ທີ່ນັກຄົ້ນຄ້ວາຜູ້ອື່ນເຄີຍໄດ້ເຮັດຜ່ານມາ (ເອກະສານຂອງລັດຖະບານ ແລະ ຂອງ ອົງການສາກົນ, ໜັງສືພິມ ແລະ ອື່ນໆ) , ການສັງເກດການເບິ່ງການດຳລົງຊີວິດຂອງຊາວບ້ານ ແລະ ການສຳພາດກຸ່ມຊາວ ບ້ານ ແລະ ສຳພາດລາຍບຸກຄົນ.

ກໍລະນີສຶກສາໄດ້ເຈາະຈົງໃສ່ 5 ໂຄງການພະລັງງານໄຟຟ້ານ້ຳຕົກ ເຊິ່ງເປັນ (ຫລື ຈະເປັນໃນອະນາຄົດ) ຜູ້ສົ່ງອອກໄຟຟ້າທີ່ສຳຄັນ: ເຂື່ອນໄຟຟ້ານ້ຳງື່ມ I , ເຂື່ອນໄຟຟ້ານ້ຳເລີກ , ເຂື່ອນໄຟຟ້ານ້ຳມັງ 3 , ເຂື່ອນໄຟຟ້ານ້ຳເທີນຫີນບູນ ແລະ ເຂື່ອນໄຟຟ້ານ້ຳເທີນ 2. ບ້ານ ກໍລະນີສຶກສາລວມມີ:

- ບ້ານ ພູເຂົາແກ້ວ (ບ້ານທີ່ຖືກຍົກຍ້າຍ-ຈັດສັນເນື່ອງຈາກການກໍ່ສ້າງເຂື່ອນໄຟຟ້ານ້ຳມັງ 3)
- ບ້ານ ພູເຂົາຄວາຍ (ບ້ານທີ່ຖືກຍົກຍ້າຍ-ຈັດສັນເນື່ອງຈາກການກໍ່ສ້າງເຂື່ອນໄຟຟ້າໄຟຟ້າ ນ້ຳມັງ 3)
- ບ້ານ ຫ້ວຍເລີກ (ບ້ານທີ່ຕັ້ງຢູ່ລຸ່ມ ເຂື່ອນໄຟຟ້ານ້ຳເລີກ ແລະ ນ້ຳມັງ )
- ບ້ານ ນ້ຳສະໜານ (ໄດ້ຮັບຜົນກະທົບຈາກເຂື່ອນໄຟຟ້ານ້ຳນ້ຳເທີນ-ຫີນບູນ)
- ບ້ານ ຄູນຄຳ (ໄດ້ຮັບຜົນກະທົບຈາກເຂື່ອນໄຟຟ້ານ້ຳເທີນ-ຫີນບູນ)
- ບ້ານ ແກ້ງບົດ (ໄດ້ຮັບຜົນກະທົບຈາກ ເຂື່ອນໄຟຟ້ານ້ຳເທີນ-ຫີນບູນ )
- ບ້ານ ໜອງບົວ (ບ້ານຍົກຍ້າຍ-ຈັດສັນແບບຢ່າງ ຂອງໂຄງການນ້ຳເທີນ 2)
- ບ້ານ ແສງແກ້ວ (ໄດ້ຮັບຜົນກະທົບຈາກໂຄງການ ນ້ຳເທີນ 2)
- ບ້ານ ນາກາຍເໜືອ (ໄດ້ຮັບຜົນກະທົບຈາກ ໂຄງການ ນ້ຳເທີນ 2)

ການສຳພາດປະຊາຊົນ ແມ່ນໄດ້ຖືກຈັດຕັ້ງປະຕິບັດ ໂດຍການສົນທະນາແບບກຸ່ມນ້ອຍ ໂດຍແຍກເປັນ 3 ກຸ່ມຫລັກ (ແຕ່ລະກຸ່ມມີປະມານ 10 ຄົນ) ເຊິ່ງໄດ້ແຍກກຸ່ມຜູ້ຊາຍ, ກຸ່ມຜູ້ຍິງ ແລະ ກຸ່ມຄົນໄວໜຸ່ມ.

ການສົນທະນາແບບແຍກກຸ່ມນີ້ ເຮັດໃຫ້ການຄົ້ນຄ້ວາ ສາມາດເຫັນໄດ້ເຖິງ ຜົນກະທົບຂອງການກໍ່ສ້າງເຂື່ອນທີ່ມີຕໍ່ແຕ່ລະກຸ່ມປະຊາຊົນ. ທີມງານຍັງໄດ້ສຳພາດນາຍບ້ານ, ຜູ້ ອຳນວຍການຂອງໂຄງການພະລັງງານໄຟຟ້າ ທີ່ບົດຄົ້ນຄ້ວານີ້ໄດ້ທຳການສຶກສາ. ນອກນັ້ນກໍ່ໄດ້ມີ ການສົນທະນາ ແລະ ການປຶກສາຫາລືກັບຫລາຍໆພາກສ່ວນທີ່ມີສ່ວນກ່ຽວຂ້ອງກັບພະລັງງານໄຟ ຟ້າ, ເຊັ່ນ ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ລັດວິສາຫະກິດໄຟຟ້າລາວ ແລະ ຄະນະກຳມະ ການ ພະລັງງານແຫ່ງຊາດ.

ສິ່ງຫນຶ່ງທີ່ຄວນເນັ້ນຫນັກ ແລະ ເຂົ້າໃຈ ແມ່ນປະຊາຊົນທີ່ຖືກສຳພາດເປັນພຽງແຕ່ພາກສ່ວນນ້ອຍພາກສ່ວນຫນຶ່ງຂອງປະຊາຊົນທັງຫມົດ ທີ່ຈະໄດ້ຮັບຜົນກະທົບຈາກເຂື່ອນທັງຫມົດໃນປະເທດລາວ. ຕົວຢ່າງ: ມີປະຊາຊົນ ຈຳນວນ 6,200 ຄົນ ຈະຕ້ອງຖືກຍົກຍ້າຍ-ຈັດສັນ ເນື່ອງຈາກການ ກໍ່ສ້າງເຂື່ອນໄຟຟ້ານ້ຳເທີນ 2. ດັ່ງນັ້ນ ບົດຄົ້ນຄວ້ານີ້ ເປັນພຽງແຕ່ກໍລະນີສຶກສານ້ອຍເທົ່ານັ້ນ ແລະ ບໍ່ແມ່ນການສຳຫລວດທີ່ສາມາດເປັນຕົວແທນ ຫລື ໃຊ້ອະທິບາຍ ກໍລະນີອື່ນໆໄດ້.

## ສຽງທີ່ສະທ້ອນແນວຄິດຂອງແມ່ຍິງ

ໂຄງການພະລັງງານໄຟຟ້ານ້ຳຕົກ ອາດມີຜົນກະທົບ ດ້ານບວກ ແລະ ດ້ານລົບ ຕໍ່ແມ່ຍິງທີ່ອາໄສຢູ່ໃນເຂດໂຄງການ. ພວກເຂົາອາດໄດ້ຮັບຜົນປະໂຫຍດ ເຊິ່ງມາຈາກ ການຍົກຍ້າຍ -ຈັດສັນ, ຖະຫນົນຫົນທາງທີ່ໄດ້ຮັບການປັບປຸງ, ການມີໄຟຟ້າຊົມໃຊ້, ແລະ ການຝຶກອົບຮົມ ທີ່ທາງໂຄງການ ໄດ້ສະຫນອງໃຫ້. ແຕ່ໃນອີກດ້ານຫນຶ່ງ, ແມ່ຍິງຜູ້ອື່ນໆອາດຈະບໍ່ມັກ ຫລື ຊື່ນ ຊົມບັນດາໂຄງລ່າງພື້ນຖານ ໃຫມ່ໆ ຖ້າຕ້ອງສູນເສຍແຫລ່ງລາຍຮັບ ອັນດັ້ງເດີມຂອງພວກເຂົາ. ເຖິງຢ່າງໃດກໍ່ດີ, ຜູ້ຍິງສ່ວນໃຫຍ່ທີ່ຖືກສຳພາດ ມີທ່າທີຍິນດີກັບໂຄງລ່າງພື້ນຖານໃຫມ່ໆ ແລະ ສິ່ງຂອງຕ່າງໆທີ່ນຳມາໂດຍ ການກໍ່ສ້າງເຂື່ອນໄຟຟ້າ.

## ກໍລະນີບ້ານພູເຂົາແກ້ວ

ບ້ານພູເຂົາແກ້ວ ເປັນຫນຶ່ງໃນບັນດາບ້ານທີ່ຕ້ອງທຳການຍົກຍ້າຍບ່ອນຢູ່ອາໄສ ລົງມາເຂດທົ່ງພຽງອັນເນື່ອງມາຈາກການກໍ່ສ້າງເຂື່ອນໄຟຟ້ານ້ຳມັງ 3 ຢູ່ເຂດອຸດທະຍານແຫ່ງຊາດ ພູເຂົາ ຄວາຍ (ສຳເລັດໃນເດືອນມັງກອນ ປີ 2005). ແມ່ຍິງທີ່ຖືກສຳພາດກ່າວວ່າ ພວກເຂົາມັກເຮືອນ ຫລັງໃຫມ່ ແລະ ຫົນທາງທີ່ສາມາດໃຊ້ເດີນທາງໄດ້ສອງລະດູ. ພວກເຂົາສາມາດຫລຸດຜ່ອນການນຳ ໃຊ້ແຮງງານ. ຕົວຢ່າງ: ພວກເຂົາບໍ່ຕ້ອງອອກແຮງງານຕຳເຂົ້າ ເພາະພວກເຂົາສາມາດນຳໃຊ້ ເຄື່ອງຈັກສີເຂົ້າໄດ້ຫລາຍຂຶ້ນ ເຊິ່ງມີລາຄາທີ່ສົມເຫດສົມຜົນ ແລະ ບໍ່ແພງເກີນໄປສຳລັບຊາວບ້ານ. ຟືນ ຫລື ເຄື່ອງຫນັກອື່ນໆ ທີ່ແມ່ຍິງເຄີຍແບກຫາບໃສ່ຫລັງໃນແຕ່ກ່ອນ, ຕົກມາປະຈຸບັນ ກໍ່ສາມາດໃຊ້ລົດໄຖນາຂະຫນາດນ້ອຍ ຂົນສົ່ງ. ສຸຂະພາບຂອງແມ່ຍິງກໍ່ດີຂຶ້ນເລື້ອຍໆ ເນື່ອງຈາກມີຕູ້ເຢັນໃຊ້ ແລະ ມີວິດຖ່າຍ. ພວກເຂົາມີຄວາມສຸກກັບເຄື່ອງໃຊ້ໄຟຟ້າຕ່າງໆ ບໍ່ວ່າຈະເປັນໂທລະທັດ, ພັດລົມ, ວິທະຍຸ ແລະ ເຄື່ອງສາຍວີດີໂອ. ໂອກາດທີ່ເດັກຍິງຈະສືບຕໍ່ການສຶກສາໃນຂັ້ນມັດທະຍົມກໍ່ສູງຂຶ້ນ ເພາະບ້ານໃຫມ່ໃນເຂດຈັດສັນ ແມ່ນໃກ້ກັບໂຮງຮຽນຕ່າງໆຫລາຍຂຶ້ນ. ໃນຫມູ່ບ້ານເກົ່າ ໂຮງຮຽນປະຖົມທີ່ໃກ້ທີ່ສຸດ ແມ່ນຢູ່ບ້ານພູເຂົາຄວາຍ ແລະ ເດັກນ້ອຍກໍ່ຕ້ອງໄດ້ສືບຕໍ່ຮຽນ ໃນຊັ້ນມັດທະຍົມຢູ່ເຂດທົ່ງພຽງ. ເດັກຍິງໃນເວລາທີ່ຢູ່ບ້ານເກົ່າ ສ່ວນໃຫຍ່ແມ່ນຕ້ອງອອກໂຮງຮຽນ ຫລັງຈາກຈົບຊັ້ນ ປ 5.

## *ນ້ຳບາດານທີ່ສະໜອງໃຫ້ໂດຍໂຄງການ ເຂື່ອນໄຟຟ້າ ກໍ່ໄດ້ເປ່ເພແຕ່ດົນແລ້ວ*

ເຖິງຢ່າງໃດກໍ່ຕາມ, ຄວາມສະດວກສະບາຍ ແລະ ເຄື່ອງຂອງໃໝ່ໆທີ່ໄດ້ຮັບ ບໍ່ໄດ້ນຳມາເຊິ່ງ ຄວາມສຸກດັ່ງທີ່ໄດ້ຄາດຫວັງໄດ້. ສາເຫດອັນຕົ້ນຕໍກໍ່ແມ່ນເນື່ອງມາຈາກ ແຫລ່ງລາຍຮັບອັນຕົ້ນຕໍ ຊຶ່ງໄດ້ມາຈາກການຄ້າຂາຍເຄື່ອງປ່າຂອງດົງ ແມ່ນໄດ້ສູນເສຍໄປໃນປະຈຸບັນ ແລະ ພວກເຂົາກໍ່ບໍ່ມີລາຍຮັບທົດແທນ. ການຂາດເຂີນນ້ຳ ແລະ ຟືນ ໝາຍເຖິງບັນດາແມ່ຍິງ ຕ້ອງໃຊ້ເວລາ ຫລາຍຂຶ້ນ ໃນການຊອກຫານ້ຳ ແລະ ຟືນ. ນ້ຳບາດານທີ່ສະໜອງໃຫ້ໂດຍໂຄງການ ເຂື່ອນໄຟຟ້ານ້ຳມັງ 3 ກໍ່ໄດ້ເປ່ເພແຕ່ດົນແລ້ວ. ໃນປະຈຸບັນປະຊາຊົນທຸກຄົນໃນບ້ານ ແມ່ນອາໃສໃຊ້ນ້ຳສ້າງ ທີ່ມີພຽງແຕ່ບໍ່ດຽວ, ເຊິ່ງພວກເຂົາຕ້ອງຕໍ່ຄິວ ເປັນເວລາດົນນານເພື່ອຕັກເອົານ້ຳ. ນ້ຳກໍ່ບໍ່ພຽງພໍຕໍ່ການເຮັດການກະສິກຳ. ນອກຈາກນັ້ນດິນດອນ ຕອນຫຍ້າທີ່ຢູ່ອ້ອມແອ້ມບ້ານ ກໍ່ລ້ວນແຕ່ແມ່ນດິນຂອງເອກະຊົນ ເຊິ່ງມັນເປັນ ການຜິດກົດໝາຍສຳລັບປະຊາຊົນທີ່ຈະລ່ວງລ້ຳເຂົ້າໄປ ເພື່ອຊອກຫາເຄື່ອງຂອງທຳມະຊາດທີ່ພວກ ເຂົາຕ້ອງການ, ເຊິ່ງໃນເມື່ອກ່ອນພວກເຂົາເຄີຍ ລຽບເລາະຕາມປ່າເປັນບໍລິເວນກ້ວາງຂວາງ ເພື່ອຊອກຫາຟືນ ແລະ ເຄື່ອງປ່າຂອງດົງ ເຊັ່ນ ໜໍ່ໄມ້. ການປ່ຽນແປງຄືແນວນັ້ນໄດ້ສ້າງຄວາມຍາກລຳບາກ ໃຫ້ແກ່ແມ່ຍິງ ແລະ ເດັກຍິງ ຜູ້ເຊິ່ງມີໜ້າທີ່ຊອກຫາຟືນ ແລະ ເຄື່ອງປ່າຂອງດົງ. ແມ່ຍິງຫລາຍໆ ຄົນ ກັງວົນ ແລະ ເປັນຫ່ວງຕໍ່ກັບຊີວິດ ແລະ ອະນາຄົດຂອງຄອບຄົວພວກເຂົາໃນການອາໄສຢູ່ເຂດ ຈັດສັນ. ຄວາມສະດວກສະບາຍແບບໃໝ່ໆ ກໍ່ບໍ່ສະດວກສະບາຍອີກຕໍ່ໄປ ເມື່ອແຫລ່ງລາຍຮັບອັນຕົ້ນ ຕໍ ແລະ ສຳຄັນຂອງພວກເຂົາຕ້ອງສູນເສຍໄປ. ໃນຄວາມເປັນຈິງ, ຜູ້ຍິງສ່ວນໃຫຍ່ໃນບ້ານພູເຂົາ ແກ້ວ ບໍ່ສາມາດສວຍໃຊ້ໂອກາດ ດ້ານເສດຖະກິດ ທີ່ນຳມາໂດຍການມີໄຟຟ້າຊົມໃຊ້, ຖະໜົນຫົນທາງທີ່ຖືກປັບປຸງ ແລະ ການຍົກຍ້າຍ-ຈັດສັນ.

## ບ້ານພູເຂົາຄວາຍ

ບ້ານພູເຂົາຄວາຍ ເປັນອີກບ້ານໜຶ່ງ ທີ່ຖືກຍົກຍ້າຍໂດຍເຂື່ອນໄຟຟ້ານ້ຳມັງ 3. ເຖິງ ຈະມີຕົວແທນແມ່ຍິງບາງຄົນ ກ່າວເຖິງການສູນເສຍຂອງລາຍຮັບ ແລະ ອາຫານ ເຊັ່ນ ເຄື່ອງປ່າຂອງ ດົງຕ່າງໆ, ແຕ່ພວກເຂົາກໍ່ມີຄວາມສຸກຫລາຍກ່ວາເກົ່າ ກັບຊີວິດໃໝ່ຂອງພວກເຂົາ ທີ່ໃນຢູ່ເຂດຈັດສັນໃໝ່, ເຊິ່ງເປັນຊີວິດທີ່ພຽບພ້ອມໄປດ້ວຍ ສິ່ງອຳນວຍຄວາມສະດວກໃໝ່ໆ.

ບໍ່ຄືກັບແມ່ຍິງບ້ານພູເຂົາແກ້ວ, ແມ່ຍິງບ້ານພູເຂົາຄວາຍ ສາມາດສວຍໃຊ້ຜົນປະໂຫຍດ ທາງດ້ານເສດຖະກິດ ແລະ ສັງຄົມໄດ້ຫລາຍກ່ວາ, ນັ້ນອາດແມ່ນຍ້ອນພື້ນຖານທາງດ້ານ ເສດຖະກິດຂອງແມ່ຍິງບ້ານພູເຂົາຄວາຍທີ່ດີກ່ວາແມ່ຍິງບ້ານພູເຂົາແກ້ວ. ຈາກການລາຍງານຂອງ ທະນາຄານພັດທະນາອາຊີ (2004), ການຍົກຍ້າຍ-ຈັດສັນ ແລະ ການຕິດຕັ້ງໄຟຟ້າ ມີທ່າທີທີ່ຈະໃຫ້ຜົນປະໂຫຍດແກ່ຜູ້ທີ່ມີຖານະດີ ເນື່ອງຈາກພວກເຂົາມັກຈະມີທຶນນະຊັບເພື່ອໃຊ້ໃນການລົງທຶນ ແລະ ກໍ່ສາມາດຕັກຕວງເອົາຜົນປະໂຫຍດຈາກໂອກາດທາງດ້ານເສດຖະກິດ ທີ່ເປີດຂຶ້ນໂດຍ ການມີໄຟຟ້າຊົມໃຊ້, ຫົນທາງທີ່ໄດ້ຮັບການປັບປຸງ ຫລື ການຍົກຍ້າຍ-ຈັດສັນ.

ນາງ ໜີ, ໜຶ່ງໃນແມ່ຍິງທີ່ເປັນຕົວແທນເຂົ້າຮ່ວມໃນການສຶກສານີ້, ບໍ່ສາມາດສືບຕໍ່ການຮຽນ ໄດ້ ເພາະບ້ານເກົ່າທີ່ຢູ່ໃນເມື່ອກ່ອນແມ່ນຫ່າງໄກຈາກໂຮງຮຽນ. ແຕ່ເມື່ອບ້ານໃຫມ່ໃນເຂດຈັດສັນ ໃກ້ກັບ ໂຮງຮຽນມັດທະຍົມຫລາຍຂຶ້ນ, ນ້ອງສາວຂອງລາວ ສາມາດສືບຕໍ່ການສຶກສາໃນຊັ້ນທີ່ສູງຂຶ້ນ. ນອກຈາກ ນັ້ນ, ເງິນຊົດໃຊ້ແທນຄືນ ທີ່ ຄອບຄົວຂອງນາງໄດ້ຮັບ ກໍ່ໄດ້ເປີດໂອກາດໃຫມ່ໃຫ້ ນາງ ໜີ. ໃນເມື່ອກ່ອນ, ພາຍຫລັງຈາກ ອອກຈາກໂຮງຮຽນ ນາງ ໜີ ໄດ້ຊ່ວຍພໍ່ແມ່ທຳການປູກຝັງ. ໃນປະຈຸບັນລາວ ເປັນເຈົ້າຂອງ ຮ້ານຄ້ານ້ອຍໆຮ້ານໜຶ່ງ ເຊິ່ງສ້າງລາຍຮັບໄດ້ປະມານ 400,000 ກີບ ຕໍ່ເດືອນ. ຄ້າຍຄືກັນນັ້ນ, ພາຍຫລັງມີ ໄຟຟ້າໃຫ້ຊົມໃຊ້ແລ້ວ ແມ່ຍິງຜູ້ໜຶ່ງໃນໝູ່ບ້ານກໍ່ ວາງແຜນທີ່ຈະຕິດຕັ້ງໂຮງສີເຂົ້າ ຂະໜາດ ໃຫຍ່ໃສ່ໃນໝູ່ບ້ານ.

ບັນດາແມ່ຍິງໃນໝູ່ບ້ານໃນປະຈຸບັນ ສາມາດໃຊ້ໝໍ້ຫຸງເຂົ້າ ແລະ ເຕົາໄຟຟ້າ, ເຊິ່ງສິ່ງເຫລົ່ານັ້ນຊ່ວຍປ້ອງ ກັນບັນຫາສຸຂະພາບ ທີ່ເກີດຈາກມົນລະພິດຄວັນ ຈາກການດັງຟືນ. ແມ່ຍິງ ແລະ ເດັກຍິງສ່ວນໃຫຍ່ ໃນໝູ່ບ້ານລ້ວນແລ້ວແຕ່ເຂົ້າຮ່ວມໃນກິດຈະກຳທໍຜ້າປັກຖັກແສ່ວແສ່ວ ແພແບບພື້ນເມືອງຂອງຊົນເຜົ່າມົ້ງ ແລະ ໃນດຽວນີ້ກໍ່ສາມາດເຮັດກິດຈະກຳເຫລົ່ານັ້ນໄດ້ ໃນຕອນກາງຄືນ, ຫລັງຈາກເລີກຮຽນ ຫລື ເວລາທີ່ ສຳເລັດເສັດສິ້ນວຽກເຮືອນວຽກຊານ. ດັ່ງນັ້ນ ລາຍໄດ້ ຂອງພວກເຂົາກໍ່ຈະເພີ່ມຂຶ້ນ.

## ບ້ານ ຫ້ວຍເລີກ

ບ້ານ ຫ້ວຍເລີກ ຕັ້ງຢູ່ລຸ່ມເຂື່ອນໄຟຟ້ານ້ຳເລີກ. ບ້ານ ຫ້ວຍເລີກ ໄດ້ຮັບໄຟຟ້າ ແລະ ຈັກດູດນ້ຳ ຈາກໂຄງການ ຄືກັນກັບບ້ານອື່ນໆທີ່ຢູ່ໃນເຂດໂຄງການ. ເຖິງວ່າບ້ານຈະບໍ່ໄດ້ ຮັບເງິນຊົດໃຊ້ແທນຄືນ ໂດຍກົງຈາກ ໂຄງການ, ແຕ່ມີຊາວບ້ານຫລາຍໆຄົນ ກໍ່ໃຊ້ໂອກາດໃນຊ່ວງໄລຍະກໍ່ ສ້າງເຂື່ອນທຳມາຫາກິນ ໂດຍການ ເຮັດວຽກຮັບຈ້າງ, ເຮັດເຮືອນພັກ ແລະ ຄ້າຂາຍເຄື່ອງໃຊ້ ຂອງສອຍ. ສຳລັບແມ່ຍິງ, ໄຟຟ້າ ໄດ້ນຳມາ ເຊິ່ງຄວາມສະດວກສະບາຍຫລາຍໆຢ່າງມາໃຫ້ພວກເຂົາ. ນ້ຳກໍ່ສາມາດດູດຂຶ້ນມາໂດຍ ໃຊ້ໄຟຟ້າ ເຮັດໃຫ້ແມ່ຍິງຮູ້ສຶກປອດໄພ ເພາະບໍ່ຕ້ອງໄປຕັກເອົານ້ຳຕອນກາງຄືນອີກຕໍ່ໄປ. ນອກຈາກນັ້ນ, ໃນປະຈຸບັນ ແມ່ຍິງໃນບ້ານກໍ່ສາມາດຕຳຫູກຕອນກາງຄືນໄດ້ ຢ່າງສະດວກສະບາຍ ພາຍຫລັງເສັດສິ້ນວຽກບ້ານ ງານເຮືອນ, ເຊິ່ງໃນເດືອນໜຶ່ງ ພວກເຂົາສາມາດຕຳ ໄດ້ 4 - 5 ຜືນ. ມີແມ່ຍິງຫລາຍໆ ຄົນ ມີລາຍຮັບດີ ພໍສົມຄວນ ຈາກການຂາຍອາຫານ ແລະ ເຄື່ອງດື່ມໃຫ້ກຳມະກອນ ໃນເວລາທີ່ມີການກໍ່ສ້າງເຂື່ອນ. ແຕ່ເມື່ອການກໍ່ສ້າງສຳເລັດເສັດສິ້ນແລ້ວ, ຮ້ານຄ້າຕ່າງໆກໍ່ໄດ້ປິດລົງ. ຫລັງຈາກນັ້ນກໍ່ມີຍິງສາວ ຈຳນວນຫລາຍຄົນ ພາກັນອອກຈາກໝູ່ບ້ານ ເພື່ອໄປຫາເຮັດວຽກໃນ ຂົງເຂດອຸດສາຫະກຳຕັດຫຍິບ ແລະ ກໍ່ມີຈຳນວນໜຶ່ງ ໄປຫາເຮັດວຽກຢູ່ປະເທດໄທ. ເຖິງຈະບໍ່ມີຜູ້ໃດເວົ້າວ່າ ແມ່ຍິງໃນໝູ່ບ້ານເຮັດວຽກຂາຍ ບໍລິການທາງ ເພດ ໃນໄລຍະການກໍ່ສ້າງເຂື່ອນ, ກໍລະນີພະຍາດຕິດຕໍ່ທາງເພດສຳພັນອາດເກີດຂຶ້ນ ໂດຍທີ່ ພວກເຮົາບໍ່ຮູ້. ຊາວບ້ານໄດ້ກ່າວວ່າ ຜູ້ຂາຍບໍລິການທາງເພດແມ່ນມາຈາກບ່ອນອື່ນ ແລະ ມີ ຊາວບ້ານ ບາງຄົນ ໄດ້ມີການພົວພັນ ກັບກຳມະກອນເຮັດວຽກຢູ່ເຂື່ອນ ແລະ ຄົນອື່ນໆທີ່ອາໄສຢູ່ບໍລິ ເວນອ້ອມແອ້ມ ແຄ້ມທີ່ພັກ. ເຖິງຈະປະເຊີນກັບພາວະຂາດເຂີນນ້ຳ (ເນື່ອງຈາກຄຸນະພາບຂອງນ້ຳ ຈາກນ້ຳເລີກຫລຸດລົງ) ແລະ ການສູນເສຍລາຍໄດ້ຈາກສວນແຄມນ້ຳ ທີ່ສາມາດເຄີຍເຮັດໃນເມື່ອກ່ອນ (ດຽວນີ້ບໍ່ ສາມາດ ເຮັດໄດ້ແລ້ວ ເນື່ອງຈາກມີນ້ຳຖ້ວມເລື້ອຍໆ), ແຕ່ແມ່ຍິງຕົວແທນທີ່ເຂົ້າຮ່ວມໃນການສຶກສາ

ນີ້ໄດ້ກ່າວວ່າພວກເຂົາມີຄວາມສຸກກ່ວາແຕ່ກ່ອນ ແລະ ຮູ້ສຶກວ່າພວກເຂົາ ໄດ້ຖືກພັດທະນາຄືກັບຄົນໃນຕົວເມືອງ ຫລາຍຂື້ນ.

## ບ້ານ ແກ້ງບິດ

ບ້ານ ແກ້ງບິດຕັ້ງຢູ່ໃກ້ກັບເຂດເຂື່ອນໄຟຟ້ານ້ຳເທີນຫີນບູນ ລຽບແຄມແມ່ນ້ຳເທີນ. ບ້ານນີ້ຖືກຍົກຍ້າຍ-ຈັດສັນ, ແຕ່ບໍ່ແມ່ນຍ້ອນການກໍ່ສ້າງເຂື່ອນໂດຍກົງ ຫາກແມ່ນຍ້ອນຜົນປະໂຫຍດທີ່ມາພ້ອມກັບການກໍ່ສ້າງເຂື່ອນ ( ທົ່ນທາງໃຫມ່ ແລະ ໄຟຟ້າ ). ກ່ອນການກໍ່ສ້າງເຂື່ອນ, ເກືອບ 100 % ຂອງແມ່ຍິງທັງຫມົດ ກົກຫນັງສື ເພາະບໍ່ມີໂຮງຮຽນຢູ່ໃນບ້ານ. ໃນປະຈຸບັນແມ່ຍິງມີໂອກາດຫລາຍຂື້ນທີ່ຈະໄດ້ຮັບການສຶກສາ ແລະ ຮູ້ຫນັງສື . ເຖິງວ່າ 95 % ຂອງເດັກຍິງຈະໄດ້ອອກໂຮງຮຽນ ຫລັງຈາກຈົບຊັ້ນປະຖົມ ປີທີ 5 ເພາະໂຮງຮຽນມັດທະຍົມທີ່ໃກ້ສຸດແມ່ນ ປະມານ 10 ກິໂລແມັດຫ່າງຈາກບ້ານ. ໃນອະດີດ, ທົ່ນທາງໃຫຍ່ເຂົ້າຮອດຫມູ່ບ້ານແມ່ນບໍ່ມີ ແລະ ແມ່ຍິງຜູ້ຫນຶ່ງໄດ້ສູນເສຍລູກ 3 ຄົນ ເນື່ອງຈາກເປັນໄຂ້. ຄົນເຈັບຈະຖືກນຳສົ່ງໄປໂຮງຫມໍທີ່ໃກ້ທີ່ສຸດ ໂດຍໃຊ້ເຮືອພາຍ ເຊິ່ງໃຊ້ເວລາເຖິງ 14 ຊົ່ວໂມງ ຫລືໃຫ້ອີກຄົນຫນຶ່ງແບກໃສ່ຫລັງ ແລ້ວເດີນທາງຂ້າມພູ. ດັ່ງນັ້ນ, ບາງຄົນກໍ່ເດີນ ທາງໄປຮອດໂຮງຫມໍສວາຍເກີນໄປ. ໃນປະຈຸບັນໄດ້ມີທົ່ນທາງປູຫີນເຂົ້າໄປຮອດບ້ານ ແລະ ກໍ່ມີລົດໂດຍສານຂະຫນາດນ້ອຍເດີນທາງໄປຫລັກ 20 ຖ້ຽວຫນຶ່ງຕໍ່ມື້.

---

*ໄຟຟ້າ ໄດ້ເປີດໂອກາດໃຫ້ແມ່ຍິງ*

*ປະກອບສ່ວນໃນການອອກຄວາມຄິດຄວາມເຫັນ*

*ຕໍ່ກັບວຽກງານສ່ວນລວມຂອງບ້ານ*

---

ນັບຕັ້ງແຕ່ການຍົກຍ້າຍ-ຈັດສັນ, ເຖິງວ່າຜູ້ຍິງຫລາຍໆຄົນໃນບ້ານ ບໍ່ສາມາດປູກຜັກຢູ່ຕາມສວນແຄມນ້ຳໄດ້ຄືເກົ່າ, ແຕ່ບໍລິສັດໄຟຟ້າເທີນຫີນບູນ ກໍ່ໄດ້ສະຫນອງຕົ້ນໄມ້ກິນຫມາກ ແລະ ພືດອື່ນໆໃຫ້ຊາວບ້ານ ເຊັ່ນ: ຫມາກມ່ວງ ແລະ ຫມາກຂາມ, ແລະ ດຽວນີ້ຊາວບ້ານກໍ່ໄດ້ ທຳການຄ້າຂາຍອ້ອຍ ແລະ ເຜືອກ. ໃນຊ່ວງໄລຍະການກໍ່ສ້າງ, ບ້ານ ແກ້ງບິດ ໄດ້ເປັນເຂດຕັ້ງແຄ້ມ ຂອງກຳມະກອນຂອງໂຄງການໄຟຟ້ານ້ຳເທີນຫີນບູນ, ແມ່ຍິງຈຳນວນຫລາຍ ກໍ່ໄດ້ທຳການຄ້າຂາຍສິນຄ້າ ໃຫ້ ແກ່ກຳມະກອນທີ່ເຮັດວຽກໃຫ້ໂຄງການ. ມີບາງຮ້ານກໍ່ຍັງສືບຕໍ່ຂາຍເຄື່ອງ ເຖິງວ່າໂຄງການຈະສຳເລັດເສັດສິ້ນໄປແລ້ວ. ແມ່ຍິງ 2 ຄົນ ທີ່ເປັນຕົວແທນເຂົ້າຮ່ວມໃນການສຶກສາຄັ້ງນີ້ ກ່າວວ່າ: ພວກເຂົາຍັງສາມາດ ສ້າງລາຍຮັບໄດ້ 400,000 ກີບ ຕໍ່ເດືອນ, ເຖິງວ່າມັນຈະຫນ້ອຍກ່ວາລາຍຮັບທີ່ເຄີຍໄດ້ໃນຊ່ວງໄລຍະ ທີ່ມີການກໍ່ສ້າງເຂື່ອນ.

ໄຟຟ້າໄດ້ນຳຊີວິດໃຫມ່ມາສູ່ແມ່ຍິງ ບ້ານ ແກ້ງບິດ, ຊີວິດທີ່ພວກເຂົາສາມາດເຮັດວຽກ ແລະ ເບິ່ງແຍງລູກເຕົ້າໄດ້ຢ່າງສະດວກສະບາຍ ໃນເວລາກາງຄືນ. ແມ່ຍິງຄົນຫນຶ່ງກ່າວວ່າ "ດຽວນີ້ ເມື່ອມີໄຟຟ້າແລ້ວ ພວກເຮົາສາມາດຮັບຮູ້ ແລະ ເຫັນສິ່ງຕ່າງໆ ດ້ວຍຕາຂອງພວກເຮົາເອງ" ໄຟຟ້າຍັງໄດ້ເປີດໂອກາດໃຫ້ແມ່ຍິງມີສ່ວນຮ່ວມກັບ ວຽກບ້ານການເມືອງຂອງຫມູ່ບ້ານ. ດັ່ງທີ່ແມ່ຍິງຄົນຫນຶ່ງກ່າວວ່າ

ໃນເມື່ອກ່ອນມັນເປັນການບໍ່ເຫມາະສົມ ທີ່ແມ່ຍິງໃນບ້ານຈະເຂົ້າຮ່ວມການປະຊຸມໃນບ້ານຕອນກາງຄືນ. ແຕ່ໄຟຟ້າ ໄດ້ເປີດໂອກາດໃຫ້ແມ່ຍິງ ປະກອບສ່ວນໃນການອອກຄວາມຄິດຄວາມເຫັນ ຕໍ່ກັບວຽກງານສ່ວນລວມຂອງບ້ານ. ນອກຈາກນັ້ນ, ແມ່ຍິງ ບ້ານ ແກ້ງບິດ ກໍ່ຍັງໄດ້ຮັບການຝຶກອົບຮົມ ຈາກ ໂຄງການສ້າງເຂື່ອນໄຟຟ້ານ້ຳເທີນຫີນບູນ ກ່ຽວກັບສຸຂະພາບໄວຈະເລີນພັນ, ໂພສະນາການ, ສຸຂະອະນາໄມ ແລະ ການວາງແຜນຄອບຄົວ.

## ບ້ານ ຫນອງບົວ ( ບ້ານຍົກຍ້າຍ-ຈັດສັນແບບຢ່າງ ຂອງ ໂຄງການນ້ຳເທີນ 2 )

ບ້ານ ຫນອງບົວເປັນ ບ້ານທຳອິດໃນ 15 ບ້ານ ທີ່ຈະຖືກຍົກຍ້າຍ-ຈັດສັນ ໂດຍໂຄງການ ນ້ຳເທີນ 2. ບ້ານໃນເຂດຈັດສັນໃຫມ່ ແມ່ນພຽບພ້ອມໄປດ້ວຍ ເຮືອນທີ່ໄດ້ມາດຖານ, ຫ້ອງນ້ຳ, ໄຟ ຟ້າ, ສູນຊຸມຊົນ, ເນື້ອທີ່ປູກຝັງ, ອ່າງເກັບນ້ຳ, ໂຮງຮຽນ, ໂຮງຮຽນອະນຸບານ ແລະ ອື່ນໆ. ຢູ່ ພາຍໃນຄອບຄົວ ກໍ່ໄດ້ມີການແບ່ງປັນຫນ້າທີ່ວຽກງານ ລະຫວ່າງສະມາຊິກຄອບຄົວ. ຜູ້ຊາຍສ່ວນໃຫຍ່ ແມ່ນເຮັດ ວຽກກັບໂຄງການນ້ຳເທີນ 2. ສະມາຊິກຄອບຄົວທີ່ເປັນແມ່ຍິງບາງຄົນ ແມ່ນເຮັດວຽກໃນສວນຂອງຕົນເອງ ທີ່ໂຄງການຈັດສັນໃຫ້ ແລະ ບາງຄົນກໍ່ເຮັດວຽກໃນໂຮງຮຽນ, ໂຮງຮຽນອະນຸບານ ທີ່ຢູ່ໃນເຂດ ຈັດສັນໃຫມ່ ຫລື ສູນລ້ຽງສັດ ຫລື ສູນສົ່ງເສີມກະສິກຳຂອງໂຄງການ, ເຊິ່ງລາຍໄດ້ກໍ່ຕົກຢູ່ ປະມານ 200,000 ກີບ ຕໍ່ເດືອນ. ແມ່ຍິງຜູ້ທີ່ແຕ່ງງານ ແລະ ມີລູກນ້ອຍສາມາດສຸມໃສ່ວຽກງານໄດ້ຢ່າງເຕັມທີ່ ເພາະ ພວກເຂົາສາມາດນຳເອົາລູກເຕົ້າໄປຝາກໄວ້ໃນໂຮງ ຮຽນອະນຸບານໃນບ້ານ. ພໍ່ຄ້າ ແມ່ຄ້າ ຈາກທາງນອກກໍ່ໄດ້ເຂົ້າມາຮັບຊື້ເອົາສິນຄ້າຈາກສວນຂອງປະຊາຊົນໃນບ້ານ. ລາຍໄດ້ຂອງແມ່ຍິງ ທີ່ໄດ້ມາຈາກທັງສວນ ຂອງຄອບຄົວ ແລະ ສູນສົ່ງເສີມກະສິກຳ ສ່ວນໃຫຍ່ແມ່ນນຳໄປຊື້ເຂົ້າ (ຊຶ່ງປະຊາຊົນບໍ່ໄດ້ປູກແລ້ວ), ເຄື່ອງໃຊ້ສາທາລະນຸປະໂພກ ແລະ ເຄື່ອງນຸ່ງ.

“ຊີວິດທີ່ປະສົບຜົນສຳເລັດ” ຂອງປະຊາຊົນ ໃນເຂດຈັດສັນໃຫມ່ ສະແດງອອກຢູ່ເຄື່ອງໃຊ້ຂອງສອຍຕ່າງໆ ທີ່ພວກເຂົາເປັນເຈົ້າຂອງ (ໂທລະທັດ, ຕູ້ເຢັນ, ຍານພາຫະນະຕ່າງໆ ແລະ ອື່ນໆ). ແມ່ຍິງໃນບ້ານມີແຮງກະຕຸ້ນຊຸກຍູ້ ແລະ ສິ່ງຈູງໃຈໃຫ້ພວກເຂົາເຮັດວຽກຫນັກ ເພື່ອເພີ່ມລາຍໄດ້ ເຊິ່ງກໍ່ເພື່ອໃຫ້ຊີວິດກາຍເປັນ “ຊີວິດທີ່ປະສົບຜົນສຳເລັດ”. ແມ່ຍິງທີ່ເປັນຕົວແທນ ເຂົ້າຮ່ວມໃນການສຶກສານີ້ ມີຄວາມສຸກ ແລະ ພໍໃຈກັບສະພາບການເປັນຢູ່ໃຫມ່ ແລະ ສິ່ງແວດລ້ອມໃຫມ່ນີ້ຫລາຍກ່ວາອັນເກົ່າ, ເຊິ່ງກໍ່ມີແມ່ຍິງຄົນຫນຶ່ງເວົ້າວ່າ “ຂ້ອຍມີຄວາມສຸກດີ ທີ່ອາໄສຢູ່ບ່ອນນີ້ ແລະ ກໍ່ບໍ່ຄິດຮອດ ບ້ານເກົ່າເລີຍ ”.

## ສະຫລຸບ

ຈາກການສຶກສານີ້, ມັນເບິ່ງຄືວ່າແມ່ຍິງຖືກສຳພາດ ມີຄວາມພຶງພໍໃຈກັບ ເຮືອນຫລັງໃຫມ່ ເຊິ່ງມີໄຟຟ້າໃຊ້, ຖະຫນົນຫົນທາງທີ່ດີຂຶ້ນ ແລະ ວັດຖຸອື່ນໆ. ເປັນທີ່ແນ່ນອນວ່າ ມາດຖານຊີວິດການເປັນຢູ່ ຂອງແມ່ຍິງບາງຄົນ ໄດ້ຮັບການປັບປຸງຫລາຍກ່ວາແມ່ຍິງຜູ້ອື່ນໆ. ໃນບັນດາຫມູ່ບ້ານຫລ່ານີ້ ກໍ່ມີແມ່ຍິງບາງຄົນຍັງບໍ່ມີເງິນພຽງພໍທີ່ຈະຈ່າຍເງິນຄ່າໄຟຟ້າ ເຮັດໃຫ້ພວກເຂົາຍັງບໍ່ມີໄຟຟ້າຊົມໃຊ້. ດັ່ງນັ້ນ, ໃນປະຈຸບັນທີ່ຍັງບໍ່ມີລະບົບເງິນຊ່ວຍເຫລືອ ດ້ານຄ່າໃຊ້ຈ່າຍໃນການໃຊ້ໄຟຟ້າ, ແມ່ຍິງເຫລົ່ານັ້ນ ຈະມີໂອກາດຫນ້ອຍທີ່ຈະສວຍໃຊ້ຜົນປະໂຫຍດຕ່າງໆ ບໍ່ວ່າຈະທາງດ້ານໃດກໍ່ຕາມ. ຄອບຄົວຫນຶ່ງໆ ຈະຕ້ອງຈ່າຍເງິນ ເລີ່ມຕົ້ນ

ໃນການຕິດຕັ້ງໄຟຟ້າ ເປັນຈຳນວນເງິນເກືອບ 1 ລ້ານກີບ (ປະມານ 96 ໂດລາອາເມລິກາ) ແລະ ຄ່າໄຟຟ້າທີ່ຕາມມາ ກໍ່ບໍ່ແຕກຕ່າງຫຍັງກັບເຂດຊົນນະບົດ ຫລື ເຂດຕົວເມືອງອື່ນໆ. ຄ່າໄຟອາດເບິ່ງຄືວ່າຕ່ຳ ຖ້າທຽບໃສ່ ປະເທດອື່ນໆ ແຕ່ທັ້ງນີ້ ທັ້ງນັ້ນກໍ່ຕ້ອງມີການຄຳນຶງເຖິງ ລາຍຮັບຂອງປະຊາຊົນໃນເຂດຊົນນະບົດຂອງລາວ.

---

***ໂຄງການພະລັງງານໄຟຟ້ານ້ຳຕົກຕ່າງໆສ່ວນໃຫຍ່ແມ່ນຖືກສ້າງຂຶ້ນບົນພື້ນຖານ***

***ຄວາມບໍ່ເທົ່າທຽມກັນລະຫວ່າງຍິງຊາຍ***

***ທີ່ມີຢູ່ແລ້ວໃນສັງຄົມເຂດຊົນນະບົດ***

---

ແນ່ນອນວ່າ ຜູ້ຍິງທີ່ມີກຳລັງຊັບພຽງພໍ ໃນການຈ່າຍຄ່າໄຟຟ້າ ສາມາດປະຢັດເວລາໃນການ ແຕ່ງຢູ່ຄົວກິນ, ລ້າງເຄື່ອງໃຊ້ຂອງສອຍຕ່າງໆ ແລະ ຊັກເຄື່ອງ, ຖ້າໃຊ້ໄຟຟ້າເຂົ້າຊ່ວຍໃນການເຮັດວຽກເຮືອນເຫລົ່ານັ້ນ. ພວກເຂົາຍັງໃຊ້ເວລາຫນ້ອຍລົງກ່ວາເກົ່າຫລາຍ ໃນການຫາຟືນ ແລະ ຜ່າຟືນ. ດັ່ງນັ້ນເຄື່ອງ ໃຊ້ໄຟຟ້າມີຜົນກະທົບອັນໃຫຍ່ຫລວງຕໍ່ກັບສຸຂະພາບ ແລະ ອາຍຸໄຂຂອງຊີວິດ ຂອງແມ່ຍິງ. ແຕ່ເຖິງ ຢ່າງໃດກໍ່ຕາມ, ຄວາມຈິງກໍ່ບໍ່ໄດ້ສວຍງາມ ແລະ ຫອມຫວນສຳລັບຫມົດທຸກຄົນ. ຖ້າປາສະຈາກ ທັກສະ ແລະ ແຫລ່ງລາຍຮັບ, ແມ່ຍິງໃນເຂດໂຄງການກໍ່ຍັງຄົງຕ້ອງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກລຳບາກຕ່າງໆ. ບາງເທື່ອ ໄຟຟ້າ ແລະ ຖະຫນົນຫົນທາງທີ່ດີຂຶ້ນກໍ່ບໍ່ສຳຄັນເທົ່າກັບແຫລ່ງອາຫານ ແລະ ແຫລ່ງລາຍຮັບທີ່ຕ້ອງເສຍໄປ ຄືດັ່ງກໍລະນີບ້ານ ພູເຂົາແກ້ວ.

ນອກຈາກນັ້ນແລ້ວ, ໂຄງການພະລັງງານໄຟຟ້ານ້ຳຕົກຕ່າງໆສ່ວນໃຫຍ່ ແມ່ນຖືກສ້າງຂຶ້ນບົນພື້ນຖານຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ ທີ່ມີຢູ່ແລ້ວໃນສັງຄົມເຂດຊົນນະບົດ. ໃນຂະນະທີ່ແມ່ຍິງຫລາຍໆຄົນ ໄດ້ເລີ່ມມີສ່ວນຮ່ວມຫລາຍຂຶ້ນ ກັບຂັ້ນຕອນການກໍ່ສ້າງພະລັງງານໄຟຟ້ານ້ຳຕົກ, ໂດຍສະເພາະ ແມ່ນໂຄງການທີ່ດຳເນີນໂດຍຜູ້ຜະລິດໄຟຟ້າສາກົນຂະຫນາດໃຫຍ່, ແຕ່ແມ່ຍິງໂດຍລວມແລ້ວ ແມ່ນຍັງຄົງຕ້ອງກ້າວຕາມຫລັງ ແລະ ບໍ່ມີສິດເທົ່າທຽມກັບຜູ້ຊາຍ. ລາຍໄດ້ທີ່ເພີ່ມຂຶ້ນຂອງທັງຜົວ ແລະ ເມຍ ທີ່ໄດ້ຈາກການເຮັດວຽກໃຫ້ໂຄງການ ແລະ ການປູກພືດເປັນສິນຄ້າ ບໍ່ໄດ້ຫມາຍຄວາມວ່າ ຄວາມສະເຫມີ ພາບລະຫວ່າງຍິງ-ຊາຍ ຈະຕາມມາ. ບາງໂຄງການພະລັງງານໄຟຟ້ານ້ຳຕົກ ມັກບໍ່ຄຳນຶງເຖິງທັດສະນະຄະຕິ ທີ່ແຕກຕ່າງກັນລະຫວ່າງ ຜູ້ຍິງ ແລະ ຜູ້ຊາຍ. ຜູ້ຊາຍສ່ວນຫລາຍ ຈະຈູບຈ້າວຫ້າວຫັນຫລາຍກ່ວາແມ່ຍິງ ຕໍ່ກັບບັນຫາທີ່ກ່ຽວຂ້ອງກັບການພັດທະນາເຂື່ອນໄຟຟ້າ. ສ່ວນຫລາຍແມ່ຍິງແມ່ນບໍ່ໄດ້ຖືກເອີ້ນເຂົ້າຮ່ວມ ໃນການປະຊຸມ ຫລື ສົນທະນາ ກ່ຽວກັບ ບັນຫາ ທີ່ຈະກະທົບພວກເຂົາຄືກັນ. ນອກຈາກນັ້ນ, ວຽກງານຕ່າງໆ ທີ່ທາງໂຄງການພະລັງງານໄຟຟ້ານ້ຳຕົກ ສະຫນອງໃຫ້ກໍ່ແມ່ນວຽກທີ່ ໂດຍທຳມະຊາດແລ້ວ ແມ່ນໄດ້ເຈາະຈົງໃສ່ເພດໃດຫນຶ່ງ ແລະ ສ່ວນໃຫຍ່ກໍ່ແມ່ນຖືກແຈກຢາຍໃຫ້ເພດຊາຍເຮັດ. ທີ່ສຳຄັນ, ເຖິງວ່າດິນຈັດສັນໃນເຂດຈັດສັນໃຫມ່ ສາມາດຂຶ້ນທະບຽນຊື່ໂດຍໃສ່ຊື່ຂອງທັງຜົວ ແລະ ເມຍ, ອຳນາດການຕັດສິນຊີ້ຂາດແມ່ນຍັງຂຶ້ນກັບຊາວບ້ານ. ໃນລະບົບສັງຄົມ ແລະ ວັດທະນະທຳໃນ ປະຈຸບັນ, ແມ່ຍິງ, ໂດຍສະເພາະແມ່ນ ແມ່ຫມ້າຍ, ອາດຈະຍັງຢູ່ໃນທ່າເສຍປຽບໃນການຄອບຄອງກຳມະສິດ ທີ່ດິນ.

ໄຟຟ້າ ແລະ ສິ່ງອຳນວຍຄວາມສະດວກໃຫມ່ໆ ອາດເພີ່ມລາຍຮັບຂອງແມ່ຍິງໃນເຂດໂຄງການ ຜູ້ທີ່ສາມາດສວຍໃຊ້ໂອກາດທີ່ເຂົ້າມາ. ດັ່ງນັ້ນ, ລາຍຮັບທີ່ເພີ່ມຂຶ້ນ ອາດເພີ່ມຄວາມເປັນອິດສະຫລະ, ໂອກະລາດ ແລະ ສ້າງອຳນາດ ແລະ ຄວາມເຂັ້ມແຂງ ໃຫ້ພວກເຂົາ ເພື່ອໃຫ້ພວກເຂົາກ້າວໄປໃນອະນາຄົດ. ເຖິງຢ່າງໃດກໍ່ຕາມ, ວຽກຂອງແມ່ຍິງ ເບິ່ງຄືວ່າໄດ້ເພີ່ມຂຶ້ນເປັນສອງເທົ່າ ເພາະດຽວນີ້ພວກເຂົາມີແນວໂນ້ມ ທີ່ຈະຫາລາຍຮັບເສີມ ພາຍຫລັງ ທີ່ເສັດສິ້ນວຽກບ້ານງານເຮືອນ ແລະ ວຽກອື່ນໆ. ການສົ່ງເສີມ ລັດທິວັດຖຸນິຍົມໃນບັນດາບ້ານ ໃນເຂດໂຄງການ, ໃນມຸມມອງຫນຶ່ງອາດຈະມີຜົນສະທ້ອນອັນດີ ຕໍ່ກັບ ມາດຖານຂອງຊີວິດການເປັນຢູ່ ຂອງຊາວບ້ານ. ມັນບໍ່ເປັນການຜິດ ທີ່ແມ່ຍິງທຸກຍາກໃນເຂດ ຊົນນະບົດ ຈະຝັນຫາຊີວິດທີ່ສະດວກສະບາຍ. ແຕ່ວ່າ, ໃນທີ່ສຸດແລ້ວ ສິ່ງເຫລົ່ານັ້ນແມ່ນຈຸດມຸ່ງຫມາຍ ຂອງຄວາມສຸກຫລືບໍ່? ມັນຍັງມີຄວາມສຳຄັນທີ່ ປະຊາຊົນ ຕ້ອງໄດ້ຮັບການລາຍງານເພື່ອໃຫ້ຮູ້ວ່າ ລາຍຮັບຂອງຊາດທີ່ໄດ້ມາຈາກການສົ່ງອອກໄຟຟ້າ ຈະຖືກນຳໃຊ້ແນວໃດ ເພື່ອທີ່ຈະຫລຸດຜ່ອນຄວາມ ແຕກໂຕນກັນ ລະຫວ່າງຍິງ-ຊາຍ.

## ກ່ຽວກັບຜູ້ຂຽນ

ທ່ານ ນາງ ປ່າຟົ້ວລີ ລີຈື່ຟູງ (pafoua_lee@yahoo.com), ຈົບການສຶກສາດ້ານການພັດທະນາ ຈາກມະຫາວິທະຍາໄລ ນິວຄາດສເຊິນ (Univerity of Newcastle), ປະເທດ ອິດສະຕາລີ, ເປັນອະດີດນັກຄົ້ນຄ້ວາຂອງໂຄງການສ້າງຄວາມເຂັ້ມແຂງ ສຳລັບການສ້າງບົດລາຍງານການພັດທະນາມະນຸດແຫ່ງຊາດ ຊຶ່ງປະກອບສ່ວນເຂົ້າໃນການສ້າງບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫລັ້ມທີ 3, ປະຈຸບັນ ຜູ້ຂຽນກຳລັງເຮັດວຽກໃຫ້ໂຄງການ Lao/02/P05, ສົ່ງເສີມນະໂຍບາຍແຫ່ງຊາດ ດ້ານປະຊາກອນ ແລະ ການພັດທະນາ ແລະ ການເຊື່ອມປັດໄຈປະຊາກອນເຂົ້າໃນການວາງແຜນ ພັດທະນາ, ເຊິ່ງເປັນຫນຶ່ງໃນໂຄງການຂອງ UNFPA (ອົງການສະຫະປະຊາຊາດ ກອງທຶນສຳລັບ ປະຊາກອນ) ທີ່ຈັດຕັ້ງປະຕິບັດໂດຍ ຄະນະກຳມະການແຜນການ ແລະ ການລົງທຶນ

### ເອກະສານອ້າງອີງ

Asian Development Bank (ADB). 2004. *Scaling Up Poverty Reduction Potential of Infrastructure Projects: Lessons from the AsiaPacific Region*. Paper prepared for the Conference on ScalingUp Poverty Reduction, Shanghai, 2527 May 2004. Manila.

Maunsell Limited & Lahmeyer GmbH. 2004. *Power System Development Plan for Lao PDR*. Final Report prepared for Ministry of Industry and Handicraft and the World Bank. Vientiane.

Ministry of Industry and Handicrafts. 2004. *Statistics of Electricity Consumption in 2003*. Vientiane.

The Gender Resource Information and Development Centre. 2004. *A Country*

*Gender Analysis and Profile of Lao PDR*. Vientiane.

The World Dams Commission. 2002. "Chapter 4: People and Large Dams Social Performance" in *Dams and Development: A New Framework for DecisionMaking*. Earthscan Publications. UK/USA. Consulted at http://www.dams.org/report/contents.htm (07/07/2005)

## ເອກະສານເພີ່ມເຕີມ

ADB. 2002. *Project Performance Audit Report*: TheunHinboun Hydropower Project. Vientiane.

Foundation for Ecology Recovery. 2004. "Nam Theun 3: No Time for Another Mistake". *Watershed: People's Forum on Ecology*. No.1, Vol.10, JulyOct 2004. http://www.terraper.org/watershed/

Fozzard, A.. 2005. *Revenue and Expenditure Management: Nam Theun 2 Hydroelectric Project*. World Bank. Vientiane.

IRN. 1997. "The Asian Development Bank: Financing Destructive Development in the Greater Mekong Subregion". http://irn.org/programs/mekong/aviva.html (16/05/2005).

IRN and Environmental Defence. 2005 "Why Nam Theun 2 will Not Help the Poor in Laos". www.irg.org

Lao National Committee for Energy (LNCE). 2005. www.poweringprogress.org

MIH. 2004. *Statistics of Electricity Consumption in 2003*. Vientiane.

MIH. 2004. *Power Sector Strategy Study*. Vientiane.

Porter, M. & Situmeang, H. 2005. *Preparing for Electricity Trading in ASEAN*. Tasman Asia Pacific.

Sayboualaven, P., 2004 "Hydroelectric Dams and the Forgotten People of the Bolovens Plateau", www.irn.org

World Bank. 2005. *Nam Theun 2 Hydroelectric Project: Project Economic Analysis*. Vientiane.

# ແນວຄວາມຄິດຂອງປະຊາຊົນຜູ້ຢູ່ອາໄສ ຕໍ່ກັບຜົນກະທົບຂອງການພັດທະນາ ແຫລ່ງທ່ອງທ່ຽວ

ໂດຍ: ແສງເດືອນ ໄວຍະກອນ

*ຈຸດປະສົງຂອງການສຶກສານີ້ ແມ່ນເພື່ອຊອກຮູ້ເຖິງທັດສະນະຄະຕິຂອງປະຊາຊົນ ຕໍ່ກັບຜົນກະທົບ ທາງ ດ້ານວັດທະນະທຳ-ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ຂອງການພັດທະນາການ ທ່ອງທ່ຽວ. ກໍລະນີສຶກສາໄດ້ຖືກປະຕິບັດຢູ່ ເມືອງປາກອູ, ແຂວງຫລວງພະບາງ. ໄດ້ມີການລົງໄປຢ້ຽມຢາມ 4 ບ້ານ ທີ່ຕັ້ງຢູ່ຕາມລ່ອງ ແມ່ນ້ຳຂອງ ໃກ້ກັບ ຖ້ຳປາກອູ ອັນມີຊື່ສຽງ ແລະໄດ້ມີການສຳພາດປະຊາຊົນ 246 ຄົນ ທີ່ອາໄສຢູ່ໃນ 4 ບ້ານນັ້ນ. ການວິໄຈແບບນຳໃຊ້ຂໍ້ມູນສະຖິຕິ ເພື່ອຫຍໍ້ບັນດາຕົວປ່ຽນ ໃຫ້ເຫລືອພຽງປັດໄຈທີ່ສຳຄັນ (Factor Analysis) ໄດ້ຖືກນຳໃຊ້ເພື່ອສຶກສາຄວາມຄິດຂອງປະຊາຊົນ ຕໍ່ກັບຜົນກະທົບຂອງການ ທ່ອງທ່ຽວ. ໂດຍທົ່ວໄປແລ້ວ, ປະຊາຊົນທີ່ເຂົ້າຮ່ວມການສຶກສາ ມີແນວຄິດດ້ານບວກ ກ່ຽວກັບການທ່ອງທ່ຽວ, ເຊິ່ງມັນໄດ້ນຳມາເຊິ່ງ ຜົນປະໂຫຍດຫລາຍໆຢ່າງທາງດ້ານ ເສດຖະກິດ ແລະ ດ້ານໂຄງລ່າງພື້ນຖານ. ເຖິງຢ່າງໃດກໍ່ຕາມ, ເຂົາເຈົ້າບໍ່ມີຄວາມພຶງພໍໃຈກ່ຽວກັບຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ. ເຂົາເຈົ້າຮູ້ສຶກວ່າ ລັດຖະບານຄວນຄວບຄຸມການພັດທະນາທີ່ດິນ, ກິດຈະກຳທີ່ຜິດສິນທຳ ແລະ ລາຄາອາຫານທີ່ເພີ່ມຂຶ້ນ.*

ການພັດທະນາການທ່ອງທ່ຽວ ໂດຍປົກກະຕິແລ້ວ ແມ່ນເປັນທີ່ຍອມຮັບ ແລະ ມີ ຄວາມສົມເຫດ ສົມຜົນໂດຍອີງໃສ່ບົນພື້ນຖານເສດຖະກິດ, ແຕ່ມັນກໍ່ທ້າທາຍຕໍ່ການ ທຳລາຍສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ. ໃນສະຖານະການທີ່ການທ່ອງທ່ຽວໃນທົ່ວໂລກ ກຳລັງເຕີບໃຫຍ່ຂະຫຍາຍຕົວ, ການທີ່ນັກຄົ້ນຄ້ວາ ຈະສະຫນອງຮູບແບບສຳລັບການວາງແຜນດ້ານສິ່ງແວດລ້ອມ ເພື່ອໃຫ້ເຫມາະສົມກັບການທ່ອງທ່ຽວ ໄດ້ກາຍເປັນສິ່ງທີ່ສຳຄັນຂຶ້ນເລື້ອຍໆ. ການວິໄຈຜົນກະທົບຂອງການທ່ອງທ່ຽວແບບເປັນລະບົບ ສາມາດ ຊ່ວຍພາກສ່ວນການວາງແຜນຂອງ ລັດຖະບານ, ຜູ້ຕັດສິນທີ່ເປັນຄົນທ້ອງຖິ່ນ ແລະ ຜູ້ທີ່ໂຄສະ ນາສົ່ງເສີມການທ່ອງທ່ຽວ ໃນການບົ່ງຊີ້ເຖິງຂໍ້ກັງວົນ ແລະ ບັນຫາອັນແທ້ຈິງ ກ່ອນທີ່ຈະຄົ້ນຄິດຊອກຫານະໂຍບາຍ ແລະ ການປະຕິບັດທີ່ເຫມາະສົມ (Allen et al 1988; Belisle & Hoy, 1980; Maddox, 1985). ການສຶກສາກ່ຽວກັບ ຄວາມຄິດຂອງປະຊາຊົນທ້ອງຖິ່ນ ກ່ຽວກັບຜົນກະທົບຂອງການທ່ອງທ່ຽວ ແມ່ນເປັນປະໂຫຍດໃນການຈັດຕັ້ງ ແຜນງານ ເພື່ອເຮັດໃຫ້ຂໍ້ຂັດແຍ້ງລະຫວ່າງນັກທ່ອງທ່ຽວ ແລະ ປະຊາຊົນທີ່ອາໄສໃນທ້ອງຖິ່ນ ມີຫນ້ອຍທີ່ສຸດ ແລະ ກໍ່ເປັນປະໂຫຍດໃນການຊ່ວຍເຫລືອ ລັດຖະບານໃນການຊັກຊວນໃຫ້ປະຊາຊົນສະຫນັບ ສະຫນູນກິດຈະກຳ ຫລື ໂຄງການໃຫມ່ໆ ແລະ ຄວາມທ້າທາຍຂອງການທ່ອງທ່ຽວ (Belisle & Hoy, 1980).

ຄວາມຂັດແຍ້ງກັນລະຫວ່າງນັກທ່ອງທ່ຽວ ແລະ ປະຊາຊົນທີ່ອາໄສຢູ່ເຂດທ່ອງທ່ຽວ ອາດເກີດຂຶ້ນເລື້ອຍໆ ໃນໄລຍະລະດູການທ່ອງທ່ຽວທີ່ມີນັກທ່ອງທ່ຽວເຂົ້າມາຫລາຍ. ທ່ານ Sheldon ແລະ ທ່ານ Var (1984) ກ່າວວ່າ ນີ້ແມ່ນຍ້ອນ ການຈະລາຈອນຕິດຂັດ ແລະ ຄວາມແອອັດຂອງຄົນຢູ່ສະ ຖານທີ່ສາທາລະນະ

ທີ່ເພີ່ມຂຶ້ນ, ເຊິ່ງມັກຈະສ້າງຄວາມບໍ່ສະດວກໃຫ້ກັບປະຊາຊົນທີ່ອາໄສຢູ່ໃນທ້ອງຖິ່ນ. ທ່ານ Ahmad ແລະ ທ່ານ Armisha (1989) ກໍ່ໄດ້ບົດສະຫລຸບທີ່ຄ້າຍຄືກັນ ຈາກຜົນກະທົບຂອງ ຄວາມແອອັດຂອງຄົນ ແລະ ການຕິດຂັດດ້ານການສັນຈອນ ທີ່ມີຕໍ່ປະຊາຊົນທີ່ອາໄສຢູ່ ເກາະລັງກາວີ, ປະເທດມາເລເຊຍ. ເຖິງຢ່າງໃດ ກໍ່ຕາມ, ໂດຍສ່ວນໃຫຍ່ແລ້ວ ຜົນປະໂຫຍດ ທາງດ້ານເສດຖະກິດທີ່ໄດ້ຮັບຈາກອຸດສາຫະກຳ ການທ່ອງທ່ຽວ ໃນເກາະລັງກາວີ ແມ່ນຫລາຍກ່ວາຄວາມບໍ່ສະດວກສະບາຍຕ່າງໆ. ອຸດສາຫະກຳການທ່ອງທ່ຽວ ໄດ້ສະຫນອງ ໂອກາດ ການມີວຽກເຮັດງານທຳໃຫ້ແກ່ຄົນທ້ອງຖິ່ນ ແລະ ນີ້ອາດສົ່ງຜົນກະທົບໃສ່ຄວາມຄິດ ຂອງເຂົາເຈົ້າ ທີ່ມີ ຕໍ່ກັບອຸດສາຫະກຳການທ່ອງທ່ຽວ. ທ່ານ Pizam (1978) ໄດ້ບົ່ງຊີ້ວ່າ ຄວາມຄິດຂອງ ຄົນທ້ອງຖິ່ນ ແມ່ນຂຶ້ນກັບວ່າ ເຂົາເຈົ້າມີສ່ວນກ່ຽວຂ້ອງໂດຍກົງກັບກິດຈະກຳ ທີ່ກ່ຽວຂ້ອງກັບ ການທ່ອງທ່ຽວ ຫລື ບໍ່, ຖ້າຄົນທ້ອງຖິ່ນ ມີການເພິ່ງພາອາໄສການທ່ອງທ່ຽວຫລາຍເທົ່າໃດ ເຂົາເຈົ້າກໍ່ຈະມີ ທັດສະນະ ຄະຕິທາງ ດ້ານບວກຕໍ່ກັບກິດຈະກຳການທ່ອງທ່ຽວຫລາຍເທົ່ານັ້ນ.

ຈຸດປະສົງຂອງເອກະສານສະບັບນີ້ ແມ່ນເພື່ອຊອກຫາຄວາມຮູ້ສຶກຂອງປະຊາຊົນທີ່ ອາໄສຢູ່ຂອບເຂດ ຖ້ຳປາກອູ, ແຂວງຫລວງພະບາງ, ຕໍ່ກັບການພັດທະນາການທ່ອງທ່ຽວ. ປາກອູ ໄດ້ຖືກເລືອກຍ້ອນວ່າ ມັນໄດ້ກາຍເປັນຫນຶ່ງໃນແຫລ່ງທ່ອງທ່ຽວທີ່ມີຊື່ສຽງທີ່ສຸດໃນ ສປປ ລາວ, ເຊິ່ງໄດ້ຮັບຄວາມສົນໃຈຈາກ ທັງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ໃນປີ 2004 ຈຳນວນນັກທ່ອງທ່ຽວທີ່ເດີນທາງໄປ ຫລວງພະບາງ ແມ່ນ 105,513 ຄົນ ແລະ ນັກທ່ອງທ່ຽວສ່ວນໃຫ່ຍ ແມ່ນໄດ້ໄປທ່ອງທ່ຽວຖ້ຳແຫ່ງນີ້.

## ວິທີວິທະຍາ

### ການເກັບກຳຂໍ້ມູນ

ຂໍ້ມູນເບື້ອງຕົ້ນ ທີ່ຈຳເປັນສຳລັບການສຶກສານີ້ ໄດ້ຖືກລວບລວມໂດຍການເຮັດ ແບບສອບຖາມຜູ້ຢູ່ອາໄສ ໃນທ້ອງຖິ່ນ, ເຊິ່ງຫນ້າທີ່ດັ່ງກ່າວແມ່ນໄດ້ຖືກປະຕິບັດໂດຍນັກຄົ້ນ ຄ້ວາອາວຸໂສ 1 ທ່ານ, ຜູ້ຊ່ວຍຄົ້ນຄ້ວາ 3 ທ່ານ ແລະ ນັກສຶກສາ 6 ທ່ານ. ເພື່ອເຮັດໃຫ້ຂໍ້ມູນທີ່ໄດ້ຮັບມີຄວາມສົມບູນ, ນອກຈາກແບບສອບຖາມແລ້ວ ຍັງມີ ການສຳຫລວດເກັບກຳຂໍ້ມູນ ແລະສຳພາດແບບເປັນກັນເອງກັບບຸກຄົນທີ່ສຳຄັນໃນທ້ອງຖິ່ນ ນຳອີກ. ຂໍ້ມູນມືສອງ ທີ່ກ່ຽວຂ້ອງ ເຊັ່ນ: ຈຳນວນຄົວເຮືອນ ແລະ ຈຸດພິເສດທາງດ້ານ ເສດຖະກິດ-ສັງຄົມ ແມ່ນໄດ້ເກັບກຳຈາກ ທ່ານເຈົ້າເມືອງ ແລະ ນາຍ ບ້ານ ບວກກັບເອກະສານຕ່າງໆທີ່ໄດ້ຮັບການຕີພິມ.

ການສຳຫລວດ ແມ່ນໄດ້ຖືກປະຕິບັດໃນ 4 ຫມູ່ບ້ານ ທີ່ຢູ່ລຽບຕາມ ແມ່ນ້ຳຂອງ ຂຶ້ນໄປເຖິງຖ້ຳປາກອູ. ການສຳພາດ ແມ່ນປະຕິບັດຢູ່ໃນເຮືອນຂອງປະຊາຊົນ ໃນໄລຍະເວລາ 3 ອາທິດ, ໂດຍໃຊ້ແບບຟອມ ສອບຖາມ. ການສຳພາດ ແມ່ນການຖືກດຳເນີນໄປໂດຍການ ລົມກັນແບບເຊິ່ງ ຫນ້າ ລະຫວ່າງຜູ້ຖາມ ແລະ ຜູ້ຕອບ, ເພື່ອຫລຸດຜ່ອນການເຂົ້າໃຈຜິດຕໍ່ກັບຄຳຖາມ ແລະ ຄຳຄິດເຫັນຕ່າງໆ. ຄຳຄິດເຫັນ ແລະ ຄຳຖາມທຸກຂໍ້ໃນແບບສອບຖາມກ່ຽວກັບຜົນກະທົບຂອງ ການ ພັດທະນາແມ່ນ ອີງໃສ່ຂໍ້ມູນ ແລະ ເອກະສານ ທີ່ໄດ້ມາຈາກການສຶກສາທີ່ເຮັດ ຜ່ານມາໃນທ້ອງ ຖິ່ນອື່ນໆ. ຄຳຖາມ ຖືກຈັດເປັນ 4 ພາກໃຫຍ່. ພາກທຳອິດ ແມ່ນທັດສະນະຂອງປະຊາຊົນຕໍ່ກັບຜົນກະທົບຂອງການພັດທະນາການທ່ອງທ່ຽວ, ຕໍ່ມາກໍ່ແມ່ນ ການຊົມໃຊ້ຊັບພະຍາກອນທຳ ມະຊາດຂອງຜູ້ຢູ່ອາໄສ. ພາກສ່ວນທີສາມ ແມ່ນການປະເມີນ ຊັບພະຍາກອນເຫລົ່ານັ້ນ ໃນຂະນະທີ່ພາກທີສີ່ ໄດ້ເປີດໂອກາດໃຫ້ຜູ້ຖືກສຳພາດສະແດງ ຄຳຄິດ ຄຳເຫັນ

ຕໍ່ກັບ ການຈັດການ ການທ່ອງທ່ຽວໃນຮູບແບບໃຫມ່ ໂດຍຜ່ານ ຄຳຄິດເຫັນ ແລະ ຂໍ້ແນະນຳທີ່ ເປີດກວ້າງ. ພາກສຸດທ້າຍ ແມ່ນຄຳຖາມທີ່ຖືກສ້າງຂື້ນ ເພື່ອເກັບກຳເອົາຂໍ້ມູນກ່ຽວກັບ ສັງຄົມ-ສະຖິຕິ. ເອກະສານສະບັບນີ້ ພຽງແຕ່ສົນທະນາກ່ຽວກັບ ຄວາມຄິດຂອງປະຊາຊົນທີ່ອາໄສຢູ່ທ້ອງຖິ່ນ ຕໍ່ກັບຜົນ ກະທົບຂອງການພັດທະນາການທ່ອງທ່ຽວ.

ປະຊາຊົນ ໄດ້ຕອບຄຳຖາມກ່ຽວກັບຜົນກະທົບຂອງການພັດທະນາ ໂດຍໃຊ້ການປະເມີນຄ່າ ທີ່ມີ 4 ລະດັບຂັ້ນ ຂອງ ໄລເຄີຣດ (four-point Likert Scale), ເຊິ່ງລະດັບທີ 1 ຫມາຍເຖິງ ສະພາບທີ່ຮ້າຍ ແຮງທີ່ສຸດ ແລະ ລະດັບທີ 4 ແມ່ນບົ່ງບອກເຖິງການປັບປຸງທີ່ດີຂື້ນ. ການຕັດສິນໃຈ ໃນການນຳໃຊ້ການປະເມີນຄ່າຂອງ ໄລເຄີຣດ ແມ່ນອີງໃສ່ການສຶກສາອື່ນໆທີ່ຜ່ານມາ ທີ່ກ່ຽວກັບ ນັກທ່ອງທ່ຽວ ແລະ ທັດສະນະຄະຕິຂອງຄົນທ້ອງຖິ່ນ (Pizam, 1987; Wan Sabri, 1987; Suresh, 1993; and Wayakone, 1999). ມາດຖານການວັດແທກ ໄລເຄີຣດ ແມ່ນບໍ່ຫຍຸ້ງຍາກໃນການສ້າງ ໃນຂະນະທີ່ຄວາມຫນ້າເຊື່ອຖືຂອງມັນ ໃນການສຶກສາຕ່າງໆທີ່ເຄີຍເຮັດຜ່ານມາໃນອະດີດ ແມ່ນສູງ ຫລື ສູງກ່ວາ ວິທີອື່ນໆທີ່ຊັບຊ້ອນກ່ວານີ້ (Khadka, 1992). ການນຳໃຊ້ການປະເມີນຄ່າທີ່ມີລະດັບວັດແທກ 4 ຂັ້ນ ໄດ້ຊ່ວຍໃຫ້ຜູ້ຕອບຄຳຖາມ ສາມາດຕັດສິນ ແລະ ແຍກຄວາມແຕກຕ່າງລະຫວ່າງ ຄຳຕອບໄດ້ດີກ່ວາລະດັບວັດແທກ 2 ຫລື 3 ຂັ້ນ ແລະ ກໍ່ບໍ່ໄດ້ມີ ຄວາມແຕກຕ່າງກັນແບບລະອຽດຈົນເກີນໄປຈົນເຖິງຂັ້ນບໍ່ສົມເຫດສົມຜົນ (Hoffman, 1981). ຍັງມີການໂຕ້ຖຽງກັນວ່າ ການໃຊ້ ມາດຖານການວັດແທກທີ່ມີລະດັບວັດແທກ 5 ຂັ້ນ ອາດເຮັດໃຫ້ຜູ້ຕອບຄຳຖາມ ເກີດມີຄວາມລຳອຽງ ເລືອກເອົາແຕ່ຕົວເລືອກທາງກາງ ແລະ ຫລີກລ່ຽງການເລືອກເອົາຂັ້ນທີ 1 ຫລື ຂັ້ນທີ 5 ເພື່ອຢາກສະແດງຄວາມເປັນກາງ.

ເພື່ອທີ່ຈະຕັດສິນວ່າ ເນື້ອໃນໃຈຄວາມ ແລະ ຮູບແບບຂອງຄຳຖາມ ສາມາດເປັນ ທີ່ເຂົ້າໃຈ ໄດ້ງ່າຍໂດຍຜູ້ຕອບ, ແບບສອບຖາມ ແມ່ນໄດ້ຖືກທົດລອງ ໃຊ້ກ່ອນຢູ່ ບ້ານປາກອູ. ພາຍຫລັງການທົດລອງໃຊ້, ກໍ່ໄດ້ມີການປັບປ່ຽນ ໂດຍການ ຕັດ ແລະ ປ່ຽນແປງໂຄງສ້າງຂອງຄຳຖາມທີ່ບໍ່ມີເຫດຜົນ, ເຂົ້າໃຈຍາກ ແລະຮຽບຮຽງບໍ່ດີ. ການ ກວດກາເບິ່ງຄວາມຫນ້າເຊື່ອຖື ແມ່ນໃຊ້ການກວດກາ ອານຟາ ຂອງ ຄຣອນແບັດຈ (Cronbach's Alpha test). ສຳປະສິດ ອານຟາ ແມ່ນ 0.78, ເຊິ່ງບົ່ງບອກວ່າມາດຖານການວັດແທກດັ່ງກ່າວ ແມ່ນການ ວັດແທກຕົວປ່ຽນທີ່ຫນ້າເຊື່ອຖືໄດ້.

## ການວິເຄາະຂໍ້ມູນ

ການວິເຄາະແບບນຳໃຊ້ຂໍ້ມູນສະຖິຕິ ເພື່ອຫຍໍ້ບັນດາຕົວປ່ຽນ ໃຫ້ເຫລືອພຽງປັດໃຈທີ່ສຳຄັນ (Factor Analysis) ໄດ້ຖືກນຳໃຊ້ເພື່ອກຳນົດເອົາ ປັດໃຈໂຄງສ້າງ ທີ່ກ່ຽວເນື່ອງກັບພາກສ່ວນ ວັດທະນະທຳ-ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ຂອງການທ່ອງທ່ຽວ. ດັ່ງທີ່ ທ່ານ Sheldon ແລະ ທ່ານ Var (1984) ໄດ້ກ່າວໄວ້, ວິທີນີ້ ມີຄວາມອາດສາມາດທີ່ຈະ ກຳນົດເອົາ ປັດໃຈທີ່ເປັນຮາກຖານ ໃນບັນດາຂໍ້ມູນ ເຊິ່ງບໍ່ຄ່ອຍມີ ໃນພາກທິດສະດີ ຫລື ໃນມາດຖານການວັດແທກການພັດທະນາ. ວິທີນີ້ ເຮັດໃຫ້ນັກຄົ້ນຄ້ວາສາມາດ ຄັດຈ້ອນຂໍ້ມູນໃຫ້ ເຫລືອພຽງແຕ່ຮູບແບບ ຫລື ປັດໃຈທີ່ເປັນພື້ນຖານ, ເຊິ່ງສາມາດນຳໃຊ້ເພື່ອວິເຄາະຂໍ້ມູນອີກເທື່ອຫນຶ່ງ ອີງຕາມຄວາມສຳພັນກັນຂອງປັດໃຈເຫລົ່ານັ້ນ. ບັນດາປັດໃຈ ໄດ້ຖືກກຳນົດເອົາໂດຍການນຳໃຊ້ ລະດັບຂັ້ນ ຂອງຄ່າ eigen ໃນຮູບແບບຂອງສາຍພົວພັນ (correlation matrix).

## ລັກສະນະຂອງກຸ່ມຕົວແທນ

ຜູ້ຖືກສຳພາດທີ່ຖືກຄັດເລືອກເຂົ້າຮ່ວມການສຶກສາຄັ້ງນີ້ ແມ່ນຜູ້ທີ່ອາໄສຢູ່ຫມູ່ບ້ານ ໃນເມືອງປາກອູ ແລະ ເມືອງຈອມເພັດ. 60% ຂອງຄົວເຮືອນແມ່ນມາຈາກ ບ້ານ ປາກອູ ແລະ ບ້ານ ຊ່າງໄຫ ໃນເມືອງປາກອູ ແລະ 39% ມາຈາກ ບ້ານ ຖິ່ນໂຮງ ແລະ ບ້ານ ເມືອງແກ້ວ ໃນເມືອງຈອມເພັດ. ອາຍຸສະເລ່ຍຂອງຜູ້ທີ່ຖືກສຳພາດແມ່ນ 44.78 ປີ, ເຊິ່ງຜູ້ທີ່ມີອາຍຸຕ່ຳກ່ວາ 40 ປີ ກວມເອົາ 43.5% ຂອງກຸ່ມຕົວແທນ. ມີຫລາຍກ່ວາ 80% ຂອງຜູ້ເຂົ້າ ຮ່ວມແມ່ນໄດ້ແຕ່ງງານ ແລະ ມີຄອບຄົວແລ້ວ, 76.4% ແມ່ນຜູ້ຊາຍ ແລະ 23.6% ແມ່ນຜູ້ຍິງ, ແລະ ທຸກຄົນແມ່ນນັບຖືສາສະຫນາພຸດ (ຕາຕະລາງ 1).

ຕາຕະລາງ 1: ຂໍ້ມູນຂອງປະຊາຊົນທີ່ອາໄສຢູ່ທ້ອງຖິ່ນ (ຈຳນວນທັງຫມົດ 246 ຄົນ)

| ຂໍ້ມູນດ້ານສັງຄົມ ແລະ ສະຖິຕິ | | ຄວາມຖີ່ | ເປີເຊັນ |
|---|---|---|---|
| ບ້ານທີ່ໄດ້ທຳ<br>ການສຳຫລວດ | ບ້ານ ປາກອູ<br>ບ້ານ ຊ່າງໄຫ<br>ບ້ານ ຖິ່ນໂຮງ<br>ບ້ານ ເມືອງແກ້ວ | 58<br>91<br>67<br>30 | 23.6<br>37.0<br>27.2<br>12.2 |
| ສາສະຫນາ<br>ເພດ | ພຸດ<br>ຊາຍ<br>ຍິງ | 246<br>188<br>58 | 100<br>76.4<br>23.6 |
| ສະຖານະພາບ | ແຕ່ງງານແລ້ວ<br>ຍັງບໍ່ທັນແຕ່ງງານ | 217<br>29 | 88.2<br>11.8 |
| ອາຍຸ | 20-30<br>31-40<br>41-50<br>50 ຂຶ້ນໄປ | 43<br>64<br>57<br>82 | 17.5<br>26.0<br>23.2<br>33.3 |
| ສະພາບການຮູ້ຫນັງສື | ບໍ່ໄດ້ຮັບການສຶກສາ<br>ໄດ້ຮັບການສຶກສາແບບປະຊາສຶກສາ<br>ໄດ້ຮັບການສຶກສາແບບສາມັນສຶກສາ | 10<br>9<br>227 | 4.1<br>3.6<br>92.3 |
| ອາຊີບ<br><br><br><br>ອາຍຸສະເລ່ຍ<br>ລາຍຮັບສະເລ່ຍ | ກະສິກຳ/ລ້ຽງສັດ<br>ທຸລະກິດສ່ວນຕົວ<br>ລັດຖະກອນ<br>ພາກສ່ວນເອກະຊົນ | 204<br>22<br>15<br>5<br>44.78<br>11, 704, 209. 3 | 82.9<br>8.9<br>6.2<br>2.0<br>sd. = 14.35<br>sd.= 16,523,012.7 |

*ຫມາຍເຫດ: ລາຍຮັບສະເລ່ຍຄິດໄລ່ໃນສະກຸນເງິນລາວ (ກີບ)*

ກ່ອນທີ່ຈະມີການພັດທະນາການທ່ອງທ່ຽວ, ເກືອບທັງຫມົດຂອງປະຊາຊົນທີ່ອາໄສຢູ່ແຖບນັ້ນແມ່ນຫາລ້ຽງຊີບດ້ວຍການຫາປາ ແລະ ການປູກຝັງອື່ນໆ ແລະ ຮູບແບບອາຊີບ ຂອງເຂົາເຈົ້າກໍ່ແມ່ນເປັນໄປ ຕາມສະຖານະການທົ່ວໄປຂອງທ້ອງຖິ່ນ: 82.9% ຂອງຜູ້ທີ່ເຂົ້າຮ່ວມໃນການສຶກສາຍັງພົວພັນກັບການເຮັດ ການປູກຝັງ, ລ້ຽງສັດ ແລະ ຫາປາ; ມີພຽງແຕ່ 8.9% ທີ່ມີທຸລະກິດສ່ວນຕົວໃນຂະນະທີ່ 6.2% ເປັນລັດຖະກອນ. ລາຍໄດ້ສະ ເລ່ຍຂອງຄົວເຮືອນຂອງຜູ້ຖືກສໍາພາດແມ່ນ 11,704,209 ກີບຕໍ່ປີ (ປະມານ 1,107 ໂດລາ ອາເມລິກາ), ເຊິ່ງເປັນຕົວເລກທີ່ສູງກ່ວາເຂດຊົນນະບົດໃນຫລາຍໆເຂດ.

## ຜົນໄດ້ຮັບ ແລະ ການສົນທະນາ

ຕາຕະລາງ 2 ສະແດງໃຫ້ເຫັນວ່າ ຜົນໄດ້ຮັບຂອງ ການວິໄຈແບບນໍາໃຊ້ຂໍ້ມູນສະຖິຕິ ເພື່ອຫຍໍ້ບັນດາຕົວປ່ຽນ ໃຫ້ເຫລືອພຽງປັດໃຈທີ່ສໍາຄັນ ແມ່ນມາຈາກ ຄໍາຕອບຂອງປະຊາຊົນ ຕໍ່ກັບຄໍາຖາມກ່ຽວກັບຜົນກະທົບ ຂອງການພັດທະນາການທ່ອງ ທ່ຽວທີ່ມີໃນປະຈຸບັນ. ອີງໃສ່ຮູບແບບຂອງຄໍາຕອບ, ຄໍາຕອບທີ່ສະແດງ ໃຫ້ເຫັນເຖິງທັດສະ ນະຄະຕິຕໍ່ຜົນກະທົບຂອງການທ່ອງທ່ຽວ ໄດ້ຖືກຈັດເປັນກຸ່ມປັດໄຈ ທີ່ແຕກຕ່າງກັນ. ໂດຍ ການນິຍາມປັດໄຈເຫລົ່ານັ້ນດ້ວຍວິທີ ວາຣີແມັກສ ໂຣເທຊັນ (Varimax rotation method) ເຊິ່ງເປັນວິທີວິໄຈຂໍ້ມູນໃນການສໍາຫລວດດ້ານສັງຄົມເພື່ອຊອກຫາປັດໄຈ ໃນບັນດາຄໍາຕອບທີ່ຜູ້ເຂົ້າຮ່ວມ ໄດ້ຕອບມາ, ຕົວປ່ຽນ ໄດ້ຖືກຈັດກຸ່ມເປັນ 4 ປັດໄຈທີ່ມີຄ່າຕົວປ່ຽນ ຫລາຍກ່ວາ 1.0. ໃນ 36 ຄໍາຕອບ, 22 ຄໍາຕອບແມ່ນຖືກນອນ ຢູ່ໃນ 4 ປັດໄຈ. ປັດໄຈເຫລົ່ານີ້ ອະທິບາຍເຖິງ 49% ຂອງການປ່ຽນແປງໃນຊຸດຂໍ້ມູນ ໃນຂະນະທີ່ຄວາມສໍາຄັນຂອງປັດໄຈ ໃນລະດັບ 0.5 ໄດ້ຖືກນໍາໃຊ້. ພວກມັນໄດ້ສະແດງໃຫ້ເຫັນ ໂຄງສ້າງດັ່ງລຸ່ມນີ້.

## ປັດໄຈ 1: ເສດຖະກິດ ແລະ ສິ່ງອໍານວຍຄວາມສະດວກ

ປັດໄຈນີ້ກວມເອົາ 15.7% ຂອງການປ່ຽນແປງໃນຂໍ້ມູນ. ຕົວປ່ຽນໃນປັດໄຈສະແດງ ໃຫ້ເຫັນແນວຄິດດ້ານບວກ ຂອງປະຊາຊົນ ຕໍ່ກັບສິ່ງແວດລ້ອມ. ຜົນປະໂຫຍດດ້ານເສດຖະ ກິດຂອງການພັດທະນາການ ທ່ອງທ່ຽວ ແມ່ນໄດ້ມາຈາກທຸລະກິດຂອງຄອບຄົວ ເຊັ່ນ: ຮ້ານ ຂາຍອາຫານ, ການຂາຍເຄື່ອງຫັດຖະກໍາ ແລະ ການບໍລິການເຮືອໄປຖໍ້າປາກອູ. ຄົນທ້ອງຖິ່ນເຫັນວ່າ ອຸດສາຫະກໍາການທ່ອງທ່ຽວນັ້ນ ໄດ້ສະຫນອງ ຕະຫລາດສໍາລັບຈໍາຫນ່າຍເຄື່ອງ ຫັດຖະກໍາທີ່ຜະລິດໃນທ້ອງຖິ່ນ ແລະ ວັດຖຸດິບຕ່າງໆ. ການທ່ອງທ່ຽວ ຍັງຖືກເຊື່ອວ່າເປັນພາ ຫະນະທີ່ນໍາໄປສູ່ການເຕີບໃຫຍ່ຂະຫຍາຍຕົວຂອງເສດຖະກິດໃນອະນາຄົດ (ຕາຕະລາງ 2).

ຕາຕະລາງ 2: ການວິໄຈ ແນວຄິດຂອງປະຊາຊົນເຂດປາກອູ ກ່ຽວກັບຜົນກະທົບຂອງການທ່ອງທ່ຽວ ແບບນໍາໃຊ້ຂໍ້ມູນສະຖິຕິ ເພື່ອຫຍໍ້ບັນດາຕົວປ່ຽນ ໃຫ້ເຫລືອພຽງປັດໄຈທີ່ສໍາຄັນ

| ຕົວປ່ຽນ | ປັດໄຈສໍາຄັນທີ່ເຫຼືອ | | | | |
|---|---|---|---|---|---|
| | 1 | 2 | 3 | 4 | h2 |
| **ເສດຖະກິດ ແລະ ສິ່ງອໍານວຍຄວາມສະດວກ** | | | | | |
| ລາຍຮັບຄອບຄົວ | 0.775 | | | | 0.643 |
| ອຸດສາຫະກໍາ ຫັດຖະກໍາ | 0.755 | | | | 0.581 |
| ເສດຖະກິດໃນອະນາຄົດ (ມາດຖານ ການດໍາລົງຊີວິດ) | 0.737 | | | | 0.599 |
| ການມີວຽກເຮັດງານທໍາ | 0.723 | | | | 0.587 |
| ການສຶກສາໃນໂຮງຮຽນ | 0.702 | | | | 0.584 |
| ສິ່ງອໍານວຍຄວາມສະດວກດ້ານການແພດ | 0.675 | | | | 0.564 |
| ຕະຫລາດຈໍາໜ່າຍສິນຄ້າທ້ອງຖິ່ນ | 0.647 | | | | 0.426 |
| **ຜົນກະທົບດ້ານສິ່ງແວດລ້ອມ** | | | | | |
| ດິນເຊາະເຈື່ອນ | | 0.796 | | | 0.659 |
| ມົນລະພິດໃນແມ່ນໍ້າ ແລະ ຫ້ວຍ | | 0.754 | | | 0.613 |
| ການຖິ້ມຂີ້ເຫຍື້ອໃນບ້ານ | | 0.693 | | | 0.503 |
| ມົນລະພາວະທາງສຽງ | | 0.668 | | | 0.504 |
| ການເຊື່ອມໂຊມຂອງສິ່ງແວດລ້ອມ | | 0.597 | | | 0.405 |
| ຄວາມແອອັດ | | 0.593 | | | 0.500 |
| **ຜົນກະທົບດ້ານສັງຄົມ** | | | | | |
| ການກິນສຸລາ | | | 0.808 | | 0.738 |
| ການໃຊ້ຢາເສບຕິດ | | | 0.752 | | 0.669 |
| ຊາວໜຸ່ມຮຽນແບບການໃຊ້ຊີວິດຂອງຕ່າງປະເທດ | | | 0.715 | | 0.620 |
| ອັດຕາ ອາດຊະຍາກໍາ | | | 0.687 | | 0.611 |
| ບັນຫາໂສເພນີ | | | 0.563 | | 0.731 |
| **ລາຄາເຄື່ອງ ແລະ ການໃຊ້ຈ່າຍ** | | | | | |
| ການໃຊ້ຈ່າຍຂອງປະຊາຊົນໃນທ້ອງຖິ່ນ | | | | 0.755 | 0.677 |
| ລາຄາອາຫານ | | | | 0.689 | 0.636 |
| ລາຄາທີ່ດິນ | | | | 0.625 | 0.428 |
| **ມູນຄ່າການປ່ຽນແປງຂອງແຕ່ລະປັດໄຈ** | 5.664 | 5.240 | 4.556 | 2.241 | |
| **% ຂອງຕົວປ່ຽນ** | 15.733 | 14.557 | 12.655 | 6.224 | |
| **% ການເພີ່ມຂຶ້ນຈາກການສະສົມ ຫລື ຕົວປ່ຽນ** | 15.733 | 30.290 | 42.945 | 49.169 | |

*ໝາຍເຫດ: ມີແຕ່ຄ່າທີ່ສູງກ່ວາ 0.5 ຖືກລາຍງານ.        h2 = ຄ່າຕົວປ່ຽນທີ່ຄ້າຍຄືກັນໃນຄໍາຕອບ*

ປະຊາຊົນເຊື່ອວ່າ ການທ່ອງທ່ຽວໄດ້ຕອບສະໜອງເຄື່ອງອຳນວຍຄວາມສະດວກ ແລະ ສະຖານທີ່ພັກຜ່ອນຫລາຍຂື້ນ ແລະ ປັບປຸງຄຸນະພາບຊີວິດ ໂດຍສະເພາະ ໃນແງ່ຂອງເຄື່ອງອຳ ນວຍຄວາມສະດວກດ້ານການແພດທີ່ດີຂື້ນ, ເຄື່ອງອຳນວຍຄວາມສະດວກດ້ານການສຶກສາ ແລະ ໃນສະຖານທີ່ສາທາລະນະທີ່ດີຂື້ນ. ເຖິງຢ່າງໃດກໍ່ຕາມ, ເຂົາເຈົ້າບໍ່ພຶງພໍໃຈ ທີ່ເຂົາເຈົ້າ ທຸກຄົນຈະສາມາດໄດ້ໃຊ້ ແລະ ຊື່ນຊົມໂອກາດເຫລົ່ານີ້. ເຂົາເຈົ້າເຊື່ອວ່າ ເພື່ອທີ່ຈະໃຫ້ປະ ຊາຊົນໄດ້ຮັບຜົນປະໂຫຍດຢ່າງເຕັມສ່ວນ, ສິ່ງອຳນວຍຄວາມສະດວກຄວນຈະມີເພີ່ມຂື້ນ ແລະ ໄດ້ຮັບການພັດທະນາຕື່ມອີກ, ໂດຍສະເພາະ ແມ່ນການພັດທະນາຂອງ ບ້ານເມືອງແກ້ວ ເຊິ່ງບໍ່ມີການບໍລິການດ້ານການແພດ ແລະ ບໍ່ມີສິ່ງອຳນວຍຄວາມສະດວກດ້ານການສຶກສາ. ເຂົາເຈົ້າແນະນຳວ່າ ການພັດທະນາບໍ່ຄວນຖືກຈຳກັດຢູ່ໃນພຽງແຕ່ບາງສະຖານທີ່ເທົ່ານັ້ນ ແລະ ການພັດທະນາໃນ ເມືອງປາກອູ ຄວນໄດ້ຮັບການວາງແຜນຢ່າງ ລະມັດລະວັງ, ເພື່ອທີ່ ສະຖານທີ່ຕ່າງໆຈະຖືກສະຫງວນໄວ້ສຳລັບການຊົມໃຊ້ ແລະ ການຊື່ນຊົມ ຢ່າງເຕັມສ່ວນຂອງ ສາທາລະນະຊົນ.

## ປັດໄຈ 2: ຜົນກະທົບດ້ານສິ່ງແວດລ້ອມ

ຕົວປ່ຽນ 6 ຕົວທີ່ຖືກລວມຢູ່ໃນປັດໄຈນີ້ມີ ການເຊາະເຈື່ອນຂອງດິນ, ມົນລະພິດໃນ ແມ່ນ້ຳລຳເຊ ແລະ ຫ້ວຍ, ການຖິ້ມຂີ້ເຫຍື້ອໃນໝູ່ບ້ານ, ມົນລະພາວະທາງສຽງ, ການ ເຊື່ອມສະພາບຂອງສິ່ງແວດລ້ອມ ແລະ ຄວາມແອອັດ. ປັດໄຈນີ້ ກວມເອົາ 14.5% ຂອງ ການປ່ຽນແປງໃນຂໍ້ມູນ.

ເຖິງແມ່ນວ່າ ສະພາບແວດລ້ອມຂອງ ປາກອູ ໃນປະຈຸບັນ ສາມາດເວົ້າໄດ້ວ່າ ຍັງຢູ່ ໃນສະພາບດີ, ປະຊາຊົນທີ່ຢູ່ໃນທ້ອງຖິ່ນ ຍັງຄົງເປັນຫ່ວງຕໍ່ກັບ ອະນາຄົດຂອງການເຊາະ ເຈື່ອນຂອງຕາຝັ່ງແມ່ນ້ຳ ເຊິ່ງເກີດຈາກການດຳເນີນໄປຕາມທຳມະຊາດ ປະສົມກັບການພັດທະນາ ແລະ ການສັນຈອນໄປມາທີ່ເພີ່ມຂື້ນ ລຽບຕາມແຄມຝັ່ງແມ່ນ້ຳຂອງ. ມັນເປັນທີ່ຮູ້ສຶກວ່າ ການຈະລາຈອນຕາມຝັ່ງແມ່ນ້ຳຂອງຈະສືບຕໍ່ຂະຫຍາຍຕົວ ຍ້ອນການເພີ່ມຂື້ນຂອງນັກທ່ອງທ່ຽວ. ນີ້ອາດຈະນຳໄປສູ່ ການເພີ່ມຂື້ນຂອງການເຊາະເຈື່ອນຂອງແຄມຝັ່ງແມ່ນ້ຳ ແລະ ມົນລະພາວະທາງສຽງ ທີ່ມາຈາກການໃຊ້ເຮືອໄວ. ຄົວເຮືອນທີ່ຢູ່ຕາມແຄມຝັ່ງແມ່ນ້ຳ ແມ່ນບໍ່ມີລະບົບການຈັດການກັບສິ່ງເສດເຫລືອທີ່ຖືກຕ້ອງ. ດັ່ງນັ້ນ ສິ່ງເສດເຫລືອຂອງເສຍຂອງເຂົາເຈົ້າ ຈຶ່ງຖືກຖິ້ມໂດຍກົງລົງສູ່ແມ່ນ້ຳ ໂດຍປາສະຈາກການບຳບັດກ່ອນ. ໃນຂະນະທີ່ການທ່ອງທ່ຽວ ອາດສາມາດເພີ່ມມົນລະພິດ, ປະຊາຊົນທີ່ອາໄສຢູ່ ທ້ອງຖິ່ນເຊື່ອວ່າແຜນການໃນໄລຍະຍາວຂອງລັດຖະບານ ຈະຄວບ ຄຸມຜົນກະທົບທາງ ດ້ານສິ່ງແວດລ້ອມດັ່ງກ່າວ.

---

*ປະຊາຊົນໃນທ້ອງຖິ່ນຮູ້ສຶກວ່າ*
*ເມື່ອການມາຢ້ຽມຢາມຂອງນັກທ່ອງທ່ຽວເພີ່ມຂື້ນ,*
*ອາດຊະຍາກຳ, ການຕິດຢາເສບຕິດ ແລະ*
*ບັນຫາສັງຄົມອື່ນໆກໍ່ອາດເພີ່ມຂື້ນ*

---

ຍ້ອນຂະບວນການ ການກ້າວໄປສູ່ຄວາມທັນສະໄຫມກຳລັງສືບຕໍ່ໃນ ລາວ, ໃນຂະ ນະທີ່ປະຊາກອນເພີ່ມຂຶ້ນ, ການທ່ອງທ່ຽວ ແລະ ຂະແໜງການອື່ນໆກຳລັງພັດທະນາ, ສິ່ງແວດລ້ອມອາດໄດ້ຮັບຜົນກະທົບອັນບໍ່ພຶງປະສົງ ຖ້າບໍ່ໄດ້ຮັບການຕິດຕາມ ແລະ ຄວບຄຸມຢ່າງຈິງຈັງ. ດັ່ງນັ້ນ, ການດຳເນີນການ ການວາງແຜນທີ່ເຫມາະສົມຄວນຈະຖືກປະຕິບັດ ເພື່ອສ້າງການພັດທະດ້ານເສດຖະກິດທີ່ສົມສ່ວນ ແລະ ດຸ່ນດ່ຽງກັບການອະນຸລັກສິ່ງແວດລ້ອມ.

## ປັດໄຈ 3: ຜົນກະທົບດ້ານສັງຄົມ

ຕົວປ່ຽນໃນປັດໄຈນີ້ລວມມີ ການດື່ມສຸລາ, ການໃຊ້ຢາເສບຕິດ, ຄົນໄວໜຸ່ມລາວ ຮຽນແບບຮູບແບບການດຳລົງຊີວິດຂອງຕ່າງປະເທດ, ອາດຊະຍາກຳ ແລະ ບັນຫາໂສເພນີ. ມັນກວມເອົາ 12.6% ຂອງການປ່ຽນແປງໃນຂໍ້ມູນ. ເຖິງວ່າຜົນກະທົບດ້ານລົບຂອງ ສັງຄົມດັ່ງກ່າວຍັງບໍ່ທັນຮ້າຍແຮງ ໃນປະຈຸບັນ, ປະຊາຊົນໃນທ້ອງຖິ່ນຮູ້ສຶກວ່າ ອາດຊະຍາກຳ, ການຕິດຢາເສບຕິດ, ບັນຫາໂສເພນີ ແລະ ບັນຫາສັງຄົມອື່ນໆອາດເພີ່ມຂຶ້ນໃນອະນາຄົດອັນໃກ້ນີ້. ການມາຢ້ຽມຢາມຂອງນັກທ່ອງທ່ຽວທີ່ຫລາຍຂຶ້ນ ໂດຍປົກກະຕິແລ້ວແມ່ນ ເຊື່ອມໂຍງກັບການເພີ່ມຂຶ້ນຂອງກິດຈະກຳ ທີ່ທຳລາຍຄວາມເປັນລະບຽບຂອງສັງຄົມ ເຊັ່ນ: ອາດຊະຍາກຳ ແລະ ການ ໃຊ້ຢາເສບຕິດ (Belisle & Hoy, 1980). ເຖິງວ່າ ບາງກິດຈະກຳບໍ່ສາມາດຫລີກລ່ຽງໄດ້, ປະຊາຊົນໃນທ້ອງຖິ່ນຮູ້ສຶກວ່າ ອຳນາດການປົກຄອງ ຄວນສາມາດຄວບຄຸມ ການປະພຶດຂອງນັກທ່ອງທ່ຽວ ແລະ ກວດກາກິດຈະກຳທີ່ບໍ່ເຫມາະສົມ ຫລື ບໍ່ພຶງປະສົງ.

## ປັດໄຈ 4: ລາຄາເຄື່ອງ ແລະ ການໃຊ້ຈ່າຍ

ປັດໄຈສຸດທ້າຍກວມເອົາ 6.2% ຂອງການປ່ຽນແປງຂອງຂໍ້ມູນ ແລະ ມີບົດບາດອັນສຳຄັນ ໃນການກຳນົດທັດສະນະຄະຕິຂອງປະຊາຊົນ ຕໍ່ກັບສິ່ງແວດລ້ອມ. ປັດໄຈນີ້ ລວມມີ ບັນຫາຕ່າງໆທີ່ກ່ຽວຂ້ອງກັບການໃຊ້ຈ່າຍຂອງປະຊາຊົນທີ່ຢູ່ທ້ອງຖິ່ນ, ໂດຍສະເພາະແມ່ນ ລາຄາອາຫານທີ່ເພີ່ມຂຶ້ນຍ້ອນ ຄ່າເງິນຂອງສະກຸນເງິນຕ່າງປະເທດແມ່ນສູງກວ່າ ເງິນກີບຂອງລາວ, ນັກທ່ອງທ່ຽວ ສາມາດຊື້ເຄື່ອງສາທາລະນູປະໂພກທີ່ມີລາຄາເພີ່ມຂຶ້ນ ແລະ ກໍ່ ຂາດເຂີນໃນຂອບເຂດນັ້ນ. ໃນທາງກົງກັນຂ້າມ, ສະຖານະການນີ້ໄດ້ກໍ່ໃຫ້ເກີດການຖີບ ຕົວຂຶ້ນສູງຂອງລາຄາຕະຫລາດ. ປະກົດການນີ້, ບວກກັບຄວາມປາຖະໜາທີ່ເພີ່ມຂຶ້ນໃນການຄອບຄອງວັດຖຸສິ່ງຂອງຕ່າງໆຂອງປະຊາຊົນໃນທ້ອງຖິ່ນ, ສາມາດນຳໄປສູ່ການເພີ່ມຂຶ້ນຂອງການໃຊ້ຈ່າຍໃນຄົວເຮືອນ. ເປັນທີ່ເຫັນໄດ້ວ່າ ການເພີ່ມຂຶ້ນເປັນຈຳນວນຫລາຍ ຂອງຕົວເລກນັກທ່ອງທ່ຽວ ໄດ້ປ່ຽນແປງຄວາມຕ້ອງການດ້ານອາຫານໃນທ້ອງຖິ່ນຢ່າງຮຸນແຮງ; ດັ່ງນັ້ນ ລາຄາອາຫານກໍ່ເພີ່ມຂຶ້ນ.

ຜົນກະທົບດ້ານລົບຈາກການທ່ອງທ່ຽວ ຍັງສະແດງອອກດ້ານລາຄາທີ່ດິນ. ເມື່ອມີ ການເພີ່ມຂຶ້ນຂອງກິດຈະກຳການທ່ອງທ່ຽວ, ຄວາມຕ້ອງການດິນກໍ່ເພີ່ມຂຶ້ນ ເພື່ອພັດທະ ນາສິ່ງອຳນວຍຄວາມສະດວກຕ່າງໆ, ເຊິ່ງໂດຍປົກກະຕິແລ້ວ ແມ່ນນຳໄປສູ່ການເພີ່ມຂຶ້ນ ຂອງລາຄາທີ່ດິນໃນທົ່ວບໍລິເວນນັ້ນ.

## ສະຫລຸບ

ການພັດທະນາຂອງອຸດສາຫະກຳການທ່ອງທ່ຽວ ບໍ່ໄດ້ຂຶ້ນກັບນັກທ່ອງທ່ຽວພຽງແຕ່ຢ່າງດຽວ

ແຕ່ຕ້ອງອາໃສຄວາມເຕັມອົກເຕັມໃຈຂອງຊຸມຊົນທີ່ເປັນເຈົ້າຂອງສະຖານທີ່ ທີ່ ຈະຕ້ອນຮັບເອົານັກທ່ອງທ່ຽວນັ້ນດ້ວຍ. ແນວຄິດ ແລະ ທັດສະນະຄະຕິຂອງປະຊາຊົນທີ່ ເປັນເຈົ້າຂອງສະຖານທີ່ ແມ່ນຈຳເປັນໃນການສະໜັບສະໜູນ ການພັດທະນາຂອງອຸດສາຫະກຳນີ້. ການພັດທະນາຂອງອຸດສາຫະກຳນີ້ອາດຕິດຂັດ ຖ້າປະຊາຊົນທີ່ອາໄສຢູ່ທ້ອງຖິ່ນ ບໍ່ພໍໃຈ ກັບອຸດສາຫະກຳການທ່ອງທ່ຽວທີ່ຂະຫຍາຍຕົວຂຶ້ນເລື້ອຍໆ. ທ່ານ Mill ແລະ ທ່ານ Morison (1985) ອະທິບາຍວ່າ: 'ການຍອມຮັບການທ່ອງທ່ຽວ ບໍ່ສາມາດເພີ່ມທະວີຂຶ້ນໄດ້, ເວັ້ນແຕ່ວ່າ ຜົນປະໂຫຍດຂອງການທ່ອງທ່ຽວມີສ່ວນກ່ຽວຂ້ອງ ແລະ ສາມາດຮັບໃຊ້ສະມາຊິກໃນຊຸມຊົນ'.

ການສຶກສາກ່ຽວກັບແນວຄິດ ແລະ ທັດສະນະຄະຕິຂອງປະຊາຊົນໃນທ້ອງຖິ່ນ ອາດສະແດງເຖິງຄວາມແຕກຕ່າງກັນລະຫວ່າງ ຜົນກະທົບຕົວຈິງ ແລະ ຜົນກະທົບທີ່ຄາດຄິດວ່າຈະເກີດຂຶ້ນ. ຖ້າແນວຄິດຂອງປະຊາຊົນ ຕໍ່ກັບຜົນກະທົບແມ່ນເປັນໄປໃນທາງລົບ ເປັນສ່ວນໃຫຍ່ ຜູ້ວາງແຜນອາດຈະສາມາດກຳນົດເອົາແຜນງານແບບສະເພາະເຈາະຈົງ ທີ່ສາມາດຫລຸດ ຜ່ອນຂໍ້ຂັດແຍ້ງລະຫວ່າງນັກທ່ອງທ່ຽວ ແລະ ຜູ້ທີ່ອາໄສຢູ່ທ້ອງຖິ່ນ ແລະ ເປັນທີ່ສະໜັບ ສະໜູນໂດຍຜູ້ທີ່ອາໄສຢູ່ທ້ອງຖິ່ນນັ້ນເອງ.

ໂດຍລວມແລ້ວ ປະຊາຊົນທີ່ອາໄສຢູ່ຂອບເຂດ ປາກອູ ມີທັດສະນະຄະຕິທີ່ດີຕໍ່ກັບ ການພັດທະນາການທ່ອງທ່ຽວ ແລະ ຄວາມຄິດຫລາຍໆຢ່າງຂອງເຂົາເຈົ້າແມ່ນສະໜັບສະໜູນ ບົດສະຫລຸບນີ້. ຈາກການສຳຫລວດນີ້ ສາມາດສະຫລຸບໄດ້ວ່າ ປະຊາຊົນທ້ອງຖິ່ນເຊື່ອໝັ້ນວ່າ ການທ່ອງທ່ຽວຈະນຳມາເຊິ່ງການປ່ຽນແປງບາງຢ່າງທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ຂອງຖ້ຳປາກອູ. ເຂົາເຈົ້າຮູ້ສຶກວ່າ ການປ່ຽນແປງສ່ວນໃຫຍ່ທີ່ມາຈາກກິດຈະ ກຳກ່ຽວກັບການທ່ອງທ່ຽວ ຈະເປັນຜົນປະໂຫຍດແກ່ຊຸມຊົນຂອງເຂົາເຈົ້າ. ນອກຈາກນັ້ນ, ປະຊາຊົນໄດ້ໃຫ້ບູລິມະສິດຕໍ່ກັບບັນຫາຕ່າງໆ ທີ່ກ່ຽວຂ້ອງກັບທຸລະກິດ ເຊັ່ນ: ຮ້ານຂາຍອາຫານ, ເຄື່ອງຫັດຖະກຳ, ການບໍລິການທາງເຮືອ ແລະ ການມີສ່ວນຮ່ວມດ້ານວັດທະນະທຳເພື່ອ ການທ່ອງທ່ຽວ. ເປັນສິ່ງທີ່ສັງເກດເຫັນໄດ້ວ່າ ຜົນປະໂຫຍດເຫລົ່ານີ້ແມ່ນລວມຕົວກັນຢູ່ໃນບາງທ້ອງຖິ່ນເທົ່ານັ້ນ ໃນຂະນະທີ່ບ່ອນອື່ນໆທີ່ ຫ່າງໄກຈາກຈຸດສຸມຂອງການພັດທະນາ ໄດ້ຮັບຜົນກະທົບທາງດ້ານລົບຫລາຍກວ່າ. ຜູ້ທີ່ ອາໄສຢູ່ເຂດທີ່ດ້ອຍພັດທະນາກວ່າ, ຕ້ອງໄດ້ປະເຊີນໜ້າກັບ ຜົນກະທົບດ້ານລົບທີ່ເພີ່ມຂຶ້ນ ໂດຍ ປາສະຈາກການປັບປຸງດ້ານສິ່ງອຳນວຍຄວາມສະດວກ ແລະ ໂຄງລ່າງພື້ນຖານ. ເມື່ອການ ທ່ອງທ່ຽວເພີ່ມຂຶ້ນ, ປະຊາຊົນທີ່ອາໄສຢູ່ເຂດທ້ອງຖິ່ນມີຄວາມຢ້ານກົວຕໍ່ກັບບັນຫາໃນອະນາຄົດ ທີ່ອາດຈະເກີດຂຶ້ນ ບໍ່ວ່າຈະເປັນການເຊາະເຈື່ອນຂອງຝັ່ງນ້ຳ, ມົນລະພິດທາງນ້ຳ, ຄວາມແອອັດ ແລະ ອຸບັດຕິເຫດ ທາງເຮືອ/ທາງລົດ. ການມາຢ້ຽມຢາມຂອງນັກທ່ອງທ່ຽວທີ່ຫລາຍຂຶ້ນ ຍັງໄດ້ຖືກເຊື່ອມໂຍງກັບ ກິດຈະກຳທີ່ເປັນບັນຫາຕໍ່ສັງຄົມ ແລະ 'ຜິດສິນທຳ'. ສຳລັບປະຊາຊົນແລ້ວ, ການກິນເຫລົ້າ ແລະ ກິດຈະກຳທາງສັງຄົມ ທີ່ບໍ່ຖືກກັບຮີດຄອງປະເພນີຂອງລາວແມ່ນບັນຫາຂອງ ການທ່ອງທ່ຽວທີ່ປະຊາຊົນກັງວົນໃຈຫລາຍທີ່ສຸດ. ນີ້ສະແດງໃຫ້ເຫັນວ່າ ເຂົາເຈົ້າເປັນຫ່ວງຕໍ່ກັບຜົນກະທົບໃນອະນາຄົດ ແລະ ສາມາດຕັດສິນແນວຄິດຂອງເຂົາເຈົ້າ ໂດຍອີງໃສ່ຄວາມ ຕ້ອງການຂອງເຂົາເຈົ້າເອງ.

ການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງການທ່ອງທ່ຽວ ເປັນທີ່ຄາດໝາຍວ່າຈະ ປະກອບສ່ວນອັນໃຫຍ່ຫລວງຕໍ່ກັບການພັດທະນາ ເສດຖະກິດ-ສັງຄົມ ຂອງແຂວງ ຫລວງພະບາງ ແລະ ມັນກໍ່ສຳຄັນທີ່ຂະແໜງ

ການນີ້ ຈະວາງແຜນຢ່າງລະມັດລະວັງ ເພື່ອຮັບປະກັນວ່າ ຄວາມສວຍສົດງົດງາມ ແລະ ຄວາມເປັນເອກະລັກຂອງແຂວງ ຈະຍັງຄົງຖືກຮັກສາໄວ້ຢ່າງຕໍ່ເນື່ອງ. ຕ້ອງມີການຮັບຮູ້ວ່າ ລະບົບນິເວດວິທະຍາຂອງປະເທດໃນເຂດຮ້ອນ ແມ່ນບອບບາງ ແລະ ຄວາມກະຕືລືລົ້ນ ໃນການໂຄສະນາສົ່ງເສີມການທ່ອງທ່ຽວຕ້ອງດຸ່ນດ່ຽງກັບຄວາມ ເປັນຫ່ວງເປັນໃຍໃນການຈັດການຊັບພະຍາກອນທຳມະຊາດຂອງພວກເຮົາ. ມັນມີເສັ້ນບາງໆ ຂີດຂັ້ນຄວາມກ້ຳກຶ່ງກັນລະຫວ່າງການຊົມໃຊ້ແບບຍືນຍົງ ແລະ ການຊົມໃຊ້ແບບເກີນຂອບເຂດ ແລະ ຖ້າຊັບພະຍາກອນທຳມະຊາດ ໄດ້ຖືກຊົມໃຊ້ຢ່າງເກີນຂອບເຂດ ແລະ ເຊື່ອມໂຊມລົງລະບົບນິເວດວິທະຍາເອງກໍ່ຈະຖືກກະທົບໃນທີ່ສຸດ.

---

*ເຖິງວ່າ ທັດສະນະຄະຕິໃນປະຈຸບັນຂອງປະຊາຊົນທີ່ອາໄສຢູ່ທ້ອງຖິ່ນ*
*ເບິ່ງຄືກັບວ່າຈະພຶງພໍໃຈ ກັບການທ່ອງທ່ຽວ,*
*ແຕ່ມັນກໍ່ບໍ່ໄດ້ຮັບປະກັນວ່າ ຄວາມຮູ້ສຶກດັ່ງກ່າວຈະຖາວອນ.*

---

ການພັດທະນາຂອງການທ່ອງທ່ຽວໃນອະນາຄົດ ໃນແຂວງຫລວງພະບາງ ຈະຖືກ ຍອມຮັບໂດຍຄົນທ້ອງຖິ່ນ ຖ້າພວກເຂົາສ່ວນໃຫຍ່ຮູ້ສຶກວ່າ ທຸກໆຄົນຈະໄດ້ຮັບຜົນກະທົບ ເທົ່າທຽມກັນ. ໃນເວລາດຽວກັນ, ອຳນາດການປົກຄອງ ທີ່ມີໜ້າທີ່ຮັບຜິດຊອບຕໍ່ການພັດທະ ນາດັ່ງກ່າວ ຕ້ອງມີບົດບາດຫລາຍຂຶ້ນໃນການຕິດຕາມການເຕີບໃຫຍ່ຂອງການທ່ອງທ່ຽວ ເພື່ອເຮັດໃຫ້ມີຄວາມດຸ່ນດ່ຽງກັນລະຫວ່າງຜົນປະໂຫຍດ ແລະ ຜົນກະທົບດ້ານລົບ. ນັກທ່ອງທ່ຽວ ຕ້ອງສືບຕໍ່ໃນການເດີນທາງໄປສູ່ແຫລ່ງທ່ອງທ່ຽວດັ່ງກ່າວ ແຕ່ໃນເວລາດຽວກັນ ປະຊາຊົນທີ່ອາໄສຢູ່ໃນທ້ອງຖິ່ນ ຕ້ອງສາມາດຕັກຕວງເອົາຜົນປະໂຫຍດຈາກການຂະ ຫຍາຍຕົວຂອງການທ່ອງທ່ຽວ. ກິດຈະກຳກ່ຽວກັບການໂຄສະນາສົ່ງເສີມຄວນຈະຖືກຈັດ ຂຶ້ນໂດຍການຮ່ວມແຮງຮ່ວມໃຈກັນ ຂອງຫລາຍພາກສ່ວນ ໂດຍອີງໃສ່ຄວາມເປັນເອກະລັກຂອງແຂວງຫລວງພະບາງ ແລະ ຄວາມງົດງາມທາງທຳມະຊາດ ແລະ ວັດທະນະທຳອັນໂດດເດັ່ນ. ພ້ອມດຽວກັນນັ້ນ, ແຜນງານທີ່ຈະປັບປຸງການຜະລິດເຄື່ອງຫັດຖະກຳທ້ອງຖິ່ນ ກໍ່ຈະເພີ່ມຜົນປະໂຫຍດໃຫ້ກັບປະຊາຊົນທີ່ອາໄສຢູ່ທ້ອງຖິ່ນໂດຍກົງ. ການອະນຸລັກ ແລະ ການຮັກສາສິ່ງແວດລ້ອມຈະບໍ່ມີປະສິດທິພາບ ຖ້າຂາດການຈັດການ ການພັດທະນາ ທີ່ມີປະສິດຕິຜົນ. ການເພີ່ມຂຶ້ນແບບຫລາຍເທົ່າຂອງຕົວເລກນັກທ່ອງທ່ຽວ ມີຜົນກະທົບຕໍ່ ຊັບພະຍາກອນທຳມະຊາດ ແລະ ວິທີການທີ່ເໝາະສົມໃນການຊົມໃຊ້ຊັບພະຍາກອນທຳມະຊາດຕ້ອງຖືກນຳໃຊ້ ເພື່ອທີ່ຈະຫລຸດຜ່ອນມົນລະພິດ ໃຫ້ເຫລືອໜ້ອຍທີ່ສຸດ.

ລັດຖະບານມີບົດບາດສຳຄັນໃນການອອກກົດໝາຍ, ຕິດຕາມ, ຄຸ້ມຄອງ ແລະ ຊີ້ນຳການພັດທະນາໂດຍການ ຈັດຕັ້ງປະຕິບັດ ນະໂຍບາຍ ແລະ ກົດໝາຍວ່າດ້ວຍສິ່ງແວດລ້ອມ ຢ່າງເຂັ້ມງວດ. ການມີສະຖາບັນທີ່ເພີ່ມຂຶ້ນ ແມ່ນຈຳເປັນໃນການປະເຊີນກັບບັນຫາຕ່າງໆ ເຊັ່ນ: ມາດຖານດ້ານສິ່ງແວດລ້ອມຂອງການລະບາຍສິ່ງເສດເຫລືອ ໃນຂັ້ນທ້ອງຖິ່ນ. ຊຸມຊົນທ້ອງຖິ່ນ ແລະ ພາກເອກະຊົນຍັງມີໜ້າທີ່ໃນການຫລຸດຜ່ອນຜົນກະທົບທີ່ເປັນອັນຕະລາຍໃຫ້ເຫລືອໜ້ອຍທີ່ສຸດ ແລະ ຄວນປະສານງານກັບລັດຖະບານໃນການໂຄສະນາສົ່ງເສີມ ການທ່ອງທ່ຽວ ຄຽງຄູ່ໄປກັບການຊອກຫາ ແລະ

ແກ້ໄຂຂໍ້ຂັດແຍ້ງຕ່າງໆ. ການໂຄສະນາ ສ້າງຈິດສຳນຶກໃຫ້ຄົນທົ່ວໄປ ກໍ່ສຳຄັນໃນການທີ່ຈະເຮັດໃຫ້ຄວາມພະຍາຍາມທີ່ກ່າວ ມາຂ້າງເທິງນັ້ນ ປະສົບຜົນເປັນຈິງ.

ຖ້າການທ່ອງທ່ຽວ ແລະ ການພັກຜ່ອນຢູ່ນອກບ້ານ ຈະເຕີບໃຫຍ່ແບບຍືນຍົງໃນ ແຂວງຫລວງພະບາງ, ພວກມັນບໍ່ຄວນ ທີ່ຈະຖືກຖືເປັນສອງກິດຈະກຳທີ່ແຍກອອກຈາກກັນ. ການພັດທະນາຂອງໂຄງລ່າງພື້ນຖານຂອງຫມູ່ບ້ານ ແລະ ຊັບພະຍາກອນມະນຸດ ຕ້ອງບໍ່ ຖືກປະຖິ້ມໄວ້ທາງຫລັງ, ຖ້າບໍ່ດັ່ງນັ້ນ ຜົນປະໂຫຍດຈາກການຂະຫຍາຍຕົວຂອງເສດຖະກິດ ຈະບໍ່ຖືກແຈກຢາຍຢ່າງທົ່ວເຖິງ. ການພັດທະນາບ້ານຄວນສຸມໃສ່ຂະແຫນງການທີ່ມີ ສ່ວນພົວພັນໂດຍກົງກັບການທ່ອງທ່ຽວ. ຕົວຢ່າງ: ການປັບປຸງດ້ານກະສິກຳ, ໂດຍສະເພາະແມ່ນ ພືດເສດຖະກິດທີ່ສາມາດສົ່ງອອກສູ່ຕະຫລາດ ແລະ ຕອບສະຫນອງ ຄວາມຕ້ອງການຂອງຂະແຫນງການ ການທ່ອງທ່ຽວໃນອະນາຄົດໄດ້, ສາມາດເພີ່ມລາຍຮັບ ຂອງປະຊາຊົນ ທີ່ອາໄສຢູ່ທ້ອງຖິ່ນ. ຈິດສຳນຶກຂອງປະຊາຊົນ ແມ່ນເຄື່ອງມືອັນສຳຄັນ ໃນ ການຊ່ອຍຫລຸດ ຜ່ອນຜົນ ສະທ້ອນດ້ານລົບໃນຂົງເຂດການທ່ອງທ່ຽວ. ເພື່ອທີ່ຈະສະຫນັບສະຫນູນ ການໂຄສະນາ ລົນນະລົງດັ່ງກ່າວ, ອຳນາດການປົກຄອງ ຄວນສະຫນອງຄວາມຊ່ວຍ ເຫລືອດ້ານໂຄງລ່າງ ພື້ນຖານ ແລະ ເຕັກໂນໂລຊີ ເຊັ່ນ: ລະບົບກຳຈັດສິ່ງເສດເຫລືອ ທີ່ມີລາຄາຕ່ຳ ແລະ ສິ່ງຈູງໃຈໃນການນຳໃຊ້ ລະບົບດັ່ງກ່າວ. ຄວນມີຖັງຂີ້ເຫຍື້ອທີ່ພຽງພໍໃນສະຖານທີ່ສາທາລະນະ ແລະ ກໍ່ຄວນມີການເກັບຂີ້ເຫຍື້ອ ຈາກຖັງຂີ້ເຫຍື້ອ ຢ່າງເປັນປົກກະຕິ.

ເຖິງວ່າ ທັດສະນະຄະຕິໃນປະຈຸບັນຂອງປະຊາຊົນທີ່ອາໄສຢູ່ທ້ອງຖິ່ນ ເບິ່ງຄືກັບວ່າຈະພຶງພໍໃຈກັບການທ່ອງທ່ຽວ, ແຕ່ມັນກໍ່ບໍ່ໄດ້ຮັບປະກັນວ່າ ຄວາມຮູ້ສຶກດັ່ງກ່າວຈະຖາວອນ. ທັດສະນະຄະຕິ ແລະແນວຄິດ ມີການປ່ຽນແປງ ອີງຕາມສະຖານະການທີ່ປ່ຽນແປງ; ດັ່ງນັ້ນ ມັນສຳຄັນ ທີ່ຈະສືບຕໍ່ໃນການຕິດຕາມເບິ່ງ ທັດສະນະຄະຕິຂອງປະຊາຊົນ. ການຄົ້ນຄ້ວາໃນອະນາຄົດ ກ່ຽວກັບຄຸນຄ່າຂອງການທ່ອງທ່ຽວໃນຫລວງພະບາງ ແລະ ຂີດຄວາມສາມາດໃນການ ຮອງຮັບນັກທ່ອງທ່ຽວຂອງຂອບເຂດນັ້ນ ແມ່ນສຳຄັນ, ແລະ ໃນເວລາດຽວກັນ ຍຸດທະສາດ ການໂຄສະນາ ແລະ ກິດຈະກຳການສົ່ງເສີມ ຄວນຖືກຈັດຂຶ້ນເພື່ອຮັບປະກັນການຊົມໃຊ້ ສະຖານທີ່ພັກຜ່ອນໃນອະນາຄົດທີ່ເຫມາະສົມ. ຜູ້ບໍລິຫານ, ຜູ້ວາງແຜນ ແລະອຳ ນາດການປົກຄອງທີ່ກ່ຽວຂ້ອງກັບການທ່ອງທ່ຽວ ຈະໄດ້ຮັບຜົນປະໂຫຍດຈາກການຄົ້ນຄ້ວາ ປະເພດນີ້. ມັນເປັນທີ່ຈະແຈ້ງວ່າ ຖ້າການສຶກສາກ່ຽວກັບຜົນກະທົບຖືກຈັດຕັ້ງຂຶ້ນ, ການສຳຫລວດ ໂດຍມີກຸ່ມເປົ້າຫມາຍຈາກຫລາຍສາຂາອາຊີບ ຫລື ຂະແຫນງການທີ່ແຕກຕ່າງກັນ (Davis, Allen and Cosenz, 1998) ສາມາດຖືກນຳໃຊ້ ເພື່ອທີ່ຈະບົ່ງບອກເຖິງລັກສະນະຂອງປະຊາຊົນຜູ້ທີ່ບໍ່ສະຫນັບ ສະຫນູນການທ່ອງທ່ຽວ. ທ່ານ Ayers ແລະ ທ່ານ Potter (1989) ກ່າວວ່າ ອຳນາດການປົກຄອງ ໃຫ້ຄວາມສົນໃຈຕໍ່ສິ່ງທີ່ປະຊາຊົນກັງວົນໃຈຫລາຍເທົ່າໃດ, ພວກເຂົາກໍ່ຈະໄດ້ຮັບການ ສະຫນັບສະຫນູນ ໃນການພັດທະນາຊຸມຊົນຫລາຍເທົ່ານັ້ນ. ແຜນງານ ການສຶກສາ, ການປະຊຸມກັບປະຊາຊົນ ແລະ ການປະຊຸມທາງວິຊາການສາມາດຈັດຂຶ້ນ ເພື່ອຊ່ວຍໃຫ້ປະຊາຊົນທີ່ອາໄສຢູ່ໃນທ້ອງຖິ່ນ ເຂົ້າໃຈເຖິງອຸດສາຫະກຳການທ່ອງທ່ຽວ ແລະຜົນກະທົບຂອງມັນ. ຜູ້ໂຄສະນາສົ່ງເສີມການທ່ອງທ່ຽວ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງຕ້ອງຮັບຮູ້ເຖິງຜົນກະທົບເຫລົ່ານີ້ ແລະ ກໍ່ຕ້ອງມີຄວາມພະຍາຍາມສູງສຸດ ໃນການຮັກສາການ ໃຫ້ບໍລິການສາທາລະນະ, ຮັກສາສິ່ງແວດລ້ອມ ແລະ ສ້າງໂອກາດໃຫ້ ປະຊາຊົນມີສ່ວນຮ່ວມ ໃນຂະນະທີ່ຍັງຄົງໄວ້ເຊິ່ງຄວາມສະຫນິດສະຫນົມ ແລະ ຄວາມໄວ້ ເນື້ອເຊື່ອໃຈກັນ ແລະ ອຳນາດໃນການຄວບຄຸມ, ເຖິງວ່າຈະຢູ່ໃນໄລຍະເວລາທີ່ກິດຈະກຳການທ່ອງ ທ່ຽວ ກຳລັງເພີ່ມຂຶ້ນກໍ່ຕາມ.

## ກ່ຽວກັບຜູ້ຂຽນ

ທ່ານ ຮສຈ. ດຣ. ແສງເດືອນ ໄວຍະກອນ (s_wayakone@yahoo.com) ເປັນຮອງຄະນະບໍດີ ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດ. ຜູ້ຂຽນປະສົງຢາກສະແດງຄວາມຊື່ນຊົມ ແລະ ຂອບອົກຂອບໃຈ ອົງການຕ່າງໆຄື: ສູນປົກປັກຮັກສາຊີວະນາໆພັນເຂດພາກພື້ນອາຊີອາຄະເນ, ສະຫະພັນ ເອີຣົບ, ຄະນະປ່າໄມ້, ອຳນາດການປົກຄອງແຂວງຫລວງພະບາງ, ຫ້ອງການການທ່ອງທ່ຽວ ແຂວງຫລວງພະບາງ ແລະ ພະແນກປ່າໄມ້ແຂວງ ສຳລັບ ການການສະໜັບສະໜູນອັນມີຄຸນຄ່າ ທີ່ມີຕໍ່ກັບການຄົ້ນຄ້ວາສຶກສານີ້.

## ເອກະສານອ້າງອີງ

Ahmad, S. & Armishah, S. 1989. *Impacts of Tourism Development in Langkawi Island: Perception Benefits.* Department of Natural Resources Economics, Faculty of Eco nomic and Management, Universiti Pertanian Malaysia. Staff Paper No. 2/89.

Allen, L.R., Long, P.T., Perdue, R.R. & Kieselback, S. 1988. "The Impacts of Tourism Development on Resident Perceptions of Community Life". *Journal of Travel Research.* 27 (1): 1621.

Ayers, J.S. & Potter, H.R. 1988. "Attitudes towards Community Change: A Comparison between Rural Leaders and Residents". J*ournal of the Community Development Society*. 20(1):118.

Belisle, F.J. & Hoy, D.R. 1980. "The Perceived Impacts of Tourism by Residents: A Case Study in Santa Marta, Columbia". *Annuals of Tourism Research.* 27:83101.

Davis, D., Allen, J. & Cosenza, R.M. 1988. "Segmenting Local Residents by Their Atti tudes, Interests and Opinions towards Tourism". *Journal of Travel Research.* 27(2):28.

Hoffman, N.H.J. 1981. "A Sociological Approach Toward a General Theory in Migra tion". In Kirtz, M.M. & Kelly, C. B. (eds.): *Global Trend in Migration. PrenticeHall Inc.* New York.

Khadka, S. S. 1992. *Collective Participation of Water Users in Irrigation Management:*

*A Case from Nepal.* Ph.D. Dissertation, Faculty of Forestry, Universiti Pertanian Malaysia.

Maddox, R.N. 1985. “Measuring Satisfaction with Tourism”. *Journal of Tourism Re search.* 23(3):25.

Pizam, A. 1978. “Tourism's Impacts: The Social Costs to the Destination Community as Perceived by Its Residents”. *Journal of Travel Research.*16(4): 812.

Sengdeuane, W. 1996. *Perception of the Impacts of Nature Tourism Development and Planning in Dong Hua Sao Protected Area, Laos.* M.Sc. Dissertation, Faculty of Forestry, Universiti Putra, Malaysia.

Sheldon, P.J. & Var, T. 1984. “Resident Attitudes to Tourism in North Wales”. *Tourism Management.* 5(1):4047.

Suresh, K. S. 1993. *Trekking Use Pattern, Users' Perception and Attitudes of Residents towards Trekking Tourism in the Annapurna Sanctuary Trail, Nepal.* M.Sc. Dissertation, Faculty of Forestry, Universiti Pertanian Malaysia.

Wan Sabri Wan Mansor. 1987. *Forest Recreation Use Pattern, User Behaviour and Recreation Value in Malaysia.* Ph.D. Dissertation, University of Wales.

Parott, N. & Marsden, T. 2002. *The Real Green Revolution*. Greenpeace. London.

Scialabba, N. & Aubert, A. 1998. *Report of FAO / IFOAM Meeting on Organic Agriculture*. FAO. Rome.

State Planning Committee. 2004. *National Growth and Poverty Eradication Strategy*. Vientiane.

State Planning Committee. 2002. *Participatory Poverty Assessment Lao People’s Democratic Republic*. SPC/ Asian Development Bank / National Statistics Centre. Vientiane.

Thrupp, L.A. 1996. *New Partnership for Sustainable Agriculture*. World Resources Institute. Washington D.C.

UNDP. 2004. *Lao Progress towards the Millennium Development Goals*. Vientiane.

Wan Sabri Wan Mansor. 1987. *Forest Recreation Use Pattern, User Behaviour and Recreation Value in Malaysia*. Ph.D. Dissertation, University of Wales.

Willer, H. & Yusseji, M. (Eds). 2005. “The World of Organic Agriculture”. *Statistics and Emerging Trends.* IFOAM. Bonn.

# ວາລະສານການພັດທະນາຂອງລາວ

## ການປະກອບສ່ວນທີ່ຕ້ອງການ

ທີມງານອົງການສະຫະປະຊາຊາດ ສ.ປ.ປ.ລາວໃຫ້ການສະໜັບສະໜູນການສ້າງວາລະສານກ່ຽວກັບການພັດທະນາທີ່ເອີ້ນວ່າຈຸດປະກາຍ, ຊຶ່ງມີຫົວຂໍ້ວ່າ ທັດສະນະຕໍ່ການພັດທະນາຂອງ ສ.ປ.ປ.ລາວ. ຈຸດປະກາຍມີເປົ້າໝາຍເພື່ອກະຕຸກຊຸກຍູ້ໃຫ້ມີການສົນທະນາໃນທຸກບັນຫາທີ່ພົວພັນເຖິງການພັດທະນາໃນ ສ.ປ.ປ.ລາວ. ວາລະສານດັ່ງກ່າວນີ້ຈະກະຈາຍຄວາມຮູ້ ແລະ ໃຊ້ເປັນເວທີເພື່ອໂອ້ລົມສົນທະນາ ແລະ ແລກປ່ຽນການຄົ້ນຄວ້າວິເຄາະແບບເລິກເຊິ່ງ, ໃນຂະນະດຽວກັນກໍ່ເປັນການສົ່ງເສີມເປົ້າໝາຍ ແລະ ພັນທະຕາມເນື້ອໃນຖະແຫຼງການສະຫັດສະວັດ.

ວາລະສານທີ່ຈະຈັດພິມຂຶ້ນສາມເທື່ອຕໍ່ປີນີ້ກໍາລັງຊອກຫາການປະກອບສ່ວນທາງດ້ານວຽກການຂຽນຈາກຊຸມຊົນທີ່ມີສ່ວນກ່ຽວຂ້ອງກັບການພັດທະນາ, ລວມທັງນັກພັດທະນາພາຍໃນແລະຈາກສາກົນ, ພະນັກງານລັດ, ພະນັກງານຈາກອົງການຮ່ວມມືສອງຝ່າຍແລະຫຼາຍຝ່າຍຕ່າງໆ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ, ນັກຂ່າວ, ນັກວິຊາການ, ນັກຄົ້ນຄວ້າ ຫຼື ຜູ້ໃດກໍ່ຕາມທີ່ມີຜົນປະໂຫຍດໃນ ສປປລາວ. ວາລະສານດັ່ງກ່າວນີ້ຈະຖືກຂຽນເປັນພາສາລາວ ແລະ ພາສາອັງກິດ ແລະ ສາມາດຫາອ່ານໄດ້ໃນຮູບແບບພິມ ແລະ ຂໍ້ມູນທາງລະບົບອອນລາຍນ໌.

ອົງການ ສະຫະປະຊາຊາດໃນ ສປປລາວ ເຫັນວ່າມັນແມ່ນໂອກາດອັນດີສໍາລັບນັກເຄື່ອນໄຫວການພັດທະນາ ແລະອົງການຈັດຕັ້ງຕ່າງໆທີ່ຢາກເຜີຍແຜ່ບົດລາຍງານ, ການຄົ້ນຄວ້າສຶກສາ ແລະ ຄວາມຄິດເຫັນຕໍ່ແງ່ມຸມໃດໜຶ່ງ ຂອງຫົວຂໍ້ການພັດທະນາປະເທດນີ້. ເອກະສານທັງໝົດທີ່ສົ່ງມາສະເໜີເພື່ອຮັບການພິຈາລະນາ ຈາກຄະນະກໍາມະການຮຽບຮຽງນັ້ນ ຄວນຈະເປັນພາສາອັງກິດ ຫຼື ພາສາລາວ. ບົດຄວາມບໍ່ຄວນຈະຍາວເກີນແປດໜ້າເຈ້ຍ A4. ເອກະສານຕົ້ນສະບັບຄວນມີບົດສະຫຼຸບສັ້ນໆ(100 ຫາ 120ຄໍາ) ຂອງບັນຫາທີ່ສະເໜີ, ການຄົ້ນພົບທີ່ສໍາຄັນທີ່ສຸດ ແລະ ບັນຊີລາຍຊື່ຂອງເອກະສານອ້າງອີງທີ່ເໝາະສົມ. ສໍາລັບບົດແນະນໍາສະບັບສົມບູນຄົບຖ້ວນຂອງຈຸດປະກາຍ,ສົ່ງອີເມລມາໄດ້ທີ່ **laodevelopment.journal@undp.org** ຫຼືສົ່ງຈົດໝາຍໄປທີ່ກອງເລຂາ, ຈຸດປະກາຍ c/o UNDP, ຕູ້ໄປສະນີ 345, ວຽງຈັນ, ສ.ປ.ປ.ລາວ.

ຄະນະກໍາມະການຮຽບຮຽງ ຈະຮັບຮອງເອົາຕົ້ນສະບັບໃນຄວາມເຂົ້າໃຈ ທີ່ວ່າພວກມັນຈະໄດ້ຮັບການທົບທວນ. ຜູ້ປະກອບສ່ວນຄວນຈະແຈ້ງ ໃຫ້ຮູ້ວ່າເອກະສານທີ່ສົ່ງມາໃຫ້ນັ້ນ ເຄີຍໄດ້ຮັບການພິມເຜີຍແຜ່ ຫຼື ສົ່ງໄປເພື່ອພິມເຜີຍແຜ່ບ່ອນອື່ນມາກ່ອນຫຼືບໍ່.

**The Secretariat**
**Juth Pakai, c/o UNDP**
**PO Box 345**
**Vientiane**
**Lao PDR**
**Tel. +(856 21) 213390-97**
**e-mail: laodevelopment.journal@undp.org**